ພຼະຣາຊປຼະວັຕິ ວົງສ໌ວັງໜ້າ
ຣາຊຕຼະກູລ
ເຈົ້າອຸປຣາຊ ອຸ່ນແກ້ວ

ໂດຍ

ເຈົ້າຄຳໝັ້ນ ວົງກົຕ-ຣັຕນະ
ເຈົ້າເມືອງບຳເຫນັຈ

ພິມແຈກ ໃນງານສຼອງ ອາຍຸຄົບ ໖໐
ເຈົ້າສົມສນິທ ຄຳໝັ້ນ ວົງກົຕ-ຣັຕນະ
ເຈົ້າເມືອງ

ເປັນຜູ້ຈັດການ ພິມພ໌

ຣ. ອ. ຕ. ເລື່ອນ ວິໄລ໌ຫົງສ໌
ຜູ້ຂຽນສຳເນົາ

ທີດພຸ

ໃຫ້ມະຫາສີລາ ເພື່ອນຮ່ວມຣາຊການພາທະບັ
ກິຕສະພາ ດວຍມິດຕ່າງອ່ນ ໄວ້ເປັນທີ່ຣະລຶກ.

ພຼະຣາຊປຼະວັຕິ ວົງສ໌ວັງໜ້າ

ຣາຊຕຼະກູລ

ເຈົ້າອຸປຣາຊ ອຸ່ນແກ້ວ

ໂດຍ

ເຈົ້າຄຳໝັ້ນ ວົງກົຕຣັຕນະ
ເຈົ້າເມືອງບຳເໜັຈ
ພິມແຈກໃນງານສລອງອາຍຸຄົບ ໗໐ ປີ.

ເຈົ້າສິນສມິຫາ ຄຳໝັ້ນ ວົງກົຕຣັຕນະ
ເຈົ້າເມືອງ
ເປັນຜູ້ຈັດຄັດກາຣພິມພ໌

ຣ.ອ.ຕ. ເລື່ອນ ວິໄລຫົງສ໌
ເປັນຜູ້ຂຽນສຳເນົາ ໄປລົງພິມພ໌

ພ.ສ. ໒໔໙໒

1970
21
1949

2513
2492
21

ສາຣະບານ

ຄຳນຳ . . . . ໜ້າ ໗
ປຼະວັຕິເຈົ້າອຸປຣາຊອຸ່ນແກ້ວ ໙
ລຳດັບສກຸລເຈົ້າອຸປຣາຊອຸ່ນແກ້ວ ໑໓
ພຼະຮູປເຈົ້າອຸປຣາຊເຈົ້າສຸວັຓຓະພຼິຫມາ . . ໒໑
ປຼະວັຕິເຈົ້າອຸປຣາຊສຸວັຓຓະພຼິຫມາ . . . ໒໓
ຮູປຖ່າຍເຈົ້າອຸປຣາຊສຸວັຓຓະພຼິຫມາ . . ໓໑
ລຳດັບສກຸລເຈົ້າອຸປຣາຊສຸວັຓຓະພຼິຫມາ . ໓໓
ພຼະຮູປເຈົ້າມະຫາອຸປຣາຊບຸນຄົງ ໕໑
ປຼະວັຕິເຈົ້າມະຫາອຸປຣາຊບຸນຄົງ ໕໓
ຮູປຖ່າຍເຈົ້າມະຫາອຸປຣາຊບຸນຄົງ . . . ໖໕
ລຳດັບສກຸລເຈົ້າມະຫາອຸປຣາຊບຸນຄົງ . . ໖໗
ຄຳກຼອນຊວນອ່ານພຼະຣາຊປຼະວັຕິນີ້ . . . ໗໗

ຄຳນຳ

ໜັງສືພຼະຣາຊປຼະວັຕິ ລາຊຕຼະກູລວົງສ໌ວັງໜ້າເຫຼັ້ມນີ້ ຂ້າພະເຈົ້າໄດ້ພະຍາຍາມຄົ້ນຄວ້າເສາະສືບຫາ ຕັ້ງແຕ່ເຈົ້າອຸປຮາຊອຸ່ນແກ້ວອົງຄ໌ເປັນວົງສະກອນແລະພໍ່ເຖົ້າໝ່ອນຂອງຂ້າພະເຈົ້າມາຮວບຮວມໄວ້ ເພື່ອຈະໄດ້ເຜີຍແຜ່ກຽຕິຍົສຂອງເຈົ້ານາຍໃນວົງສ໌ຕຼະກູລນີ້ ແລະຮວບຮວມລຳດັບຊັ້ນຍາຕິ ນາມແລະປຼະວັຕິທັ້ງຂອງຍາຕິໃນສະກູລໄວ້ໃຫ້ຄົນຊັ້ນເກົ່າຊັ້ນກາງຊັ້ນໃໝ່ ແລະຈະເກີດມາຊັ້ນຫຼັງຊາບທົ່ວກັນ

ຂ້າພະເຈົ້າຂໍນ້ອມເກົ້າ ໆ ອຸທິສໜັງສືນີ້ຖວາຍແດ່ເຈົ້ານາຍໃນຕຼະກູລວົງສ໌ວັງໜ້ານີ້ ອົງຄ໌ທີ່ເສດັຈລ່ວງລັບໄປສູ່ປະຣະໂລກແລ້ວນັ້ນ ມານຣດາບັງເກີດເກົ້າຂອງຂ້າພະເຈົ້າເປັນຕົ້ນ ຈົ່ງໄດ້ຮັບຜົລບຸນສ່ວນນີ້ດ້ວຍ ເປັ່ນວ່າອົງຄ໌ໃດຕົກທີ່ຍາກລຳບາກ ກໍຂໍໃຫ້ຍ້າຍໄປສູ່ທີ່ດີ ຕົກທີ່ດີແລ້ວ ຂໍໃຫ້ດີກວ່າເກົ່າຍິ່ງເທີ້ນແລະເສນທີ ກັບຂໍຖວາຍກຸສົລ ແດ່ອົງຄ໌ທີ່ຍັງທຼົງດຳຣົງພຼະຊົນມ໌ຢູ່ໃນໂລກນີ້ ແລະຈະເກີດມາພາຍຫຼັງສືບພຼະຣາຊສັນຕິວົງສ໌ກໍດີ ຈົ່ງທຼົງພຼະຈະເຣີນ ແລະຈະເຣີນດ້ວຍອາຍຸ ວັນນະ ສຸຂະ ພລະ ຄຸນສາຣສົມບັຕິ ສຸກະສິຣິສວັສດີ ພິພັທນະມົງຄົລ ວິບຸນນະຜົລຊົ່ວກາລນານເທີ້ນ.

ໃນທີ່ສຸດແຫ່ງຄຳນຳ ຂ້າພະເຈົ້າຂໍຂອບພຼະຄຸນ ເຈົ້າກົມພຼະພົມສິງຫ໌ຄຳ ບຸຕຼາແລະບຸຕຼີ, ພຼະຍາດຳຣົງຣິທີໄກລິຕູບີ ລິຕູຊື ແລະລິຕູລືອາ ທີ່ໄດ້ສລະເງິນເປັນທານ ຊ່ວຍໃນການສ່ວນນີ້ ກັບເຈົ້າສົມສນິທ (ຄຳໝັ້ນ ວົງກົຕ-ຣັຕນະ) ແລະ ຮອງອທິການຕຳຣວຈ ເລື່ອນວິໄລຫົງສ໌ ທີ່ໄດ້ຊ່ວຍຈັດການພິມພ໌ໃຫ້ຂ້າພະເຈົ້າ ໄດ້ສຳເຣັຈຜົລໂດຍດັ່ງຄຳປຼາຖນາ ແລະຫວັງວ່າຄົງຈະອະນຸໂມທະນາບຸນກຸສົລສ່ວນນີ້ນຳກັນ.

ເຈົ້າຄຳໝັ້ນ ວົງກົຕ-ຣັຕນະ

ບ້ານສຳຣານຣົມຍ໌ ໔໒໐
ຖນົນສຸຂະເສີມ ພຼະນະຄຣ
ວັນທີ ໒໑-໑໒-໔໙

ປຼະວັຕິ
ເຈົ້າອຸປຣາຊ ອຸ່ນແກ້ວ

ເຈົ້າອຸປຣາຊອຸ່ນແກ້ວ ປຼະສູຕິປີເສັຈ ຈ.ສ. ໑໑໕໒ ທີ່ຫໍຄໍາໜອງບົວ(໑) ນະຄອນຫຼວງພຼະບາງຣາຊທານີ ເປັນພຼະຣາຊບຸຕຼສົມເດັຈພຼະເຈົ້າອະນຸຣຸທ(໒) ເປັນພຼະຣາຊນັດດາສົມເດັຈພຼະເຈົ້າອິນທະໂສມ ພຼະເຈົ້າລ້ານຊ້າງຮົ່ມຂາວຫຼວງພຼະບາງ ເປັນພຼະຣາຊນິກູລສົມເດັຈພຼະເຈົ້າສຸຣິຍະວົງສາທັມມິກະບໍຣົມບໍພິຕຼ ພຼະເຈົ້າລ້ານຊ້າງຮົ່ມຂາວວຽງຈັນທນ໌.

ພຼະອົງຄ໌ມີພີ່ນ້ອງຮ່ວມພຼະຣາຊບິດາດຽວກັນ ໕ອົງຄ໌ ພຼະນາມວ່າ ເຈົ້າມັງທາຕຸຣາຊ ໄດ້ເປັນເຈົ້າແຜ່ນດິນ ຫຼືພະນາມວ່າ ສົມເດັຈພຼະເຈົ້າມັງທາຕຸຣາຊ ຫຼືເຈົ້າມະຫາຊີວິຕບໍຣົມຣົຖ ເຈົ້າສຸທາຣະຣາຊ ເຈົ້າອະໄພຍະຣາຊ ໄດ້ເປັນເຈົ້າອຸປຣາຊ. ເຈົ້າໄຊຍະຣາຊ ແລະເຈົ້າຊ້າງ ເຈົ້ານາງຫຸ່ນ ເຈົ້ານາງຄໍາຫຼ້າ ແລະເຈົ້ານາງສີໄວຍະພາ.

ປີສີ ຈ.ສ. ໑໑໘໒ ສົມເດັຈພຼະເຈົ້າມັງທາຕຸຣາຊ ມີພຼະບໍຣົມຣາຊໂອງການໂປຼດໃຫ້ພຼະອົງຄ໌ເປັນນາຍທັພ ແຫ່ເຈົ້າອຸປຣາຊສຸທາຣະຣາຊ ຄຸມພົລທະຫານຍົກຂຶ້ນໄປຕັ້ງສະກັດຢູ່ເມືອງບຸນເໜືອ (ແຂວງຜົ້ງສະຫຼີ) ພຼະເວລານັ້ນ ເຈົ້າມະຫານ້ອຍກັບເຈົ້າມະຫາວັງ ເມືອງສະແວນຫວີຟ້າ ໑໒ ພັນນາລື້ ເກີດວິວາທຮົບກັນ.

ປີເປົ້າ ຈ.ສ. ໑໑໙໑ ສົມເດັຈພຼະເຈົ້າມັງທາຕຸຣາຊ ມີພຼະບໍຣົມຣາຊໂອງການໂປຼດໃຫ້ພຼະອົງຄ໌ເປັນນາຍທັພ ແຫ່ເຈົ້າອຸປຣາຊອະໄພຍ໌ ຄຸມພົລທະຫານຍົກຂຶ້ນໄປຮົບເຈົ້າມະຫາວັງເມືອງສະແວນຫວີຟ້າ ໑໒ ພັນນາລື້ ກອງທັພເຈົ້າມະຫາວັງແຕກໜີໄປເມືອງຊຽງຮຸ່ງ. ດັ່ງນີ້ ພຼະອົງຄ໌ ເຈົ້າອຸ່ນແກ້ວໄດ້ເອົາຄົວລື້ ຊື່

---

(໑) ບ້ານເຈົ້າສີສັນນະຣາຊ ບ້ານໃໝ່

(໒) ພຼະເຈົ້າຮົ່ມຂາວ ຄັ້ນເສດັຈສວັຕຕະຄົຕແລ້ວ ຊາວເມືອງກວາຍພຼະນາມວ່າ ເຈົ້າມະຫາຊີວິຕບໍຣົມໂກດທ໌ ເພາະໂກດທ໌ໃສ່ພຼະບໍຣົມສົພງາມຍິ່ງກວ່າງາມ.

ຄັນໄດ້ເປັນຊະເລີຍນັ້ນລົງມາເມືອງຫຼວງພຼະບາງ ແລ້ວໃຫ້ໄປຕັ້ງພູມີລຳເນົາຢູ່ນາຍາງໃນລຳນ້ຳລາ ແຂວງເມືອງງ ບ້ານ ໑, ບ້ານຫາດຄໍ້ ຢູ່ຝັ່ງຂວາຂາລ່ອງນ້ຳອູ ແຂວງເມືອງປາກອູ ບ້ານ ໑, ບ້ານຜາບິນ ຢູ່ຝັ່ງຊ້າຍຂາລ່ອງນ້ຳຄານ ແຂວງຫຼວງພຼະບາງ ບ້ານ ໑ ເປັນຕົ້ນ ເພາະສນັ້ນຈຶ່ງມີລົບກັບຫາດຄໍ້, ສອນບ້ານຫາດຄໍ້, ຈົບກັບຫາດຫາງຄວາຍ, ສ່ວນຫາດຫາງຄວາຍ ເປັນຂອງວັງໜ້າສືບມາ ແລະຄັນຮອດບຸນເດືອນ ໑໒ ມາແລ້ວ ພວກລື້ນາຍາງຫາດຄໍ້ ຈຶ່ງໄດ້ລົງໄປເຝົ້າວັງໜ້າທຸກປີ ຈົນຕລອດຮອດຊັ້ນເຈົ້າມະຫາອຸປຣາຊບຸນບຸນຄົງ ຫຼານຂອງພຼະວົງຄ໌.

ປີມົດ ຈ.ສ. ໑໑໙໗ ເຈົ້າພຼະຍາສັນມາທິບໍດີ (ສິນບູຣທ໌) ແມ່ທັພໄທຍ໌ ໃຫ້ພຼະວົງຄ໌ເປັນແມ່ທັພໜຸນ ຄຸມພົລທະຫານບົກຂຶ້ນໄປຕີເມືອງເງຽ ໄດ້ເອົາໄທຍ໌ໂຊ່ງດຳຊຶ່ງຈັບໄດ້ເປັນຊະເລີຍນັ້ນລົງມາເມືອງຫຼວງພຼະບາງ ແລ້ວໃຫ້ໄປຕັ້ງພູມີລຳເນົາຢູ່ບ້ານລີເມືອງບິນຕາແສງນ້ຳບາກ ບ້ານທ່າບູ້ຊຽງດາ ຕາແສງນ້ຳງາ ແຂວງເມືອງງອຍ. ບ້ານນາຊາງ, ບ້ານນາແລ, ບ້ານພູນອກ, ບ້ານພູເພົ້າ, ບ້ານນາສ້າງເຫວີຍ ແລະບ້ານຈ່ວນໃຕ້ ແຂວງເມືອງຫຼວງພຼະບາງ. ເພາະສນັ້ນຈຶ່ງມີນາສ້າງເຫວີຍ ນາບ້ານຈ່ວນ ເໝືອງຫ້ວຍຈ່ວນ ເໝືອງລໍ ເປັນຂອງວັງໜ້າສືບມາ, ຄັນຮອດບຸນເດືອນ ໑໒ ມາແລ້ວ ຜູ້ໄທຍພວກນີ້ກໍໄປເຝົ້າວັງໜ້າທຸກປີ ເໝືອນກັນກັບພວກລື້ກ່າວບົນນີ້

ປີສັນ. ຈ.ສ. ໑໑໙໘ ຄັນເສັ້ຈການປົງສົພສົມເດັຈພຼະເຈົ້າມັງທາດຸຣາຊແລ້ວ ເຈົ້າອຸປຣາຊອະໄພຍ໌ ແຕ່ງໃຫ້ພຼະວົງຄ໌ກີສຸທະອັກສຣ ນຳເອົາຕົ້ນດອກໄມ້ເງິນຄຳເຄື່ອງຣາຊບັນນາການລົງໄປຖວາຍສົມເດັຈພຼະນັ່ງເກົ້າ (ພຼະຣາມາທີ ໓) ພຼະວົງຄ໌ໄດ້ຮັບພຼະຣາຊທານ ບັນດາສັກດ໌ເປັນເຈົ້າຣາຊວົງຄ໌ ແລະຮັບພຼະບໍຣົມພຼະຣາຊໂອງການໃຫ້ຂຶ້ນໄປຮັກສາເມືອງຫຼວງພຼະບາງ ເພາະເວລານັ້ນ ເຈົ້າອຸປຣາຊອະໄພຍ໌ກັບເຈົ້າຣາຊວົງຄ໌ສຸຈະເສັນ ສອງອາວຫຼານ ເກີດວິວາທບາດໝາງແຍ່ງກັນເປັນເຈົ້າແຜ່ນດິນ ສົມເດັຈພຼະນັ່ງເກົ້າຈຶ່ງຊົງມີຮັບສັ່ງໃຫ້ລົງໄປເຝົ້າ ທູລລະອອງທຸລີພຼະບາທທັງ ໒ ອົງຄ໌. ແຕ່ນປີນີ້ແລ້ວ ພຼະວົງຄ໌ເຈົ້າຣາຊວົງຄ໌ ອຸນແກ້ວ ໄດ້ເອົາທ້າວໂຈນ (ທ້າວລະຄອນ) ກັບນາຍໂຊນຊຸບຸນຫຼົງ

ມາຝຶກຫັດລີ້ບ້ານຜານົບ ເປັນຕົວລະຄອນໃສ່ເມືອງຫຼວງພຼະບາງ ຕໍ່ມາຈຶ່ງເປັ່ນນາຍເຕຊເຕຊາ ແລະພຼະພູທັນເປບຸຕ.

ປີໄຄ້ ຄ.ສ. ໑໖໐໑ ພຼະອົງຄ໌ໄດ້ຮັບພຼະຣາຊທານ ຈາກສົມເດັຈພຼະນັ່ງເກົ້າ ເລື່ອນບັນດາສັກ ຂຶ້ນເປັນເຈົ້າອຸປຣາຊ ແທນເຈົ້າອຸປຣາຊວະໄພຍ໌ ຊຶ່ງຖືກຖອດຍົສລົງເປັນເຈົ້າວະໄພຍ໌ ສຸຣິຍະວົງສາ ສ່ວນບໍຣາຊາພໍ່ເສກສົມເດັຈພຼະເຈົ້າສຸຊະເສັນ ຫຼື ເຈົ້າມະຫາຊີວິຕຫຼວງຊຽງແສນ.

ປີສັນ ຄ.ສ. ໑໖໑໐ ສົມເດັຈພຼະເຈົ້າສຸຊເສັນ ມີພຼະບໍຣົມຣາຊໂອງກາຣໂປຼດໃຫ້ພຼະອົງຄ໌ເປັນແມ່ທັພ ຄຸມພົລ ໕,໐໐໐ ຍົກຂຶ້ນໄປຕັ້ງສະກັດຢູ່ເມືອງໄຊຍ໌ ເພາະເວລານັ້ນ ເຈົ້າທົ່ນຄຳ ເຈົ້າມະຫາໄຊຍ໌ງວດຳ ຍົກກອງທັພໄປຕີເຈົ້າອຸປຣາຊາ ມະຫາໄຊຍ໌ເມືອງຊຽງຮຸ່ງ ໆ ຈຶ່ງອົພຍົພ ຄອບຄົວໜີເຂົ້າມາເພິ່ງພຼະອົງຄ໌ ພຼະອົງຄ໌ໄດ້ເອົາເຈົ້າອຸປຣາຊາ ຯ ແລະຄອບຄົວລົງມາເຖິງເມືອງຫຼວງພຼະບາງໃນເດືອນ ໕.

ພຼະອົງຄ໌ສເດັຈທິວົງຄົຕກັບກາງທາງ ເດືອນຈຽງແຮມ ໙ ຄ່ຳ ປີເສັດ ຄ.ສ. ໑໖໑໙ ກົດປີທີ່ພຼະອົງຄ໌ຖືສຸກາະອັກແຂ ນຳເອົາຕົ້ນດອກໄມ້ເງິນຄຳ ເຄື່ອງຣາຊບັນນາກາຣຂອງສົມເດັຈພຼະເຈົ້າສຸຊະເສັນ ກັບພາເອົາເຈົ້າອຸປຣາຊາ ຯ ລົງໄປຖວາຍສົມເດັຈພຼະນັ້ງເກົ້າ ແລະສ່ວນປີສົມເດັຈພຼະເຈົ້າສຸຊະເສັນ ສເດັຈສວັຕຕະຄົຕທີ່ເມືອງຫຼວງພຼະບາງນະເດືອນ ໑໐. ປຼະມານພຼະຊົນມາຍຸ ໗໐ ປີ. ຣາຊໂອຣົສຂອງພຼະອົງຄ໌ກໍ່ໄດ້ຫຼາງດຳຣົງກາບັນດຣສັກດ໌ ເປັນວັງໜ້າ ສືບພຼະຣາຊສັນຕະຕິວົງຄ໌ ແລະເປັນເຈົ້າກູນຊ່ວຍຣາຊກາຣແຜ່ນດິນສືບມາພາຍຫຼັງເປັນຊ້ານານ

ລຳດັບສກຸລເຈົ້າອຸປຣາຊອຸ່ນແກ້ວ

ເຈົ້າອຸປຣາຊອຸ່ນແກ້ວ ມີພຼະຊາຍາຫ້າມແລະໝ່ອມ ໕ ຄົນ ຣາຊໂອຣົສ ໔ ອົງຄ໌ ແລະຣາຊທິດາ ໔ ອົງຄ໌ດັ່ງແຈ້ງຕໍ່ໄປນີ້:

໑- ເຈົ້າອະໂນຊາ ອັຄຄະວໍຣາຊເທວີ ມີບຸຕຊາຍຊື່ເຈົ້າສີວິສາ ແລະເຈົ້າສຸວັຕຕະພຼິຫານາ ບຸຕຍິງຊື່ເຈົ້າສີສຸພັນ໌ ແລະເຈົ້າສຸວັຕຕະຍອດແກ້ວ.

໒- ເຈົ້າຄຳຕື້ບ້ານອະໄພຍ໌ ມີບຸຕຍິງອົງຄ໌ດຽວຊື່ເຈົ້າປີ່ນຄຳ
໓- ໝ່ອມຄຳປົວບ້ານປ່າໄຜ່ ມີບຸຕຊາຍອົງຄ໌ດຽວຊື່ເຈົ້າກ່ຳ
໔- ໝ່ອມແປະບ້ານອູ່ ມີບຸຕຊາຍອົງຄ໌ດຽວຊື່ເຈົ້າທອງຄຳ
໕- ໝ່ອມສຸຂບ້ານປາກອູ ມີບຸຕຍິງອົງຄ໌ດຽວຊື່ເຈົ້າຄຳຊາວ

ບົທທີ ໑

ກ- ເຈົ້າສີວິສາ. ເອີວເຍັ້ງຊື່ເຈົ້າຄຳດ້ອງ ພຼະຣາຊທິດາສົມເດັຈພຼະເຈົ້າຈັນທຣ໌ເທພປຼະພາຄຸນສຸກະສຸນທຣສົມມະຫາດາ ຫຼືເຈົ້າມະຫາຊີວິຕຫຼວງຈັນທຣ໌. ມີບຸຕຊາຍຊື່ເຈົ້າປັນຍາ ແລະເຈົ້າສັງຊ໌ ເຈົ້າສີວິສາເປັນນາຍທັພເມືອງອິບລີ ໑໒ ພັນນາ ປີສັນ ຈ.ສ.໑໒໐໐ ລົງໄປແຫ່ເຈົ້າອຸປຣາຊອຸ່ນແກ້ວ ຖວາຍເຄື່ອງຣາຊບັນນາການ ສົມເດັຈພຼະນັ່ງເກົ້າ ປີເໝົ້າ ຈ.ສ.໑໒໑໗. ສົມພຼະຊົນໃນສນາມຣົບ ຕີເມືອງຊຽງຕຸງ ປີໄຄ້ ຈ.ສ.໑໒໑໓ ແມ່ທັພແມ່ນສົມເດັຈພຼະເຈົ້ານ້ອງຍາເທີກົມຫຼວງວົງສາທິຣາຊສນິທ ນາຍທັພແມ່ນເຈົ້າອຸປຣາຊອຸ່ນຄຳ ໃນແຜ່ນດິນສົມເດັຈພຼະເຈົ້າຈັນທຣ໌ເທພປຼະ, ພາຄຸນ ຯ.

໑-ເຈົ້າປັນຍາເອີວເຍັ້ງຊື່ເຈົ້າອຸ່ນຄຳ ຫຼືເຈົ້າໂສທາ ພຼະຣາຊທິດາສົມເດັຈພຼະເຈົ້າຈັນທຣ໌ເທພປຼະພາຄຸນຯ ມີລູກຊາຍຊື່ເຈົ້າຈັກກະວັຕິ ລູກຍິງຊື່ເຈົ້າທອງອ້ວນ.

ກ- ເຈົ້າຈັກກະວັຕິ ເອີວເຍັ້ງຊື່ເຈົ້າສບິນນາທິ ພຼະບິດາເຈົ້າອຸປຣາຊສຸວັຕຕະພຼິຫານາແລະເຈົ້າປີ່ນຄຳບໍ່ມີລູກປະກັນໄປເອົາ

๔ กค
เริ่ม
[illegible]

ເຈົ້າດວງເດສ ພຣະບິດາເຈົ້າອຸປຣາຊສຸວັຓຓະພູທາບາ ແລະເຈົ້າໝ່ອມຄຳບົວບໍ່ມີລູກ. ເຈົ້າຈັກກະວັຕີໄດ້ທຳຣາຊການແຜ່ນດິນແຕ່ປາງໄທຍສືບມາເຖິງປາງຝຣັ່ງ ໄດ້ຮັບຫຼຽນກຽດຕິຍົສ ເປໂດດິນເນີຣ໌ຄຳຊັ້ນທີ ໑ ລ່ອງເຈົ້າປັຈລິນໄວຍ໌ ຈຶ່ງໄດ້ຮັບພຣະຣາຊທານບັນດາສັກເປັນເຈົ້າກູມຕຳຣວຈຂວາ ຈາກສົມເດັຈພຣະເຈົ້າສີສວ່າງວົງສ໌ ແລະເປັນຫົວໜ້າສາມລາວເມືອງຫຼວງພຣະບາງ. ບັງເກີດທຸພພິລກາຍ ກຼາບຖວາຍບັງຄົມທູລລາອອກຈາກຣາຊການ ບໍ່ໄດ້ຮັບພຣະຣາຊທານບ້ຽບຳນານ ສິ້ນພຣະຊົນມ໌ທີ່ໂຮງບ້ານໃໝ່ວັນປະຫັສແຮມ ໔ ຄ່ຳເດືອນ ໙ ປີໃຄ້ ຈ.ສ. ໑໒໘໘ ຕົງວັນທີ ໒໐ ຂຸຕ ໑໙໒໖ ຣາຊການຝຣັ່ງໄດ້ປຣະທານເງິນ ໒໐໐ ຫຼຽນ.

ຂ. ເຈົ້າທອງອ້ວນ ເອົາເມັຍຊື່ເຈົ້າບົວລະພັນທ໌ ບຸຕເຈົ້າກູມຂຸນຄຳເພັງ ແລະເຈົ້າຄຳຕັນ ມີລູກຊາຍຊື່ເຈົ້າມາອຸປຣາຊຕາຍທີ່ບ້ານປາກແປ, ເຈົ້າເພັງເຈົ້າເມືອງຕາຍທີ່ບ້ານໝື່ນນາ, ເຈົ້າຕັນຕາຍທີ່ບ້ານພັນຫຼວງ ແລະເຈົ້າຈັນທຣ໌ ລູກຍິງຊື່ເຈົ້າອິນ ແລະເຈົ້າຊ່ວຍຢູ່ບ້ານພັນຫຼວງ.

ງ- ເຈົ້າສັງຈ໌ ເອົາເມັຍຊື່ເຈົ້າໜູ ລູກເຈົ້າຕັນບ້ານຊຽງລົມ ມີລູກຍິງຊື່ເຈົ້າຄຳປຸ ລູກຊາຍຊື່ເຈົ້າຄຳໝັ້ງ.ອ ເຈົ້າສັງຈ໌ໄດ້ເປັນພຽງສາງເສົ້າທີ່ສົບວັດປາງໄທຍ໌ ເຖິງແກ່ກັມມ໌ທີ່ບ້ານໃໝ່ເດືອນ໘ ປີໄສ້ ຈ.ສ.໑໒໖໗.

ກ. ເຈົ້າຄຳປຸ ເປັນຫ້າມເຈົ້າມະຫາອຸປຣາຊບຸຓຄົງ ມີພຣະບິດາວົງສ໌ດ່ຽວ ຊື່ເຈົ້າສຸພັນທາໄລຍ໌ ເຈົ້າຄຳປຸເຖິງແກ່ກັມມ໌ທີ່ບ້ານໃໝ່ ປີໄສ້ ຈ.ສ. ໑໓໐໖.

ຂ- ເຈົ້າຄຳໝຽວ ເອົາເມັຍຊື່ສາວເຫຼັກ ບ້ານສັງຈ້າໂລກ ບໍ່ມີລູກ ເຖິງແກ່ກັມມ໌ປີເສັດ ຈ. ສ. ໑໒໙໖.

ຊ- ເຈົ້າສຸວັຓຓະພູທາບາ- ໄດ້ເປັນເຈົ້າອຸປຣາຊ ເອົາເມັຍມີລູກ ຈະຂໍກ່າວຢູ່ຕອນທີ ໒ ຕໍ່ໄປ.

ຄ- ເຈົ້າສີສຸພັນທ໌ ເອົາຜົວບໍ່ຮູ້ຊື່ ສືບຫາລູກຫຼານເຫັນບໍ່ມີ.

ງ- ເຈົ້າສຸວັຓຓະຍອດແກ້ວ- ກໍຄືກັນ.

ບົດທີ ໒

ກ. ເຈົ້າປິ່ນຄຳ ເອົາພີ່ອ້າຍຕ່າງທ້ອງເປັນຜົວ ຊື່ເຈົ້າ -

ອຸປຮາຊສຸວັຕຕະນະພູທາມາ' ມີພຣະທິດາຊື່ເຈົ້າສົມມາລີ, ເຈົ້າມະຕີສາຄອນ, ແລະເຈົ້າມະຕີຈິນດາ ພຣະໂອຣົສຊື່ເຈົ້າສີວິລາວັຕຕ໌ ແລະເຈົ້າບຸນນະສານ ເຈົ້າປີ່ນຄຳສິ້ນພຣະຊົນມ໌ທີ່ໂຮງສວນໝາກບ້ານອະໄພຍ໌ ປີໃສ້ ຈ.ສ. ໑໒໗໘.

໑- ເຈົ້າສົມມາລີ ເອົາຜົວຊື່ເຈົ້າຈັກກະວັຕິ ບໍ່ມີລູກ ປະກັນ ສິ້ນພຣະຊົນມ໌ທີ່ໂຮງສວນໝາກບ້ານອະໄພຍ໌ ປີຍີ່ ຈ.ສ.໑໒໗໔

໒- ເຈົ້າມະຕີສາຄອນ ສິ້ນພຣະຊົນມ໌ແຕ່ເມື່ອຍັງຫຼ້າຈເຣີນໄວຍ໌.

໓- ເຈົ້າມະຕີຈິນດາ ໄດ້ສເດັຈໄປສຶກສາວິຊາທີ່ໂຮງຮຽນສວນກຸຫຼາບອັງກິສກຸງເທພ ເອົາຜົວຊື່ເຈົ້າທັນ ບໍ່ມີລູກ ສິ້ນພຣະຊົນມ໌ດ້ວຍຄອດບຸຕນ້ອງບໍ່ທັກ ທີ່ໂຮງສວນໝາກບ້ານອະໄພຍ໌ ປີສັນ ຈ.ສ. ໑໒໘໐.

໔- ເຈົ້າສີວິລາວັຕຕ໌ ສິ້ນພຣະຊົນມ໌ ແຕ່ເມື່ອຍັງຫຼ້າຈເຣີນໄວຍ໌.

໕- ເຈົ້າບຸນນະສານ ເອົາເມັຍຊື່ໝ່ອມຈັນທາບ້ານປາກເຊືອງ ມີລູກຊາຍດຽວຊື່ເຈົ້າບຸນນະວັດ. ເມັຍຕາຍປະໄປເອົາເຈົ້າວັດທະນາ ພຣະທິດາເຈົ້າມະຫາອຸປຮາຊບຸນຄົງ ແລະເຈົ້າໂສມຣັສມີ ບໍ່ມີລູກ. ເຈົ້າບຸນນະສານໄດ້ສເດັຈໄປສຶກສາວິຊາ ທີ່ໂຮງຮຽນຊາສເລີລູໂລບາ (*College Chasseloup-Laubat*) ເມືອງໄຊ່ງ່ອນ ອອກມາຮັບຣາຊການ ເປັນພນັກງານໂທຣະເລກ ແລ້ວໄປປະຈຳການຢູ່ເມືອງຊຽງຂວາງ, ເມືອງຍູ້, ເມືອງງອຍ, ແລະເມືອງຂູເທີງ ລາວອອກມາຝ່າຍຣາຊການລາວ ໄດ້ຖືອາຈຍາສິທພຣະເຈົ້າແຜ່ນດິນ ກົມເຕ່າໃຫ້ໄປຮ່ວມມືກັບກອງທັພຝຣັ່ງເສສ ຂອງກອມມັງດັງດູໂສນຕ໌ (*Commandant Dussault*) ແລ້ວສເດັຈຂຶ້ນໄປປາບປາມປະຣະປັກສ໌ເຖິງເມືອງໄລ່ຈິນສູ່ຮັຈ ໃນ ຄ.ສ. ໑໙໑໕-໑໙໑໗ ສິບອົບສິບສກຸລແຕ່ບໍ່ສົນຊື່ ພຣະບໍ່ມີບຸນແລະວາສນາ ບໍ່ໄດ້ຮັບພຣະຣາຊທານບັນດາສັກດ໌ ແລະຕຣາລ້ານຊ້າງ ອອຟຟີຊີເຢ ຊັ້ນ ໔. ເປັນຂຸນນາງກົມໂຍທາອອກໄປຕັດທາງແຕ່ປາກຄານ ລຽບແຄມນ້ຳຂອງຮອດຜານ້ຳຕາເໜືອປາກອູ ບັນຈົບທາງເມືອງໄຊຍ໌ມາບ້ານລາດຫານ, ແຕ່ເມືອງຫຼວງພຣະບາງລຽບແຄມນ້ຳຄານ ຮອດປາກຫ້ວຍສັ້ງ ບັນຈົບທາງເມືອງ

ພວນມາເມືອງຢູ່ ແລະລຽບເຄຍນ້ຳມີ່ງຮອດບ້ານລ້ອງ ບັນລັບທາງ ເມືອງກາສີ ຮ້ານພູເຫຼັກພີມາ. ໄດ້ເປັນເຈົ້າເມືອງຮັບເບັ້ຍລ້ຽງ ປະຈຳປີ ມີອາຍຸ ໖໐ ປີ ສິ້ນພຣະຊົນມ໌ທີ່ໂຮງສວນໝາກຫ້ວນ ອະໄພຍ໌ ວັນເສົາຣ໌ແຮມ ໑໕ ຄ່ຳ ເດືອນ ໑໒ ປີໃຈ້ ຈ.ສ. ໑໒໙໘ ຕົງວັນທີ ໑໔ ໂນວອມ ໑໙໓໖.

ກ. ເຈົ້າບຸນຍະວັຒນ໌ ເອົາເມັຽຊື່ເຈົ້າຣັຕິດາລູກເຈົ້າທອງສຸກແລະເຈົ້າໝ່ອນແກ້ວ ມີລູກຊາຍຊື່ເຈົ້າບຸນຍະສີຫາວົງສ໌ ລູກຍິງຊື່ເຈົ້າບຸນຍະຣັຕນາ ປະກັນ. ເຈົ້າບຸນຍະວັຒນ໌ເປັນສມຽນລ່າມແລ້ວເປັນເຈົ້າແຂວງຫຼວງພຣະບາງໃນສມັຍປຣະເທດລາວອິສສຣະ ໜີໄປເມືອງໄທຍ໌.

ເຈົ້າບຸນຍະຣັຕນາ ເອົາຜົວຊື່ເຈົ້າສີສວັສດິ໌ ລູກເຈົ້າຣາຊາວະດີແລະເຈົ້າດວງຈັນທຣ໌ ມີລູກຍິງຊື່ເຈົ້າສີອຳພອນ ເຈົ້າສີອາວອນ.

ທີກາເກີບ

ກ. ເຈົ້າກ່ຳ ເອົາເມັຽຊື່ເຈົ້າດວງເພັຊຣ໌ບຸຕຼີເຈົ້າກົມແຂວຄຳປານແລະໝ່ອມສຸຂບ້ານຫົວຽງ ມີລູກຊາຍຊື່ເຈົ້າໄຊຍວຸฒີ໌ແລະເຈົ້າປັญญາທິພຍ໌ ລູກຍິງຊື່ເຈົ້າຄຳອ້ວນແລະເຈົ້າຄຳພູຍ ເຈົ້າກ່ຳໄດ້ທຳຣາຊການແຜ່ນດິນແຕ່ທາງໄທຍ໌ ຂຶ້ນມາເຖິງທາງຜູ້ໄດ້ຮັບພຣະຣາຊທານບັນດາສັກດ໌ເປັນເຈົ້າກູ່ນນາ ຂຶ້ນໄປເປັນນາຍແຂວງໆ ຫົວພັນ ສິ້ນພຣະຊົນມ໌ທີ່ໂຮງບ້ານພັນຫຼວງ ວັນເສົາຣ໌ແຮມ ໗ ຄ່ຳ ເດືອນ ໑໐ ປີສັນ ຈ.ສ. ໑໒໕໘ ໃນແຜ່ນດິນສົມເດັຈພຣະເຈົ້າສັກກະຣິນທ໌ຯ (ຄຳສຸຂ)

໑. ເຈົ້າໄຊຍວຸฒີ໌ ເອົາເມັຽຊື່ເຈົ້າທອງຢູ່ ບຸຕຼີເຈົ້າກູ່ນສີພາຍອ່ນແລະເຈົ້າໝູຄຳ ມີລູກຊາຍດຽວຊື່ເຈົ້າໝັ້ນ. ເຈົ້າໄຊຍວຸฒີໄດ້ສຶກສາວິຊາຢູ່ໂຮງຮຽນຝັ່ງລາວເມືອງຫຼວງພຣະບາງ. ອອກໄປເປັນສມຽນລ່າມປຣະຈຳການຢູ່ເມືອງສິງຫ໌ ເປັນລ່າມປຣະຈຳກອງພັນທະຫານລາວ ໄປບຸນໃຫຍ່ທີ່ກຸງປາຣີສ ປີ ໑໙໐໐ ແລະເປັນຂຸນນາງທຳສນາຍຫຼວງ ຖືກລູກລະເບີດຕາຍທີ່ວັງນ້ຳ ໃນຫ້ວຍນ້ຳປາ ປ່ອງນ້ຳເຊືອງ ເດືອນ ໙ ຂຶ້ນ ໑໕ ຄ່ຳ ປີສງ້າ ຈ.ສ. ໑໒໖໘ ຕົງວັນທີ ໒໘ ອຸຕ ໑໙໐໖.

ກ. ເຈົ້າໝັ້ນ ເອົາເມັຽຊື່ໝ່ອນບົວ ລູກອາຈາຣຍ໌ເພົ່າບ້ານວັດທາຕຸ ມີລູກຍິງຊື່ເຈົ້າອິ້ນ ປະໝ່ອນບົວໄປເອົາໝ່ອນບົວພັນບ້ານປາກຊີ ມີລູກຊາຍຊື່ເຈົ້າອ້ວນ. ເຈົ້າໝັ້ນເປັນຜູ້ຊ່ວຍ ລາອອກຣາຊການ ດຽວນີ້ຢູ່ບ້ານປາກຊີ.

໔. ເຈົ້າປັນນາທິພ ເອົາເມັຽຊື່ເຈົ້າຄຳຜຸຍ ບຸຕຼີເຈົ້າກົມມຫາດເລັກຂວາສຸວັຕຕ໌ຄຳ ແລະເຈົ້າຄຳໝູ້ວ ມີລູກຍິງດຽວຊື່ເຈົ້າທອງຄືນ. ເມັຽຕາຍປະເລ້ວ ໄປເອົາໝ່ອນຄຳອ້ວນ ລູກພຼະຍານາໃຕ້. ຊຽງອື່ງແລະສາວກອງສີ ມີລູກຍິງຊື່ເຈົ້າຄຳອິ້ນ ແລະເຈົ້າອ່ອນແກ້ວ ຢູ່ບ້ານຫົວໂພນ. ເຈົ້າປັນນາທິພ ໄດ້ສເດັດໄປສຶກສາວິຊາທີ່ໂຮງຮຽນສາສເລີລຸບໂລບາເມືອງໄຊງ່ອນ ອອກມາເປັນສມຽນ ແລ້ວເປັນຕລາການຢູ່ສາລຍຸຕິທັມມ໌ເມືອງຫຼວງພຼະບາງ ລາພັກເພື່ອປົງສົພພໍ່ເມັຽເມືອງລຳປາງ ເຈົ້າກົມມຫາດເລັກຂວາດວງຈັນທຣ໌ ຫົວໜ້າສານໄລ່ທ່ານອອກ. ພຼະມຫາສົມເດັດພຼະເຈົ້າສີສວ່າງວົງສ໌ຫຼັງພຼະກຣຸນາຊຸບລ້ຽງ ໂປຼດໃຫ້ທ່ານໄປເປັນຫົວໜ້າໂຮງຈັກຣ໌ທີ່ສ້າງຊ້າໂລກ ແລ້ວລົງໄປເປັນຫົວໜ້າການປ່າໄມ້ຂອນສັກ ມຫາສົມບັຕິທີ່ປາກລາຍ. ເຈົ້າກົມຂຸນດວງຈັນທຣ໌ ເລຂານຸການພຼະຣາຊວັງອິສສາບັງບຽດທ່ານຈຶ່ງກາບຖວາຍບັງຄົມທູລລາ. ທ່ານມາເອນເດເລເກປາກລາຍໂທບໂຈນເອົາທ່ານເຂົ້າຮັບຣາຊການເປັນຜູ້ຈັດການສົ່ງຄ່ຽນແລະຄູລີເຂົ້າທຳການຝ່າຍໂຍທາ. ຍ້ອນຄວາມດີຄວາມຊອບ ຣາຊການຈຶ່ງຕັ້ງເປັນຫົວໜ້າສານປາກລາຍແລ້ວ ໄປເປັນນາຍເຂວງປາກແອດ ເມືອງໄຊຍ໌ ປາກລາຍ ແລະປາກງື ສິ້ນພຼະຊົນມ໌ທີ່ໂຮງບ້ານພັນຫຼວງດ້ວຍໂຣຄມຸຕກາວາຍ ວັນພຸທຂຶ້ນ ໗ ຄ່ຳ ເດືອນ ໑໐ ປີມົດ ຄ.ສ. ໑໒໙໗ ຕົງວັນທີ ໑໙ ອູດ ໑໙໓໕ ຕັ້ງບຳນານຂຶ້ນເງິນ ໕໐໐ ຫຼຽນ.

ກ. ເຈົ້າທອງຄືນ ເອົາຜົວຊື່ເຈົ້າວັຕຕ໌ລູກເຈົ້າໄຊຍະສາຣແລະໝ່ອນປ້ອງ ມີລູກຊາຍຊື່ເຈົ້າວັຕຕະສິນຍ໌ ເຈົ້າວັຕຕະເສງ ລູກຍິງຊື່ເຈົ້າຄິນດາວັນ. ເຈົ້າທອງຄືນເຖິງແກ່ກັມມ໌ທີ່ໂຮງໝໍເຖົ້າຊ້າງລາດ ປີສີ ຄ.ສ. ໑໒໙໐.

ຂ. ເຈົ້າຄຳອັ້ນ ເອົາຜົວຊື່ເຈົ້າສົມສນິທ ລູກເຈົ້າຄຳ-

24/VII

ໜັ້ນ ແລະເຈົ້າສ່ຽນຄຳມີ ລູກຊາຍຊື່ເຈົ້ານິຍຖາວົງສ໌ ເຈົ້ານິຍຖາຣາຊ ລູກຍິງຊື່ເຈົ້ານິຍຖາວອນ.

ຄ. ເຈົ້າອ່ອນແກ້ວ ເອົາຜົວຊື່ເຈົ້າຢ່ ລູກເຈົ້າສີສວັສດິ໌ ແລະເຈົ້າພິສມັຍ ມີລູກຊາຍຊື່ເຈົ້າສີພັນໄລຍ໌.

ງ. ເຈົ້າຄຳອ້ວນ ເປັນໝ້ອມສົມເດັຈພຼະເຈົ້າສີສວ່າງວົງສ໌ ມີພຼະຣາຊທິດາ ຊື່ເຈົ້າຄຳອິ້ນ ພຼະຣາຊບຸຕ ຊື່ເຈົ້າອິນທະວົງສ໌.

ຈ. ເຈົ້າຄຳຜຸຍ ເຖິງແກ່ກັມມ໌ແຕ່ເປັນສາວດ້ວຍ ໂຣຄອະຫິວາ ປີເປົ້າ ຈ,ສ, ໑໒໗໕.

ບົທທີ່ ໔

ກ. ເຈົ້າທອງຄຳ ເອົາເມັຽຊື່ເຈົ້າພັນດຸ໌ ມີລູກຊາຍຊື່ເຈົ້າຍາ ລູກຍິງ ຊື່ເຈົ້າຕຸ່ນ. ເຈົ້າທອງຄຳອອກບວດເປັນພິກຂຸ ຢູ່ວັດສີທັນມະຫາຍໂສກຣາຊ ມຣະນະກາລ ປີເສັຈ ຈ,ສ, ໑໒໗໐.

໑. ເຈົ້າຍາໄດ້ສເດັຈໄປສຶກສາວິຊາທີ່ໂຮງຮຽນນາຍຮ້ອຍທະຫານບົກກຸງເທພ ເປັນນາຍຮ້ອຍໂທ. ປາງຜູ້ເປັນຜູ້ຮອງພຼະຍາມະຫາເສນາ (ຊຽງພັນບ້ານຊຽງແມນ) ຫົວໜ້າທີ່ວ່າຣາຊການເຂວງຝັ່ງຂວາ ຕັ້ງຢູ່ເທິງທ່າຕິກເຮືອບ້ານຊຽງແມນ ເກີດວິກົລຈິຕຕ໌ ເຖິງແກ່ກັມມ໌ທີ່ຄຸ້ມວັງໜ້າ ປີເສັຈ ຈ,ສ, ໑໒໘໔ ບໍ່ມີເມັຽ ບໍ່ມີລູກ.

໒. ເຈົ້າຕຸ່ນ ເອົາຜົວຊື່ເຈົ້າຂັຕຕິຍະວົງສ໌ພຼະໂອຣົສເຈົ້າອຸປຣາຊສຸວັນນະພູມາ ແລະໝ່ອມເປົ້າ ມີລູກຍິງ ຊູວ ຊື່ເຈົ້າເຍິ່ງ. ເຈົ້າຕຸ່ນເກີດວິກົລຈິຕຕ໌ ເຖິງແກ່ກັມມ໌ທີ່ບ້ານຊຽງແມນ.

ກ. ເຈົ້າເຍິ່ງເປັນເມັຽນ້ອຍເຈົ້າບຸນລະສາຣ ບໍ່ມີລູກເລີຍຕາຍ.

ບົທທີ່ ໕

ກ. ເຈົ້າຄຳຊາວ ເອົາພີ່ອ້າຍຕ່າງທ້ອງເປັນຜົວຊື່ເຈົ້າ-

ອຸປຮາຊສຸວັຕາກະພູຫາ ມີພຣະໂອຣົສຊື່ເຈົ້າສົມມະຈິຕິ ພຣະທິດາ ຊື່ເຈົ້າຫຸມມະດີ ເຈົ້າທິພຍ໌ໂກສອນ ເຈົ້າຄັນທອຣັຕນາ ແລະເຈົ້າສຸມຫາສາຄອນ ຫຼື ເຈົ້າໜໍ່ແກ້ວ.

໑. ເຈົ້າສົມມະຈິຕິ ສິ້ນພຣະຊົນແຕ່ເມື່ອຍັງໜຸ່ມ ຈເຣີນໄວຍ໌.

໒. ເຈົ້າຫຸມມະດີກໍຄືກັນ ຯ

໓. ເຈົ້າທິພຍ໌ໂກສອນ ເອົາຜົວຊື່ເຈົ້າຫລວງສຸນລາກ ເຈົ້າຍອດ ແລະເຈົ້າຫລວງທິພຍ໌ເມືອງຊຽງຂວາງ ບໍ່ມີລູກ ສິ້ນພຣະຊົນມ໌ ປີເສັດ ຈ,ສ, ໑໒໗໒ ທີ່ໂຮງຂອງທ່ານບ່ອນຕັ້ງໂຮງພະຍາບານພະຍຸງຄັນດຽວນີ້.

໔. ເຈົ້າຄັນທອຣັຕນາສິ້ນພຣະຊົນແຕ່ຍັງໜຸ່ມເຍົາວ໌.

໕. ເຈົ້າສຸມຫາສາຄອນ ເອົາພີ່ອ້າຍຕ່າງທ້ອງເປັນຜົວ ຊື່ **ເຈົ້າຣາຊາບຸວັຕິ** ພຣະໂອຣົສເຈົ້າອຸປຮາຊສຸວັຕາກະພູຫາ ແລະໝ່ອມເປົາ ມີລູກຊາຍດຽວຊື່ເຈົ້າສີສວັສດິ໌. ປະເຈົ້າຊາບຸວັຕິ ແລ້ວໄປເອົາເຈົ້າຫລວງສຸນພີ່ອ້າຍເຂີຍ ມີລູກຊາຍຊື່ສີສຸວັຕາຕ໌ ເຈົ້າຈັນທະວົງສ໌ ລູກຍິງຊື່ເຈົ້າຣັທນລິດາ ເຈົ້າສົມມາລະດີ ແລະເຈົ້າຄຳຫຼ້ານິງນາຣີ. **ເຈົ້າສຸມຫາສາຄອນ**ສິ້ນພຣະຊົນມ໌ທີ່ໂຮງບ້ານໃໝ່ ວັນຈັນທຣ໌ ແຮມ ໑໔ ຄ່ຳ ເດືອນ ໔ ປີສັນ ຈ,ສ, ໑໒໙໘ **ຕຽງວັນທີ ໒໐** ອາວຣິນ ໑໙໓໗.

໖. ເຈົ້າສີສວັສດິ໌ ເອົາເມຍຊື່ເຈົ້າພິສມັຍ ພຣະທິດາເຈົ້າມະຫາອຸປຮາຊບຸນຄົງ ແລະເຈົ້າຫລວງດີ ມີລູກຊາຍຊື່ເຈົ້າຜາຍ ເຈົ້າຜູ ເຈົ້າເຜີຍ ລູກຍິງຊື່ເຈົ້າຍູ່ຍ ເຈົ້າແຫຼງ ເຈົ້າສີນວນຈັນທຣ໌ ເຈົ້າວັຕຕ໌ນາຣີ. ເຈົ້າສີສວັສດິ໌ໄດ້ສຶກສາວິຊາທີ່ໂຮງຮຽນຝຣັ່ງລາວເມືອງຫລວງພຣະບາງ ອອກມາເປັນສມຽນໄປປະຈຳການຢູ່ເມືອງຫົງສາ ເມືອງຄອນໄຊ ເມືອງກາສີ ເມືອງຊຳເໜືອ ເມືອງປາກແບ່ງ ເມືອງບໍ່ແກ້ວ ເມືອງສິງທ໌ ເປັນອຸປຮາດ ຫົວໜ້າສາລ ເມືອງປາກທາ ເຖິງແກ່ກັມມ໌ ເສັຽທີ່ນັ້ນ ວັນສຸກ ຂຶ້ນ ໑໒ ຄ່ຳ ເດືອນ ໘ ປີເໝົ້າ ຈ,ສ, ໑໓໐໑ ຕຽງວັນທີ ໒໘ ຊຸຍເຢ ໑໙໓໙.

ເຈົ້າຜາຍ ເອົາເມຍຊື່ເຈົ້າສຸກລູກເຈົ້າເພຊຣ໌ແລະສາວຫລວງດີ ມີຊື່ເຈົ້າສີທັນໄລຍ໌.

ເຈົ້າຜຸ ເອົາເມັຽຊື່ເຈົ້າອ່ອນແກ້ວລູກເຈົ້າປັດສາທິພຍ໌ ແລະໝ່ອມຄຳອ້ວນ ມີລູກຊາຍຊື່ເຈົ້າສີໝັ້ນໄຊຍ໌ ໄດ້ກ່າວໄວ້ບົທທີ ໑ ໝວດ ກ ເລຂ ໖ ຕົວ ຂ ນັ້ນແລ້ວ.

ເຈົ້າເຍີຍ ເອົາເມັຽຊື່ເຈົ້າດ້ອງ ລູກເຈົ້າແກ້ວແລະເຈົ້າສົມພາວະດີ.

ເຈົ້າຜຍ ເອົາຜົວຊື່ເຈົ້າໜູຫາສາ ລູກເຈົ້າໜີກແລະໝ່ອມທີ ມີລູກຍິງຊື່ເຈົ້າຈັນທຣ໌.

ເຈົ້າເໝງ ເອົາຜົວຊື່ເຈົ້າສຸຍັຕຕະລັງສີ ລູກເຈົ້າສີທັນນະນາຊແລະເຈົ້າຫາ ມີລູກຍິງຊື່ເຈົ້ານັນທາໄລຍ໌.

ຂ. ເຈົ້າຣັທສີດາ ເອົາຜົວຊື່ເຈົ້າບຸນລະວັຍ ມີລູກໄດ້ກ່າວໄວ້ບົທທີ໑ ໝວດ ກ ເລຂ ໕ ຕົວ ກ, ນັ້ນແລ້ວ. ເຈົ້າຣັທສີດາໄປສຶກສາວິຊາທີ່ໂຮງຮຽນຊັ້ນສູງສັຕຕີຝຣັ່ງເສດເມືອງໄຊງ່ອນອອກມາເປັນຄູ.

ຄ. ເຈົ້າສົມພາວະດີ ເອົາຜົວຊື່ເຈົ້າແກ້ວລູກເຈົ້າອ້ວນແລະເຈົ້າອຸ່ນ ມີລູກຊາຍຊື່ເຈົ້າດວງຈັນທຣ໌ ເຈົ້າມະຫາວົງສ໌ ເຈົ້າພັນທຸ ເຈົ້າສຸຂສວັສດີ ລູກຍິງຊື່ເຈົ້າດວງ.

ງ. ເຈົ້າສີສຸວັທນ໌ ເອົາເມັຽຊື່ເຈົ້າອ້ວນ ລູກເຈົ້າກູ່ມເລຂກັລລາ ແລະເຈົ້າແກ່ນຄຳ ແລະເອົາໝ່ອມພັນທຸລູກຊຽງຈັນແລະສາວຂັນ ບໍ່ມີລູກ. ເຈົ້າສີສຸວັທນ໌ເປັນຄູ.

ຈ. ເຈົ້າຈັນທະວົງສ໌ ເອົາເມັຽຊື່ເຈົ້າຈັນທຣ໌ສີດາ ເຈົ້າຣາຊບຸຕດວງຈັນທຣ໌ແລະໝ່ອມສຸກ ບໍ່ມີລູກ. ເຈົ້າຈັນທະວົງສ໌ເປັນຄູສອນໂຮງຮຽນເມືອງຊຽງເງິນ ຖືກຫາວ່າເປັນອິສຣະຝ່າຍຈັບເອົາເຂົ້າຄອງ ບີນໍາໄປຂັງໄວ້ຕລາງເມືອງວຽງຈັນ ເດຊະບຸນ ສະເດັຈເຈົ້າບຸນອຸ້ມ ພຣະໂອຣົສເຈົ້ານະຄອນຈັມປາສັກຊ່ວຍຈຶ່ງພົ້ນໂທສລວງຕາຍ.

ສ. ເຈົ້າຄຳຫຼ້າ ໆ, ເອົາຜົວຊື່ເຈົ້າສຸຂ ລູກເຈົ້າປານແລະເຈັນແວ່ນ ມີລູກບໍ່ຮູ້ຊື່. ເຈົ້າຄຳຫຼ້າໄດ້ໄປສຶກສາວິຊາທີ່ໂຮງຮຽນຊັ້ນສູງສັຕຕີຝຣັ່ງເສດເມືອງໄຊງ່ອນ ອອກມາເປັນຄູ ໃນສໄມປະເທສລາວອິສຣະ ໜີໄປນຳຜົວເມືອງໄທຍ໌.



ເຈົ້າອຸປຮາຊ ສຸວັຓຓະພູຫາມ່າ

ປຼະວັຕິ
ເຈົ້າອຸປຣາຊສຸວັຕຕະພຼຫມາ

ເຈົ້າອຸປຣາຊສຸວັຕຕະພຼຫມາ ປຼະສູຕິວັນພຸຣເດືອນ ໗ ເພັງ ປີສັນ ຈ.ສ. ໑໑໕໗ ທີ່ວັງພຼະບິດາວີສຸວັຕຕະທຳຄຳຝ່າຍໜ້າ(໑) ນະຄຣຫຼວງພຼະບາງຣາຊທານີ ໃນແຜ່ນດິນສົມເດັຈພຼະເຈົ້າມັງທາຕຸຣາຊ.

ປີສັນ ຈ.ສ. ໑໑໘໕ ພຼະຣາຊບິດາໄດ້ເອົາພຼະອົງຄ໌ລົງໄປຖວາຍຕົວເປັນມຫາດເລັກສົມເດັຈພຼະນັ່ງເກົ້າ ແລະໄດ້ທຼົງສຶກສາຢູ່ໂຮງຮຽນໃນວັງ.

ປີ[illegible]. ຈ.ສ. ໑໒໐໗ ພຼະອົງຄ໌ໄດ້ກຼາບຖວາຍບັງຄົມທູລລາຄືນມາຫາບ້ານເມືອງແລ້ວສເດັຈອອກໄປທຼົງຜນວຊເປັນພິກຂຸຢູ່ວັດສີສັນມະຫາຍໂສກຣາຊ ສເດັຈລາຜນວຊແລ້ວເຂົ້າໄປທຳຣາຊການຢູ່ຫໍຂຸມ ໃນພຼະຣາຊວັງຂອງພຼະຣາຊບິດາ.

ປີສັນ ຈ.ສ. ໑໒໑໐ ສົມເດັຈພຼະເຈົ້າສຸກະເສີມ ມີພຼະບໍຣົມຣາຊໂອງການໂປຼດໃຫ້ພຼະອົງຄ໌ເປັນນາຍທັພກັບພຼະຍາຄ່ວບ້ານ ຄຸມພົລ ໕໐໐ ເທົ່າເຈົ້າອຸປຣາຊອຸ່ນແກ້ວຂຶ້ນໄປຕັ້ງຢູ່ເມືອງ ວາ (ແຂວງຜົ້ງສະຫຼີ) ເພື່ອປ້ອງກັນອານາເຂຕຕ໌ເມືອງຫຼວງພຼະບາງຕໍ່ກັນກັບເມືອງສເວນຫວີຟ້າ ໑໒ ພັນນາລື້ ເພາະເວລານັ້ນ ເຈົ້າໜໍ່ຄຳກັບເຈົ້າມຫາໄຊຍ໌ງາດຳຍົກກອງທັພໄປຕີເຈົ້າອຸປຣາຊາມຫາໄຊຍ໌ເມືອງຊຽງຮຸ່ງ ໆ ອົພຍົພຄອບຄົວໜີລົງມາເພິ່ງກອງທັພລາວ.

ປີເຮົ້າ ຈ.ສ. ໑໒໑໑ ສົມເດັຈພຼະເຈົ້າສຸກະເສີມ ມີພຼະບໍຣົມຣາຊໂອງການໂປຼດໃຫ້ພຼະອົງຄ໌ເທົ່າເຈົ້າອຸປຣາຊອຸ່ນແກ້ວ ເຈົ້າອຸ່ນຄຳ ເຈົ້າສີອິສາ, ກິສຸກະອັກສຣ ນຳເອົາຕົ້ນດອກໄມ້ເງິນຄຳ ເຄື່ອງຣາຊບັນນາການ ແລະເຈົ້າອຸປຣາຊາ ຯ ລົງໄປຖວາຍພຼະນັ່ງເກົ້າ.

ປີເສັຈ ຈ.ສ. ໑໒໑໒ ເຈົ້າອຸປຣາຊອຸ່ນແກ້ວສເດັຈທິວັງຄົຕ

---

(໑). ບ້ານແສນໃໝ່ເພິ່ງທຸ່ງນອກ ປຸກເຮືອນເຂົ້າໃສ່ປາກທາງເບື້ອງເໜືອ ເຈົ້າໄປຫາບ້ານໃໝ່.

ກັບກຸງເທພ ພຣະອົງຄ໌ກັບເຈົ້າສີວິສາຜູ້ພີ່ກໍ່ໄດ້ພ້ອມກັນຈັດການປົງສົພ ສໍາເຣັຈບໍຣະບອນສົບພຣະຍາຕິບິສ.

ປີໄຄ້ ຈ.ສ. ໑໒໑໓ ເດືອນ ໑໐ ຂ້າງຂຶ້ນ ສົມເດັຈພຣະຈອມເກົ້າ (ພຣະຣາມາທີ ໔) ໂປຣດໃຫ້ພຣະອົງຄ໌ ພາເອົາເຈົ້າອຸປຣາຊ໌ກັບຂຶ້ນໄປເມືອງຫຼວງພຣະບາງ.

ປີຍີ ຈ.ສ. ໑໒໑໖ ເດືອນ ໔ ຂ້າງຂຶ້ນ ນາຍພັນທີພຣະຍາສີຫະຣາຊເດໂຊໄຊຍ໌ (ໂຕບຸນນາຄ) ພຣະຍາຣາຊາຣາພຸກູນ (ເອກບຸນນະຣັຕພັນທຸ໌)(໒) ຄຸມກອງທັພຂຶ້ນມາເຖິງເມືອງຫຼວງພຣະບາງ. ພັກທັພຕັ້ງຄ້າຍຢູ່ໃຕ້ວັດພຣະທາຕຸສີຈັນມະຫາຍໂສກຣາຊ (ດຽວນີ້ເອີ້ນວ່າບ້ານຄ້າຍ) ແລ້ວພຣະອົງຄ໌ກໍ່ໄດ້ສເດັຈຂຶ້ນໄປນໍາກອງທັພໄທຍ໌ ຕັ້ງທັພຢູ່ເໜືອບ້ານລາດທານ.

ປີສັນ ຈ.ສ. ໑໒໓໔ ພຣະອົງຄ໌ໄດ້ຮັບພຣະຣາຊທານບັນດາສັກດ໌ ເປັນເຈົ້າຣາຊສົມພັນທະວົງສ໌ ຈາກສົມເດັຈພຣະຈຸລຈອມເກົ້າ (ພຣະຣາມາທີ ໕) ຢູ່ຮັກສາເມືອງຫຼວງພຣະບາງ ເພາະເວລານັ້ນ ສົມເດັຈພຣະເຈົ້າຈັນທຣເທພ ໆ ສວັ[illegible]ະຄົຕ ເຈົ້າອຸປຣາຊອຸ່ນຄໍາ(໓) ແລະເຈົ້າຣາຊວົງສ໌ຄໍາບົວ(໔) ສອງພີ່ນ້ອງໄດ້ສເດັຈໄປກຸງເທພ ເພື່ອຂໍ່ພຣະຣາຊທານຮັບຍົສເປັນເຈົ້າແຜ່ນດິນແລະວັງໜ້າ ວັນອັງຄານເດືອນ ໓ ແຮມ ໑໓ ຄໍ່າ ພຣະອົງຄ໌ຫຼາໂປຣດໃຫ້ທໍາຣາຊສິງຫາຣ ເຕົ່າເພັ້ງກວານຫາວນນໍາເອົາຜ້າສັກລາຊເຄງ ເມືອໃຫ້ເຈົ້າອົງຄ໌ຜູ້ຄອງເມືອງຊຽງຂວາງ ຕົວ ໑ ເຈົ້າຣາຊບຸຕຕາ ໑ ແລະເຈົ້າຄວາງຕົວ ໑ ແລະກັບບອກໃຫ້ເອົາງວດດອກໄມ້ເງິນຄໍາ ເຄື່ອງຣາຊບັນນາການລົງໄປຖວາຍເມືອງຫຼວງພຣະບາງຕາມທັນນຽມທຸກລະດູປີ

ປີເຮົ້າ ຈ.ສ. ໑໒໓໕ ພຣະອົງຄ໌ໄດ້ຮັບພຣະຣາຊທານບັນດາສັກດ໌ເປັນເຈົ້າຣາຊອົງຄ໌ ແທນເຈົ້າຣາຊວົງສ໌ຄໍາບົວ ຮ່ວມປີຣາຊາພິເສກສົມເດັຈພຣະເຈົ້າມະຫິນ ໆ.

ປີເສັດ ຈ.ສ. ໑໒໓໖ ຫໍ້ເກີ້ເຫຼືອງແຈວງສິບສອງເຈົ້າໄທຍ໌ ຈະຍົກລົງມາຕີເມືອງຫຼວງພຣະບາງທັພ ໑ ກັບພວກຫໍ້

(໒ ພາຍຫຼັງໄດ້ເປັນເຈົ້າພຣະຍາພຸທຣະຣາໄພຍ໌

(໓ ໄດ້ເປັນສົມເດັຈພຣະເຈົ້າມະຫິນທຣເທພນິພາກອນ.

(໔ ໄດ້ເປັນເຈົ້າອຸປຣາຊ ຄັ້ນສເດັຈທິວົງຄົຕແລ້ວຖວາຍພຣະນາມວ່າ ເຈົ້າຊີວິຕວັງໜ້າລັງເຈົ້າ ພຣະສເດັຈຈາກກຸງເທພມາ ສົມພຣະອຸບັນລົງເຈົ້າໃຫ້ບ້ານຄ້າຍກັງ ເມືອງຫຼວງພຣະບາງ ແລະຫົງສົພ ກັບທີ່ນັ້ນ.

ເກີດຮໍ້ຊຶ່ງຕຽມທັພທີ່ທົ່ງຊຽງຄຳແຂວງພວນ ຈະຍົກລົງໄປທາງເມືອງວຽງຈັນທບ໌ ຕີເມືອງໜອງຄາຍທັພ ໑ ລົງໄປທາງເມືອງຫົວພັນຫ້າທັງຫົກ ມາຕີເມືອງຫຼວງພຣະບາງອີກທັພ ໑.

ປີໄດ້ ຈ.ສ. ໑໒໔໗ ສົມເດັຈພຣະເຈົ້ານທີນ ຯ ມີພຣະບໍຣົມຣາຊໂອງການໂປຣດໃຫ້ພຣະອົງຄ໌ເປັນແມ່ທັພ ຄຸມເຈົ້ານາຍ ພຣະຍາເພັງເສນທ້າວແລະໄພ່ພົລ ຂຶ້ນໄປຕັ້ງທັພສະກັດຢູ່ເມືອງງອຍ ແລະປາບຂ້າກະບົດຕາມຕຳບົນບ້ານເລົານ້ຳອູສຽບແລ້ວ ພຣະອົງຄ໌ໄດ້ແຕ່ງໃຫ້ພຣະຍາເມືອງຂວາ (ທິພຍ໌ຄຳພັນບ້ານຊຽງທອງ) ແລະພຣະຍາເມືອງຊ້າຍ (ຈາຣຍ໌ບຸນຜາບ້ານໝື່ນນາ) ຄຸມພົລກຳລັງຂຶ້ນໄປຕີຮໍ້ ທີ່ມາກວນເຂຕຕ໌ແດນແຂວງເມືອງຊ່ອນ. ແຕ່ງໃຫ້ເຈົ້າຣາຊສັນພັນທະວົງສ໌ຜູ້ຫານາ ຄຸມພົລຂຶ້ນໄປຕີຮໍ້ລໍລື ຊຶ່ງມາປຸ້ນສະດົມເມືອງແງ ສູ້ຮໍ້ບໍ່ໄຫວ ພຣະອົງຄ໌ໄດ້ຄຸມພົລ ໕໐໐ ຂຶ້ນໄປຊ່ວຍສູ້ຮົບກັບພວກຮໍ້ເປັນສາມາຖ ພວກຮໍ້ສູ້ບໍ່ໄດ້ ກໍພາກັນແຕກໜີໄປເມືອງລ່າທັງສິ້ນ. ພຣະອົງຄ໌ກໍຖອຍທັພກັບມາເມືອງງອຍ ຕັ້ງໃຫ້ເຈົ້າຣາຊບຸຕຄຳສຸກ (໕) ສະກັດຢູ່ເມືອງງອຍ. ຝ່າຍພຣະອົງຄ໌ໄດ້ຍົກໄປຕັ້ງທັພສະກັດຢູ່ເມືອງຊຸບີໃນນ້ຳແຊງ ແລະທ່ຽວປາບຂ້າກະບົດຕາມລ້ອງນ້ຳເຊືອງແລະນ້ຳແຊງ ຈົນສງົບລາບຄາບ ພຣະອົງຄ໌ໄດ້ຫຼົງຕັ້ງຂ້າເຝົ້າໝັ້ງນ້ຳເທົ້າເປັນເສນພູທິທະຕາແລະເສນກິຈຈານຸກູລ ຮັກສາເຂຕຕ໌ຊົງກົງດິນຂອງພຣະອົງຄ໌ຕອນນີ້.

ຝ່າຍພຣະຍາພີໄຊຍ໌ (ດິສ) ໄດ້ຊາບວ່າກອງທັພຮໍ້ມາຕັ້ງຢູ່ເມືອງຈຸ້ນກັດແຂວງພວນ ກໍສັ່ງຄຸມກອງທັພ ພ້ອມດ້ວຍພຣະຍາສຸໂຂໄທຍ໌ (ຊູ່ຫ) ພຣະອູດອນດິຍກາພິບາລ ກັບຜູ້ວ່າຣາຊການເມືອງຂຶ້ນ ແລະກົມມະການເມືອງພີໄຊຍ໌ ເມືອງສວັຣຄະໂລກ ກັບເຈົ້າອຸປຣາຊແມ່ທັພເມືອງນ່ານ ແລະເຈົ້າອຸປຣາຊຄຳບົວ ແມ່ທັພເມືອງຫຼວງພຣະບາງ ຍົກອອກຈາກເມືອງຫຼວງພຣະບາງທາງບ້ານສ້ຽວ ທ່າອູ້ຍ ທ່າໂພ ສົບອີ້ ໄປເຖິງເມືອງຍູ້ ເຈົ້າອຸປຣາຊຄຳບົວເຈັບປ່ວຍໄດ້ກັບຄືນໄປເມືອງຫຼວງພຣະບາງ. ກອງທັພພຣະຍາພີໄຊຍ໌ ຍົກອອກໄປເຖິງບ້ານສູຕ. ຝ່າຍຮໍ້ໄດ້ຍົກມາຕັ້ງຄ້າຍປິດທົບທາງຢູ່ຫ້ວຍນ້ຳລຳ-

---

(໕) ຕໍ່ມາໄດ້ເປັນເຈົ້າຣາຊວົງສ໌ ແລ້ວຈຶ່ງເປັນສົມເດັຈພຣະເຈົ້າສັກກະຣິນທຣຣິທຣ໌.

ຫານ ແລະໂອບອ້ອມລ້ອມຄ້າຍພຼະຍາພີໄຊຍ໌ ຄ້າຍເມືອງຫຼວງພຼະບາງ ແລະຄ້າຍເມືອງນ່ານໄວ້ ໕ ແຫ່ງ ທັງສອງຂ້າງຕ່າງແຕ່ງກອງທັບອອກຣົບກັນ ຕໍ່ສູ້ຢູ່ ໑໕ ວັນ ເວລາກາງຄືນກໍ່ຍົກມາຕີປຸ້ນຄ້າຍພຼະຍາພີໄຊຍ໌ ຄ້າຍເມືອງຫຼວງພຼະບາງບໍ່ແຕກ ແຕ່ຄ້າຍເມືອງນ່ານແຕກ ເຈົ້າອຸປຣາຊ (ເຈົ້ານ້ອຍຊຸຍ) ແມ່ທັບເມືອງນ່ານຖືກປືນຕາຍ. ພຼະຍາພີໄຊຍ໌ກໍ່ລ່າທັບ ຖອຍມາຕັ້ງຣະວັງຮັກສາບ້ານສອດທີ່ເປັນຊ່ອງທາງທີ່ຈະຍົກໄປຕີເມືອງຫຼວງພຼະບາງ.

ຣາຊການທັງນີ້ ພຼະຍາພີໄຊຍ໌ ຂໍກອງທັບມາຊ່ວຍ ເຈົ້າພຼະຍາພຸທທະຣາໄພຍ໌ ແມ່ທັບໃຫຍ່ ຊຶ່ງຕັ້ງຢູ່ເມືອງພີໄຊຍ໌ ຈຶ່ງຈັດກອງທັບໃຫ້ພຼະສຸຣິຍະພັກດີ (ເວກບຸນຍະຣັຕພັນທຸ໌) (ຜ) ຍົກຂຶ້ນມາ ເມືອງຫຼວງພຼະບາງ ຕາມໄປຊ່ວຍພຼະຍາພີໄຊຍ໌ເຖິງບ້ານສອດວັນສຸກຣ໌ ເດືອນ ໘ ແຮມ ໒ ຄ່ຳ. ສົມເດັຈພຼະເຈົ້າຢູ່ຫົວ ຯ ຈຶ່ງມີພຼະບໍຣົມຣາຊໂອງການໂປຣດໃຫ້ພຼະອົງຄ໌ເຈົ້າຣາຊວົງຄ໌ ສຸວັຕນະພຼົຫມມາຊຶ່ງຕັ້ງທັບສະເດັຈຢູ່ເມືອງຈີນໃນນ້ຳເຊາງນັ້ນ ຮີບເລັ່ງຍົກໄປຊ່ວຍພຼະຍາພີໄຊຍ໌. ພຼະອົງຄ໌ໄດ້ໃຫ້ເຈົ້າກ່ຳນ້ອງຊາຍ ຄຸມໄພ່ພົລສົມຄວນຢູ່ຮັກສາດ່ານເມືອງຈີນ. ພຼະອົງຄ໌ໄດ້ຍົກໄປເຖິງບ້ານສອດກ່ອນກອງທັບ ພຼະສຸຣິຍະພັກດີ ຄຸມພົລ ໕໐໐ ເສສ ເປັນທັບ ໑ ກອງພຼະຍາສຸໂຂໄທຍ໌ ແລະພຼະສຸຣິຍະພັກດີຣວມເຂົ້າກັນ ມີ ໕໐໐ ເສສ ເປັນທັບ ໑ ກອງພຼະຍາພີໄຊຍ໌ມີ ໗໐໐ ເສສ ເປັນທັບ ໑ ກອງເມືອງນ່ານມີ ໕໐໐ ເສສເປັນທັບ ໑ ຣວມເປັນ ໔ ທັບ ກອງພຼະອົງຄ໌ເປັນທັບໜ້າ. ວັນພຸທ ເດືອນ ໘ ແຮມ ໗ ຄ່ຳ ກອງທັບ ໔ ກອງນີ້ ໄດ້ຍົກອອກຈາກບ້ານສອດ ເຂົ້າຕີທັບຮໍ້ແຕກພັບພີນໄປ ແລະໄດ້ຕິດຕາມຮໍ້ໄປເຖິງທົ່ງຊຽງຄຳ ພວກຮໍ້ ກໍ່ອຸປຍົກ ຫຼົບໜີໄປຈາກເມືອງພວນ ໄທຍ໌ແລະລາວກໍ່ເລີກທັບກັບຄືນລົງມາເມືອງຫຼວງພຼະບາງ ຈຶ່ງເສັຈການປາບຮໍ້ ຄັ້ງທີ ໑ ໃນຄາວນັ້ນ.

ປີເປົ້າ ຈ.ສ. ໑໒໓໙ ພຼະອົງຄ໌ສະເດັຈໄປບວຊເບື້ອງຂວາ ແລະຫຼັງສຶກສາຫນັງສືໄທຍ໌ໃຫຍ່ ຢູ່ທີ່ວັງໂນນກຸງເທພ. ເວລານັ້ນເຈົ້າອຸປຣາຊຄຳບົວສະເດັຈທິວັງຄົຕ ສົມເດັຈພຼະເຈົ້າຢູ່ຫົວ ຯ

(ຜ) ບຸດເຈົ້າພຼະຍາພຸທທະຣາໄພຍ໌ ພາຍຫຼັງໄດ້ເປັນນາຍພົນໂທ ພຼະຍາຣາຊວະຣານຸກູລ

ຊົງສເດັຈລົງໄປກຸງເທພ ພຣະຫລວງຄິດວ່າ ໜ້າທີ່ອຸປຮາຊຍັງຫວ່າງຢູ່ ພຣະວົງຄ໌ກໍ່ຊະຣາແລ້ວ ຢາກໃຫ້ການບ້ານເມືອງຕົກຢູ່ກັບເຈົ້າຣາຊບຸດຄຳສຸຂ ວົງຄ໌ເປັນພຣະຣາຊບຸດກົກ ເພື່ອຈະໄດ້ສືບຕຣະກູລວົງຄ໌ຄອບຄອງແຜ່ນດິນຕໍ່ໄປ ສົມເດັຈພຣະເຈົ້າຢູ່ຫົວ ຯ ຄົງເອົາໄປທູລສົມເດັຈພຣະເຈົ້າບໍຣົມວົງຄ໌ເທີ ເຈົ້າຟ້າມຫາມາລາກົມພຣະບໍາຣາບປະຣະປັກສ໌ (໗) ເສນາບໍດີກະຊວງມຫາດໄທຍ໌ ຈະຂໍໃຫ້ອຸປຮາຊໃຫ້ແກ່ພຣະຣາຊບຸດ ກົມພຣະບໍາຣາບປະຣະປັກສ໌ບໍ່ຫລວງຍິນຍອມໃຫ້ ຫລວງຮັບຮອງວ່າ ຈະໃຫ້ເຈົ້າຣາຊວົງຄ໌ ສຸວັຕຕະຫຼູຫາມາເປັນເຈົ້າອຸປຮາຊ ຕາມທີ່ຄວາມຊອບໃນຣາຊການ ສົມເດັຈພຣະເຈົ້າຢູ່ຫົວ ຯ ວົງເຕັມຈົນສຸດຄວາມຄິດແລ້ວກໍ່ມີຄວາມເສັ້ຽພຣະໄທຍ໌.

ປີຍີ່ ຈ.ສ. ໑໒໔໐ ເດືອນ ໕ ຂຶ້ນ ໑໐ ຄ່ຳ ພຣະວົງຄ໌ໄດ້ຮັບພຣະຣາຊທ ານບັນດາສັກດ໌ເປັນເຈົ້າອຸປຮາຊ ເທນເຈົ້າອຸປຮາຊຄຳປົວ.

ປີສະງ້າ ຈ.ສ. ໑໒໔໔ ສົມເດັຈພຣະຈຸລຈອມເກົ້າ ໂປຣດໃຫ້ພຣະວົງຄ໌ສເດັຈລ່ວງໜ້າຂຶ້ນໄປກ່ອນກອງທັພ ພຣະຍາພິໄຊຍ໌ (ມິ່ງ). ແລະພຣະຍາສຸໂຂໄທຍ໌ (ຄຸທາ).

ປີມົດ ຈ.ສ. ໑໒໔໕ ເດືອນ ໗ ຂ້າງຂຶ້ນ ສົມເດັຈພຣະເຈົ້າຢູ່ຫົວ ຯ ໂປຣດໃຫ້ພຣະວົງຄ໌ເປັນນາຍທັພເມືອນຳພຣະຍາສຸໂຂໄທຍ໌ ຕັ້ງທັພສະກັດຢູ່ເມືອງຍູ້ຈົນຮອດຣະດູຝົນຈຶ່ງເລີກທັພກັບລົງມາເມືອງຫລວງພຣະບາງ. ເດືອນ ໑໑ ຂ້າງຂຶ້ນ ສົມເດັຈພຣະເຈົ້າຢູ່ຫົວ ຯ ໂປຣດໃຫ້ພຣະວົງເປັນແມ່ທັພ ພາເຈົ້າຣາຊບຸດຄຳສຸຂ ເຈົ້າບຸນຄົງ ຂຶ້ນໄປນຳກອງທັພພຣະຍາຣາຊວະຣາມຸກູລ (ເວກບຸລລະຣັຕພັນທຸ໌) ພຣະຍາພິໄຊຍ໌ ແລະພຣະຍາສຸໂຂໄທຍ໌ ຍົກກອງທັພຕີດານທໍ່ໄປຈົນເຖິງທົ່ງຊຽງຄຳ ເຈົ້າລ້ອນຄ້າຍຫໍ້ໄວ້ ແຕ່ຄ້າຍຫໍ້ຄາວນີ້ໄດ້ຕັ້ງມາຊ້ານານ ຈົນເຖິງປູກກົກໄຜ່ບັງເທົ່ານລະນຽດລ້ອມຮອບ ປືນໃຫຍ່ຂອງກອງທັພ

ແມ່ທັພເມື່ອຣົບຫໍ້ທົ່ງຊຽງຄຳ ປີມົດ ຈ.ສ. ໑໒໔໕ ແລ້ວໄດ້ເປັນເຈົ້າພຣະຍາສີສັນນາຄໍຣາຊ.

(໗) ພຣະໄອຍິກາຂອງທ່ານຊື່ເຈົ້ານາງທອງສຸຂ ພຣະຣາຊນັດດາ ສົມເດັຈພຣະເຈົ້າອິນທະວົງຄ໌ ຫຼືພຣະເຈົ້າໄຊຍ໌ເຊຍຖາທິຣາຊທີ ປ ພຣະເຈົ້າລ້ານຊ້າງວຽງຈັນທນ໌.

ໄທຍ໌ບໍ່ສາມາຖຍິງລ້າງກົກໄຜ່ໄດ້, ກອງທັພໄທຍ໌ແລະລາວໄດ້ຍົກເຂົ້າຕີຄ້າຍຫໍ້ຫຼາຍຄັ້ງກໍເຂົ້າຄ້າຍບໍ່ໄດ້ ດ້ວຍພວກຫໍ້ອາໄສກົກໄຜ່ບັງຕົວ ຍິງປືນກວາດອອກມາ ຄັ້ງນຶ່ງ ພຼະຍາຣາຊວະຣານຸກູລຍົກເຂົ້າຕີຄ້າຍຫໍ້ເອງ ເຖິງຖືກປືນຂ້າເສິກທີ່ຂາ ເຈັບປ່ວຍ, ຈຶ່ງສັ່ງໃຫ້ຕັ້ງລ້ອມຄ້າຍຫໍ້ໄວ້ຈົນເຖິງ ໒ ເດືອນ. ທະຫານເກີດປ່ວຍເຈັບດ້ວຍຂັດສົນສບຽງອາຫານ ພຼະຍາຣາຊວະຣານຸກູລ ຈຶ່ງຕ້ອງເລີກທັພໄປທາງເມືອງໜອງຄາຍ ຝ່າຍພຼະອົງຄ໌ເຈົ້າອຸປຣາຊສຸວັຕຕະພຼຫມາ ກໍເລີກທັພກັບລົງມາເມືອງຫຼວງພຼະບາງຈຶ່ງເສັດການປາບຫໍ້ຄັ້ງທີ ໒.

ປີເຣົ້າ ຈ.ສ. ໑໒໔໗ ເດືອນຈຽງຂ້າງຂຶ້ນ ສົມເດັຈພຼະເຈົ້າມະຫິນ ຯ ໂປຼດໃຫ້ພຼະອົງຄ໌ສເດັຈຂຶ້ນໄປຕັ້ງສາງເຂົ້າທີ່ເມືອງງອຍສຳຫຼັບໄວ້ຈ່າຍໃຫ້ກອງທັພນາຍພັນເອກ ເຈົ້າໝື່ນໄວວໍຣະນາຖ[*] (ເຈີມ ແສງຊູໂຕ) ທີ່ຈະຍົກຂຶ້ນໄປ.

ພຼະອົງຄ໌ສເດັຈທິວັງຄົຕໃນສນາມຮົບ ວັນພຸທແຮມ ໕ ຄໍ່າ ເດືອນ ໗ ປີໃຄ້ ຈ.ສ. ໑໒໔໘ ເວລາຕໍ່ສູ້ກັບເດົ້າວັນຕຼີລູກເຈົ້າເມືອງໄລ ຊຶ່ງຄຸມຫໍ້ແລະໄທຍໄລ່ຍົກລົງມາຕີເມືອງຫຼວງພຼະບາງແຕກ ແລະເຜົາບ້ານເມືອງເສັຽ ໃນແຜ່ນດິນສົມເດັຈພຼະເຈົ້າມະຫິນ ຯ. ປຼະມວນພຼະຊົນມາຍຸ ໓໕ ປີ ໄດ້ຮັບພຼະຣາຊທານເຄື່ອງຣາຊອິສຣິຍາພອນຊັ້ນສູງ ດັ່ງຕໍ່ໄປນີ້:

ມົງກຸຏ໌ສຍາມຊັ້ນທີ ໕ ວິຈິຕຼາພອນ ເປັນບຳເໜັຈຄວາມສເດັຈ ເມື່ອປາບຫໍ້ທີ່ບ້ານສູຕແຂວງພວນ ເມື່ອຫຼັງດຳຣົງພຼະຍົສ ເປັນເຈົ້າຣາຊວົງຄ໌.

ຊ້າງເຜືອກສຍາມຊັ້ນທີ່ ໕ ນິພາພອນ ເປັນບຳເໜັຈຄວາມສເດັຈເມື່ອປາບຫໍ້ທີ່ທົ່ງຊຽງຄຳແຂວງພວນ ເມື່ອຫຼັງດຳຣົງພຼະຍົສ ເປັນເຈົ້າອຸປຣາຊ.

ຣາຊໂອຣົສຂອງພຼະອົງຄ໌ ກໍໄດ້ຫຼັງດຳຣົງຖານັນດຣສັກດິ໌ເປັນວັງໜ້າ ສືບພຼະຣາຊສັນຕະຕິວົງຄ໌ແລະເປັນເຈົ້າກູ້ບູ້ຊ້າຣາຊການຊ່ວຍແຜ່ນດິນຕັ້ງແຕ່ປາງໄທຍ໌ສືບມາ ປາງຝຼັ່ງ ຊ່ວຍຫາກັນກີກບັງຄັບໃຫ້ເສັຽສ່ວນ ຕາມບັນຍັດໃນຕຳຣັສເລຂທີ໑໘ມີ

---

[*] ຕໍ່ມາໄດ້ເປັນເຈົ້າພຼະຍາສຸຣະສັກດິ໌ມົນຕີ.

ລົງວັນທີ ໕ ເດືອນປີ ໑໙໔໕ ເໝືອນໄພ່ຣາສດອນກໍ່ຄວນຫຼື? ຈະໄປຖືໂທສວ່າພຼະອົງຄ໌ຣົບທໍ້ບໍ່ຊນະຄັ້ງເມືອງແຕກນັ້ນບໍ່ຄວນເລີຍ. ພຼະອົງຄ໌ກໍ່ສູ້ຣົບດ້ວຍຄວາມສາມາຖ ແລະຣົບດ້ວຍຄວາມອາຈຫາຣ ເມື່ອມາສິ້ນຊີວິດໄປເສັຽເຊັ່ນນີ້ ກໍ່ດ້ວຍລັກຂນະຂອງພຼະອົງຄ໌ ເປັນເຈົ້າອຸປຣາຊ ເປັນຊາຍຊາຕິທະຫາຣກັບດ້ວຍຄວາມຮັກຊາຕິ ດ້ວຍຄວາມເຫຼື້ອມໃສພຼະພຸທຣະສາສນາ ແລະດ້ວຍຄວາມຈົງຮັກພັກດີຕໍ່ພຼະມຫາກະສັຕິຍ໌ ຂໍໃຫ້ພຼະອົງຄ໌ ໄປເກີດທີ່ສຸຂ ຄືສວັຣຄ໌ຊັ້ນຟ້າ ແລະພຼະນິພພານ ໂດຍກຽຕິຍົສຂອງພຼະອົງຄ໌ ຈາຣຶກໄວ້ໃນວົງສາປຼະວັຕິກາຣນີ້ເທີ້ນ. ໑—



ແສນໃໝ່ສຸຂ ບ້ານຄອຍ
ຕາຜ້າຂາວຢູ່ວັດສັງຊ້າໂລກ ອາຍຸ ໙໕ ປີ ຄ.ສ.໑໙໕໗
ເປັນບ່າວປະຈຳອົງຄ໌ເຈົ້າອຸປຣາຊ ສຸວັຕຕະພຸທິທາສາ
ເທົ່າສເດັຈເມືອຣົບຫົວຫາກຄັ້ງ ທັງເປັນພຍ່ານເພີ
ແສສ ເວລາເຫາກນັ້ນດ້ວຍ

ລໍາດັບສກຸລ
ເຈົ້າອຸປຣາຊ ສຸວັທາກະໝຸມາລາ

ເຈົ້າອຸປຣາຊສຸວັຕາກະໝຸມາລາ ມີພະຊາຍາຫ້າມແລະໝ່ອມ ໑໓ ຄົນ ຣາຊໂອຣົສ ໑໘ ອົງ ແລະຣາຊທິດາ ໓໑ ອົງ ດັ່ງແຈ້ງຕໍ່ໄປນີ້:

໑. ເຈົ້າໝ່ອມຄຳບົວ ອັຄຄະອີຣາຊະເທວີບ້ານປ່າໄຜ່ ມີບຸຕຊາຍ ຊື່ເຈົ້າບຸນຄົງ ບຸຕຍິງຊື່ເຈົ້າອຳພັນທ໌ ເກີດບາງຍີຂັນຈັງຫວັດທົນບູຣີ. ເຈົ້າໄຊຍ໌ວະດີ ເກີດທາກວີນ້ຳນານເມືອງໄທຍ໌ ເຈົ້າດວງຈັນທຣ໌ ເຈົ້າຣັຕນະວະດີ ແລະເຈົ້າດວງເກສ.

໒. ເຈົ້າຄຳອິນ ມີບຸຕຍິງຊື່ເຈົ້າສົມທະຣີ ເຈົ້າທາວີວັສຕ໌ ແລະເຈົ້າສຸນິຕພາ ບຸຕຊາຍຊື່ເຈົ້າສຸວັຕາກະພາລົມ ເຈົ້າໂສມຣັກຂະເພາະວົງສ໌ ແລະເຈົ້າສີສົມພະໂນຣົສ.

໓. ເຈົ້າຄຳປ້ອງ ມີບຸຕຊາຍຊື່ເຈົ້າລະນະອຸດົມ ແລະເຈົ້າສຸຣິນທຣ ບຸຕຍິງຊື່ເຈົ້າສີໄວຍະມາສ ແລະເຈົ້າຈິນດາຣັສມີ.

໔. ເຈົ້າໝູຈິນ ມີບຸຕຍິງຊື່ເຈົ້າມັງຄະລະວະດີ ບຸຕຊາຍຊື່ເຈົ້າສີວັຒນາຈັນທຣ໌.

໕. ເຈົ້າປິ່ນຄຳ ມີບຸຕຍິງຊື່ເຈົ້າສຸນິມນາຣີ ເຈົ້າມະນີສາຄອນ ແລະເຈົ້າມະນີຈັນດາ ບຸຕຊາຍຊື່ເຈົ້າສີວິລາວັນ ແລະເຈົ້າບຸລລະສາຣ.

໖. ເຈົ້າຄຳຊາວ ມີບຸຕຊາຍຊື່ເຈົ້າທັມມະຈິຕີ ບຸຕຍິງຊື່ເຈົ້າຫຸມມະດີ ເຈົ້າທິພຍ໌ເກສຣ ເຈົ້າຄັນທາຣັຕນາ ແລະເຈົ້າສມຸທສາຄອນ໌ ຫຼືເຈົ້າໝ່ນແກ້ວ.

໗- ໝ່ອມເບົ້າ ມີບຸຕຊາຍຊື່ເຈົ້າກິນກາວົງສ໌ ເຈົ້າຣາຊານຸວັຕິ ແລະເຈົ້າຂັຕຕິຍະວົງສ໌.

໘- ໝ່ອມຍອງ ມີບຸຕຍິງຊື່ເຈົ້າດວງຄຳ ເຈົ້າສົມມາວະດີ ເຈົ້າໂສມຣັສມີ ເຈົ້າບຸສມາຣີ ເຈົ້າມະນີວັສຕ໌ ແລະເຈົ້າເກສແກ້ວມຸງຄຸນ ບຸຕຊາຍຊື່ເຈົ້າສຸດາເດຊ.

໙. ທ່ານນາງຄຳສີ ມີບຸດຍິງຊື່ເຈົ້າຈັນທະລາສີ ບຸດຊາຍຊື່ເຈົ້າ ວາຊາວະດີ ແລະເຈົ້າສີສົມສະອາດ.

໑໐. ທ່ານນາງສຸຂ ມີບຸດຍິງຊື່ເຈົ້າສຸວັດທະນາໄລຍ໌ອີກຄົນໜຶ່ງ.

໑໑. ທ່ານນາງຈັນທີ ມີບຸດຊາຍຊື່ເຈົ້າສຸຣິວົງສ໌ ບຸດຍິງຊື່ເຈົ້າ ສຸດາຈັນທຣ໌.

໑໒. ທ່ານນາງບຸສີ ມີບຸດຍິງຊື່ເຈົ້າດວງສາໄລຍ໌ ເຈົ້າຄຳແວ່ນ ແລະເຈົ້າເຫຼັງສາດ ບຸດຊາຍຊື່ເຈົ້າສິງຫະພາຫາ ແລະເຈົ້າທັມມະ ທາດາ.

໑໓. ທ່ານນາງຜຸຍ ມີບຸດຍິງຊື່ເຈົ້າມະຕິຈັນທຣ໌ອີກຄົນໜຶ່ງ.

ບທທີ ໑

ກ. ເຈົ້າບຸນຄົງ ໄດ້ເປັນເຈົ້າມະຫາອຸປຣາຊ ເອົາເມັຽມີລູກ ຈະກ່າວໄວ້ຕອນທີ ໕ ຕໍ່ໄປ.

ຂ. ເຈົ້າຄຳພັນທ໌ ເອົາຜົວຊື່ເຈົ້າບຸລົມ ລູກເຈົ້າກິມຕ່າຣວງ (?) ບໍ່ມີລູກ ຜົວຕາຍປະເລີ້ວ ອອກບວຊເປັນທີ່ກາຊາດີ ຢູ່ວັດສີສັນ ສະຫາຍໄສກຣາຊ ສິ້ນພຣະຊົນມ໌ ປີສີ ຈ,ສ, ໑໒໕໕.

ຄ. ເຈົ້າໄຊຍ໌ວະດີ ເອົາຜົວຊື່ເຈົ້າຄຳປານ ລູກເຈົ້າກິມສີພາຍ (?) ບໍ່ມີລູກ ຜົວຕາຍປະເລີ້ວໄປຢູ່ໂຮງເຈົ້າຣັຕນະວະດີ ສິ້ນພຣະຊົນມ໌ ປີເຮົ້າ ຈ,ສ, ໑໒໗໑.

ງ. ເຈົ້າດວງຈັນທຣ໌ ບໍ່ທັນໄດ້ຜົວ ສິ້ນພຣະຊົນມ໌ ອາຍຸ໑໒ປີ.

ຈ. ເຈົ້າຣັຕນະວະດີ ເອົາຜົວຊື່ເຈົ້າວົງກົດ ລູກເຈົ້າກິມພຣະທ່ານ ຄຳເຫຼັກແລະທ່ານນາງແວ່ນມີລູກຊາຍຊື່ເຈົ້າຄຳໝັ້ນ ເຈົ້າສິງຫ໌ຄຳ ແລະເຈົ້າສົມເກົ້າ ລູກຍິງຊື່ເຈົ້າຂັນຄຳແລະເຈົ້າສຸພັດຕາຫາ. ເຈົ້າຣັຕນະວະດີ ສິ້ນພຣະຊົນມ໌ວັນເສົາຣ໌ຈ່ຳເຮີນເດືອນ໙ ປີສງ້າ ຈ,ສ ໑໒໙໖ ຕົງວັນທີ ໕ ອຸຕ ໑໙໓໐ ຣາຊການຝ່າຍໄດ້ສັ່ງທະຫານຣັກສາເມືອງສົ່ງ ໂຫຼຍສາເຫົ່າສີ່ພາໄປສູ່ເມຣຸເດີນທົ່ວຫຼວງ.

໑. ເຈົ້າຄຳໝັ້ນ ເອົາເມັຽຊື່ເຈົ້າສຽງຄຳ ພຣະທິດາເຈົ້າມະຫາອຸປຣາຊບຸນຄົງແລະເຈົ້າທອງສີ ມີລູກຊາຍຕ່ອງຊື່ເຈົ້າສົມສນິທ. ມີລູກຊາຍຕ່ອງນ່າສາວຄຳຕັນຊື່ເຈົ້າວັດທາທອງ. ມີລູກຊາຍຕ່ອງນ່າສາວທອງຊື່ນາຍອ້ວນ. ຕ່ອງນີ້ເອົາທ່ານນາງພູມມີ, ລູກຜູ້ດີແລະສາວຈັນທຣ໌ ບ້ານທາດຫຼວງ ມີລູກຍິງຊື່ເຈົ້າຄຳພັນທ໌ ເຈົ້າຄຳຜຸຍ. ເຈົ້າ

ຄຳຜອງ ແລະເຈົ້າຄຳແພງ. ເຈົ້າຄຳໝັ້ນໄດ້ສຶກສາວິຊາຢູ່ໂຮງຮຽນຝຣັ່ງລາວເມືອງຫຼວງພຣະບາງອອກໄປເປັນສມຽນລ່ວມຢູ່ບໍຣິສັທເຮືອເມຝຣັ່ງເສດໄດ້ ໑໐ ປີ, ລາອອກໄປທຳຣາຊການກົມມະຫາດໄທຍ໌ທຳສນາມຫຼວງ ໔ ເດືອນ, ກົມຣາຊເລຂາທິການພຣະຣາຊວັງຫຼວງ ໕ ປີ ໗ ເດືອນ, ກົມຍຸຕິທັມແລະທັມມະການທຳສນາມຫຼວງ ໓ ປີ ໖ ເດືອນ, ກະຊວງປົກຄອງຣາຊການລາວເມືອງວຽງຈັນທນ໌ ໖ ປີ ໘ ເດືອນ, ຫົວໜ້າສາລລາວເມືອງວຽງຈັນທນ໌ ໑ ປີ ໖ ເດືອນ. ໃນຣະຫວ່າງທຳຣາຊການຢູ່ເມືອງວຽງຈັນທນ໌ໄດ້ເປັນຜູ້ກຳກັບແລ້ວ ເປັນຫົວໜ້າໝູ່ທລະສາສນະບັຕຫີຕ ໕ ປີ. ປາງເສິກໄທຍ໌ໄດ້ຖືກແຕ່ງຕັ້ງໄປເປັນຫົວໜ້າຈັດເສນາຕ່າງຢູ່ເມືອງກາສີ ໔ ເດືອນ ໄດ້ຮັບບຳເໜັຈເລື່ອນຊັ້ນເປັນເຈົ້າເມືອງຊັ້ນ ໓ ໂດຍພິເສສ. ອາຍຸໄດ້ ໔໕ ປີຣາຊການໃຫ້ອອກໄປຮັບເບັ້ຍລ້ຽງປຣະຈຳປີ ໄດ້ ໓ ເດືອນເມື່ອບ້ານເມືອງວຸ້ນວາຍ ຖືກເກນເຂົ້າໄປທຳຣາຊການອີກ (໑) ໃຫ້ເປັນຫົວໜ້າຈັດສບຽງແລະຈ່າຍເງິນໃຫ້ກຸລີເຂົ້າທຳການຝ່າຍໂຍທາ, ເປັນເລຂານຸການປຣະຈຳໝູ່ທລະສາສນະບັຕຫີຕ, ເປັນຫົວໜ້າຈັດເສທາງນ້ຳຫຼວງພຣະບາງ-ວຽງຈັນທນ໌ ຫ້ວຍຊາຍ ເມືອງຂວາ ແລະປາກເຊ, ເປັນຫົວໜ້າໂຍທາໂຫສບານ. ຄັນບ້ານເມືອງສງົບແລ້ວ ຣາຊການໃຫ້ອອກຄືນໄປຮັບເບັ້ຍລ້ຽງປຣະຈຳປີອີກ ຕັ້ງໃຫ້ເປັນຕລາການນັ່ງສາລຊັ້ນ ໑ ປຣະຈຳແຂວງຫຼວງພຣະບາງ (໒) ຂນະບ້ານເມືອງອຶດຢາກໝາກກິນເຂົ້າແພງ ຖືກຄັດເລືອກຕັ້ງເປັນຫົວໜ້າຊາວນາໄດ້ ໓ ປີ. ອາຍຸ ໖໐ ປີນີ້ໄດ້ຮັບຄຳເຊີນກຣະຊວງທັມມະການຖວາຍຕົວເປັນທານໃຫ້ແກ່ຊາຕິສາສນາ ສາເປັນເລຂານຸການໝູ່ທລະບັຕຫີຕສພາອານາຈັກຣ໌ລາວຢູ່ເມືອງວຽງຈັນທນ໌.

ກ. ເຈົ້າສົມສນິທ ເອົາເມັຽຊື່ເຈົ້າຄຳຜິວພຣະທິດາເຈົ້າມະຫາອຸປຣາຊເພັຊຣາຊແລະເຈົ້າຄຳເວັນບໍ່ມີລູກ. ເມັຽຕາຍປະແລ້ວໄປເອົາເຈົ້າຄຳອີນລູກເຈົ້າປັຍຍາທິພຍ໌ແລະໝ່ອມຄຳອ້ວນມີລູກໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊອຸ່ນແກ້ວ ບົທທີ ໓ ໝວດ ກ ເລຂ ໒ ຕົວ ຂ ນັ້ນແລ້ວ. ເຈົ້າສົມສນິທໄດ້ສຶກສາທີ່ໂຮງຮຽນຣັຖປຣະສາດລາວເມືອງວຽງຈັນທນ໌ ເປັນເຈົ້າເມືອງວຽງຈັນ ເປັນຣັຖມົນຕຣີກຣະຊວງມະຫາດໄທຍ໌ແລະຍຸຕິທັມ ໃນສມັຍປຣະເທສລາວອິສສຣະ ໜີໄປເມືອງໄທຍ໌.

---

(໑) ພຣະຣາຊໂອງການເລຂທີ 4 ລົງວັນທີ 31 ມກຣາ 1945.

(໒) " 49 " 4 ມີນາ 1946.

ຂ. ເຈົ້າວັກຕ໌ທອງ ເອົາເມັຽຊື່ນາງຂັນທະລີເມືອງວຽງຈັນທ໌ ມີລູກຊາຍຊື່ເຈົ້າໃພລີຄຳ ເຈົ້າໃພລີເງິນ ເຈົ້າໃພລີທອງ. ເຈົ້າວັກຕ໌ທອງໄດ້ສຶກສາທີ່ໂຮງຮຽນຫັຖກັມ໌ເມືອງວຽງຈັນທ໌ ເປັນຊ່າງເຕັມຝ່າຍໂຍທາ ແລ້ວລາອອກໄປເປັນຄູ.

ຄ. ນາຍອ້ວນ ເອົາເມັຽຊື່ສາວຄຳພັນສ໌ ລູກນາຍງວນວັນກັນ ແລະສາວເຂັມມາ ມີລູກຍິງຊື່ນາງຄຳເພັງ ນາງຄຳຜຸຍ ນາງຄຳເຜີ້ວ ນາງຄຳຜູ, ນາງວັຒນາ ນາງມະເຫົວຣ ລູກຊາຍຊື່ທ້າວອຳພອຣສວັສດີ ທ້າວພຸທຣຜົລ. ນາຍອ້ວນ ໄດ້ສຶກສາທີ່ໂຮງຮຽນປະຖົມສຶກສາເມືອງຫລວງພຣະບາງ ເປັນຄູສອນຢູ່ແຂວງຫົວພັນ ໑໕ ປີ ຍ້າຍໄປເປັນຫົວໜ້າໂຮງຮຽນອົບຣົມຄູ ບ້ານສີໄຄ ເມືອງວຽງຈັນທ໌ ດຽວນີ້ເປັນສາລະວັດໂຮງຮຽນແຂວງຫົວຂອງຢູ່ເມືອງຫລວງນ້ຳທາ. ນາງຄຳເພັງ ນາງຄຳຜຸຍ ເປັນຄູສອນ.

ງ. ເຈົ້າຄຳພັນສ໌ ໄປສຶກສາວິຊາທີ່ໂຮງຮຽນແພທຍ໌ສາຕຣ (Ecole des sages femmes) ເມືອງຮາໂນຍ ເປັນນາງຜຸ່ນຕຳແຍ ເຖິງແກ່ກັມມ໌ທີ່ເມືອງວຽງຈັນທ໌ ວັນພຸດຂຶ້ນ ໕ ຄ່ຳ ເດືອນ ໗ ປີເສັດ ຈ,ສ, ໑໓໐໗ ຕຽງວັນທີ ໓ ຊູຍເຢ ໑໙໔໕ ດ້ວຍວັຕຕະໂຣຄ.

ຈ. ເຈົ້າຄຳຜຸຍ ໄດ້ສຶກສາທີ່ໂຮງຮຽນປະຖົມສຶກສາເມືອງວຽງຈັນທ໌ ທຳຣາຊການຝ່າຍໂຍທາເມືອງຫລວງພຣະບາງ.

ສ. ເຈົ້າຄຳຜອງ ໄດ້ສຶກສາທີ່ໂຮງຮຽນມັທຍົມປາວີເມືອງວຽງຈັນທ໌ ເອົາຜົວຊື່ເຈົ້າຄຳຜາຍ ລູກເຈົ້າຈິຕຣາຊ ແລະເຈົ້າສຸວັຕຕະນາຣີ ມີລູກຍິງຊື່ເຈົ້າຄຳເຜີດ. ເຈົ້າຄຳຜອງ ທຳຣາຊການຝ່າຍໂຍທາເມືອງຫລວງພຣະບາງ.

ຊ. ເຈົ້າຄຳເພັງ ໄດ້ສຶກສາທີ່ໂຮງຮຽນມັທຍົມປາວີເມືອງວຽງຈັນທ໌ ເອົາຜົວຊື່ຕຸເລັ່ງລູກລີໝຸ່ ແລະນາງຈ່າງບ້ານໜອງແຮດ ຕາແສງເກົ້າຄວາຍ ແຂວງພວນ ມີລູກຊາຍຊື່ ອະເຣີຍາ ອາຣິນຍາ ອາຣຸນນາ.

* ຍ. ເຈົ້າສິງຫ໌ຄຳ ມີລູກຊາຍດຽວນຳນາງບົວພັນສ໌ເມືອງວຽງຈັນທ໌ ຊື່ເຈົ້າສິງຫ໌ສົມທ. ປະນາງບົວພັນສ໌ໄປເອົາເຈົ້າຣັຕນສວັສດີ ລູກເຈົ້າຣາຊາວະດີແລະເຈົ້າດາວຈັນທຣ໌ ມີລູກຍິງດຽວຊື່ເຈົ້າສີສຸງວັນ. ເຈົ້າສິງຫ໌ຄຳ ໄດ້ໄປສຶກສາວິຊາທີ່ໂຮງຮຽນ

ປກ

ແພທຍ໌ສາຕຼ (École de médecine) ເມືອງຮາໂນຍ ອອກມາເປັນແພທຍ໌ອິນດູຈີນ ໄດ້ໄປປະຈຳການຢູ່ເມືອງວຽງຈັນທນ໌, ເມືອງທ່າແຂກ, ເມືອງຊ່ຳເໜືອ, ບໍ່ກົວໂພນຕີ້ວ, ເມືອງບໍ່ແກ້ວ, ເມືອງເຊໂປນ, ໄດ້ຮັບພຣະຣາຊທານບັນດາສັກດິ໌ ເປັນເຈົ້າກູ້ມພຣະຍົມ ແລ້ວມາເປັນຫົວໜ້າໂຮງພະຍາບາລເມືອງວຽງຈັນທນ໌. ໄດ້ຮັບຕຼາອິສສຣິຍາພຣນ໌ຝຼັ່ງເສສເລຢົງດົນເນີຣ໌ຊັ້ນ ໕.

ກ. ເຈົ້າສິງຫ໌ສມຸທ ເອົາເມັຽຊື່ເຈົ້າມະຫາໄຊຍ໌ຯ ລູກເຈົ້າສິງຫະນາທແລະນາງສຸຂເມືອງວຽງຈັນທນ໌.

ຂ. ເຈົ້າສິງຫ໌ແກ້ວ ເອົາເມັຽທີ ໑ ຊື່ເຈົ້າສຸດາຈັນທຣ໌ ລູກເຈົ້າພົມມາແລະເຈົ້າບຸສບາຣີ, ມີລູກຍິງຊື່ເຈົ້າວັທທກ໌ຄຳ ລູກຊາຍຊື່ເຈົ້າສົມສວາທ, ເມັຽທີ ໒ ຊື່ເຈົ້ານວນລູກເຈົ້າເພຊຣ໌ ແລະສາວທອງດີ ມີລູກຊາຍຊື່ເຈົ້າແກ້ວມະນີວົງສ໌, ເມັຽທີ ໓ ຊື່ເຈົ້າຈັນທີລູກເຈົ້າຣາຊວົງສ໌ສີສຸພັນທ໌ ແລະເຈົ້າອິນ ບໍ່ມີລູກ. ເຈົ້າສິງຫ໌ແກ້ວໄດ້ໄປສຶກສາວິຊາທີ່ໂຮງຮຽນແພທຍ໌ສາຕຼເມືອງຮາໂນຍ ອອກມາເປັນແພທຍ໌ອິນດູຈີນ, ໄດ້ໄປປະຈຳການຢູ່ເມືອງວຽງຈັນທນ໌, ເມືອງປາກເຊ, ເມືອງພົງສາລີ, ເມືອງສິງຫ໌, ເມືອງບໍ່ແກ້ວ, ບໍ່ກົວໂພນຕີ້ວ, ເມືອງຊຽງຂວາງ, ໄດ້ຮັບພຣະຣາຊທານບັນດາສັກດິ໌ເປັນເຈົ້າກູ້ມສີແພທຍ໌ພັກດີ, ເປັນຫົວໜ້າໂຮງພະຍາບາລເມືອງຫຼວງພຣະບາງ. ເປັນແພທຍ໌ປະຈຳອົງຄ໌ສົມເດັຈພຣະເຈົ້າສີສວ່າງວົງສ໌ສເດັຈໄປຣັກສາສຸຂພາບ ທີ່ເມືອງວິດແຕນ (Vittel) ປະເທສຝຼັ່ງເສສ. ໄດ້ຮັບຕຼາອິສສຣິຍາພຣນ໌ຝຼັ່ງເສສເລຢົງດົນເນີຣ໌ຊັ້ນ ໕.

ຄ. ເຈົ້າວັທທກ໌ຄຳ ເອົາຜົວຊື່ເຈົ້າສຸພັນທະຣາສີ ພຣະຣາຊບຸດສົມເດັຈພຣະເຈົ້າສີສວ່າງວົງສ໌ແລະສົມເດັຈພຣະມະຫາສີຄຳອ້ວນ ມີລູກຊາຍຊື່ເຈົ້າສຸພັນທະວົງສ໌ ລູກຍິງຊື່ເຈົ້າພັນທ໌ ເຈົ້າອ້ວນ ເຈົ້າອິນຄຳ ເຈົ້າສຸວັທກ໌ ເຈົ້າປາຣີ ເຈົ້າຈັນຖນອມ.

໔. ເຈົ້າຂັນຄຳ ເອົາຜົວຊື່ເຈົ້າອຸ່ນລູກເຈົ້າຄຳເຖົາ ແລະໝ່ອມພຣະກົວລາ ມີລູກຍິງຊື່ເຈົ້າເຂັມຄຳ. ປະເຈົ້າອຸ່ນໄປເອົາເຈົ້າສມຸທຊາຍຄຳ ພຣະໂອຣສເຈົ້າມະຫາອຸປຣາຊບຸນຄົງ ແລະເຈົ້າຄຳຄູນ ມີລູກຍິງຊື່ເຈົ້າຄຳເດີງ.

* ກ. ເຈົ້າເຂັນຄຳ ເອົາຜົວຊື່ເຈົ້າສິນທະວົງສ໌ເພຍຫຍໍພຍາບາລູສັຕຕ໌ລູກເຈົ້າຄຳໂງ່ນແລະນາງເພສເຈົ້າເມືອງຊຽງຂວາງ ມີລູກຊາຍຊື່ເຈົ້າສີນາໄຊຍ໌ຊຸມະ ເຈົ້າສີນາໄຊຍ໌ສົມມ ເຈົ້າສີນາໄຊຍ໌ຣັຕນະ ລູກຍິງຊື່ເຈົ້າສີນາໄຊຍ໌ສວາທ ສີນາໄຊຍ໌ສຽວ.

ຂ. ເຈົ້າຄຳເຫຼັຽເປັນຍິງໂສດ ເຖິງແກ່ກັມມ໌ວັນອາທິຕຍ໌ແຮມ໘ຄ່ຳເດືອນ໗ ປີສັນ ຈ,ສ, ໑໓໐໖ ຕົງວັນທີ໑໒ ຈູ່ງ ໑໙໔໓.

ຄ. ເຈົ້າສຸມິຕາທາ ໄດ້ໄປສຶກສາວິຊາທີ່ໂຮງຮຽນຊັ້ນສູງສັ່ງຝຣັ່ງເສສເມືອງໄຊງ່ອນ ໜີໄປຢູ່ເມືອງຈຳປາສັກກ໌.

ງ. ເຈົ້າດວງເພສ ເອົາຜົວຊື່ເຈົ້າອິນທຣ໌ມີລູກຍິງຊື່ເຈົ້າຄຳຈັນແລະເຈົ້າດວງຈັນທຣ໌. ຜົວຕາຍປະແລ້ວ ໄປເອົາເຈົ້າກົມຕຳຣວຈຂວາຈັກກະວັຕີບໍ່ມີລູກ. ເຈົ້າດວງເພສສິ້ນພຣະຊົນມ໌ທີ່ໂຮງບ້ານໃໝ່ ວັນອາທິຕຍ໌ແຮມ໑໑ຄ່ຳເດືອນຍີ່ ປີສງ້າ ຈ,ສ, ໑໓໐໔ ຕົງວັນທີ ໓໑ ຈູ່ວິເຢ ໑໙໔໓.

ຈ. ເຈົ້າຄຳອິ່ນ ເອົາຜົວຊື່ເຈົ້າກູ້ນມະຫາດເລັກຊ້າຍຄຳຕັນພຣະຣາຊບຸຕສົມເດັຈພຣະເຈົ້າມະຫິນ ໆ ບໍ່ມີລູກ.

ສ. ເຈົ້າດວງຈັນທຣ໌ ເອົາຜົວຊື່ເຈົ້າຣາຊາວະດີ ພຣະໂອຣົສເຈົ້າອຸປຣາຊສຸວັຕຕະພົມທານາແລະໝ່ອມກອງສີ ມີລູກຍິງຊື່ເຈົ້າຣັຫລີສວັສດີ ເຈົ້າດວງຄຳລູກຊາຍຊື່ເຈົ້າຈັນທະວະດີແລະເຈົ້າສີສວັສດີ໌.

ກ. ເຈົ້າຣັຫລີສວັສດີ ເອົາຜົວຊື່ເຈົ້າສິງຫ໌ຄຳ ມີລູກຍິງດຽວຊື່ເຈົ້າສີສຽວມ ໄດ້ກ່າວໄວ້ໝວດຄຂ ເລຂ໖ ນັ້ນແລ້ວ.

* ຂ. ເຈົ້າດວງຄຳ ເອົາຜົວຊື່ເຈົ້າສີສຸພັນບຸຕເຈົ້າຣາຊສັມພັນສະວົງສ໌ສີສເລີມສັກດ໌ ແລະເຈົ້າສງ່າຄຳ ມີລູກຍິງຊື່ເຈົ້າສີນວນຄຳ ເຈົ້າບຸນມີ ເຈົ້າສີອາຣຸນ ລູກຊາຍຊື່ເຈົ້າມະຕີວົງສ໌ໜີໄປນຳຜົວເມືອງໄທຍ໌ໃນສມັຍປະເທສລາວອິສສຣະ.

ຄ. ເຈົ້າຈັນທະວະດີ ເອົາເມັຽຊື່ເຈົ້າຄຳຜິວ ລູກເຈົ້າຄຳເຫຼັກພາສຸຂແລະໝ່ອມເພັຽ ມີລູກຊາຍຊື່ເຈົ້າຈັນທາວົງສ໌ເຈົ້າໄຊຍ໌ສວັສດີ໌ ເຈົ້າຈັນທະວັຕ.

ງ. ເຈົ້າສີສວັສດີ໌ ເອົາເມັຽຊື່ເຈົ້າບຸນລະຣັຕນາ ມີລູກຍິງຊື່ເຈົ້າສີອຳພອນ ເຈົ້າສີວາວຣ ໄດ້ກ່າວໄວ້ໃນສກຸລເຈົ້າອຸປປະຣາຊອຸ່ນແກ້ວ ບົທທີ໖ ໝວດ ຄ ກ ເລຂ໕ ຫົວ ກ ບໍ່ມີໝາຍນັ້ນແລ້ວ.

ບົທທີ ໒.

ຖ. ເຈົ້າສົມຫາຣີ ເອົາຜົວຊື່ເຈົ້າຄຳດີ ພຣະໂອຣົສເຈົ້າອຸປຮາຊ ຄຳບົວ ມີລູກຊາຍຊື່ເຈົ້າໄຊຍະສານ ລູກຍິງຊື່ເຈົ້າຄຳດວນ. ເຈົ້າສົມຫາຣີສິ້ນພຣະຊົນມ໌ ປີໃດ໌ ຈ,ສ,໑໒໔໙.

໑. ເຈົ້າໄຊຍະສານ ເອົາເມັຽທີ ໑ ຊື່ໝ່ອມບຸນຊາຕີໄທຍ໌ ມີລູກຍິງຊື່ເຈົ້າວິສານ. ປະໝ່ອມບຸນໄປເອົາໝ່ອມປອ້ງ ມີລູກຊາຍຊື່ເຈົ້າວັທທ໌ ເຈົ້າດວງຈັນທຣ໌ ເຈົ້າຄຳໝັ້ນ ລູກຍິງຊື່ເຈົ້າອິ່ມ. ເຈົ້າໄຊຍະສານໄດ້ສເດັຈໄປສຶກສາວິຊາທີ່ໂຮງຮຽນສວນກຸຫລາບກຸງເທພ. ເປັນສມຽນຢູ່ທີ່ວ່າ[illegible]ານຸການແຂວງຝັ່ງຊວາ ທີ່ຕັ້ງປຸ່ເຫັ້ງທ່າຄືກ ເຮືອບ້ານຢູ່ແນນ ຈົນເຖິງໄດ້ເປັນເຈົ້າເມືອງປຖຸມວັນ ປຣຕຽງອະສີບໍດີກົມມະຫາດໄທຍ໌, ໄດ້ຮັບພຣະຣາຊທານບັນດາສັກດິ໌ ເປັນເຈົ້າກົມມສີທີໄຊຍະສັກດິ໌ວົງສາ ຣາຊການໃຫ້ອອກໄປຮັບເບ້ຽລ້ຽງປຣະຈຳປີຢູ່ບ້ານຊຽງມ່ວນ.

ກ. ເຈົ້າວິສານ ເອົາຜົວຊື່ເຈົ້າສຸວັທທ໌ ລູກເຈົ້າ~~ຄຳເຫຼົ້າ~~ ພຸຍດ ແລະເຈົ້າຈັນສມຸທ ບໍ່ມີລູກປະກັນ.

ຂ. ເຈົ້າວັທທ໌ ເອົາເມັຽຊື່ເຈົ້າທອງຈັນ ລູກເຈົ້າບັລລ, ທິພຍ໌ ແລະເຈົ້າຄຳຜຸຍ ມີລູກໄດ້ກ່າວໄວ້ໃນສກຸລເຈົ້າອຸປຮາຊ ອຸ່ນແກ້ວ ບົທທີ ມີ ໝວດ ກ. ເລຂ ໒ ຕອນ ກ ນັ້ນແລ້ວ ເມັຽຕາຍ ແລ້ວໄປເອົາໝ່ອມຈັນສີ ມີລູກຊາຍ ໕ ຄົນ ຊື່ເຈົ້າວັທທ໌ທາງ ໕.

ຄ. ເຈົ້າດວງຈັນທຣ໌ ເອົາເມັຽໄທຍ໌ຊື່ຄຸຕຍ້ອມ ມີລູກບໍ່ຮູ້ຊື່ ເປັນຄູສອນໜີໄປເມືອງໄທຍ໌.

ງ. ເຈົ້າຄຳໝັ້ນ ເອົາເມັຽຊື່ເຈົ້າປີນລູກເຈົ້າງາຄຳ ແລະເຈົ້າຄຳຮຽງ ມີລູກຊາຍຊື່ເຈົ້າສຸພັນນຸວົງສ໌ ເຈົ້າຣັສມີສີຣິນະ ເຈົ້າສຸພັນນະວົງສ໌ ລູກຍິງຊື່ເຈົ້າສຸວັທທະນາຣີ ເຈົ້າສຸວັທທະດາຣາ ເຈົ້າສຸວັທທະຈິນດາ. ເຈົ້າຄຳໝັ້ນເປັນຄູ.

ຈ. ເຈົ້າອິ່ມ ເປັນຫ້າມສົມເດັຈພຣະເຈົ້າສີສວ່າງວົງສ໌ ມີພຣະຣາຊບຸຕຣຊື່ເຈົ້າໄຊຍ໌ ເຈົ້າມັງຄລະນະຕີວົງສ໌.

໒. ເຈົ້າຄຳດວນ ໜີໄປເມືອງໄທຍ໌ບວຊເປັນພິກຂຸຕີ ຢູ່ວັດບໍວໍຣະມົງຄົລ ກຸງທົນບູຣີ.

ຂ. ເຈົ້າມາວິວັດກ໌ ສິ້ນພຼະຊົນມ໌ແຕ່ປະຖົມໄວຍ໌.

ຄ. ເຈົ້າສຸນິກາພາ ສິ້ນພຼະຊົນມ໌ອາຍຸໄດ້ ໑໐ ປີ.

ງ. ເຈົ້າສຸວັດທະນາວລີ ສິ້ນພຼະຊົນມ໌ ອາຍຸໄດ້ ໙ ປີ.

ຈ. ເຈົ້າໄສນຣັກຂະເດະວົງສ໌ ເອົານ້ອງສາວຕ່າງເຫົ້າເປັນເມັຽ ຊື່ເຈົ້າມະຕີຈັນທຣ໌ ມີລູກຍິງຊື່ເຈົ້າຂຳ ລູກຊາຍຊື່ເຈົ້າຈັນທຣ໌ສວ່າງ. ເມັຽຕາຍແລ້ວໄປເອົາເຈົ້າສຸວັດທະນະອາໄລຍ໌ ນ້ອງສາວຕ່າງເຫົ້າເປັນເມັຽ ມີລູກຍິງຊື່ເຈົ້າຄຳໃບ ລູກຊາຍຊື່ເຈົ້າສຸພັນທະຣັງສີ ເຈົ້າຕົນ ເຈົ້າວົງສ໌ແລະເຈົ້າເພັງ. ເຈົ້າໄສນຣັກຂເດະວົງສ໌ໄດ້ສເດັຈໄປສຶກສາ ວິຊາທີ່ໂຮງຮຽນນາຍຮ້ອຍທະຫາຣບົກກຼຸງເທພ ເປັນນາຍຮ້ອຍໂທ ໄດ້ຮັບດວງຕຼາອິສສຣິຍາພຣນ໌ມົງກຸຕສຍາມຊັ້ນທີ ໕. ບາງຜູ້ເປັນຜູ້ຮອງພຼະຍາມະຫາເສນາ(ຊຽງພັນບ້ານຊຽງແສນ) ຫົວໜ້າທີ່ຈ່າຣາຊການ ແຂວງຝັ່ງຂວາທີ່ຕັ້ງຢູ່ເທິງທ່າຄົກເຮືອບ້ານຊຽງແສນເປັນພຼະນັກງານກົງສູລຝຼັ່ງແສສປຼະຈຳເມືອງນ່ານ, ນາຍແຂວງກ່າເພງເມືອງ, ເລຂານຸການເຈົ້າມະຫາອຸປຣາຊບຸນຄົງໄປປັກປັນເຂຕແດນ ແຂວງຝັ່ງຂວານຳຝຼັ່ງແສສກັບໄທຍ໌, ນາຍແຂວງເມືອງຫົງສາປ່ວຍ ເປັນໂຣຄຂຶ້ນໃນດວງຕາ ຣາຊການໃຫ້ອອກບໍ່ໄດ້ຮັບພຼະຣາຊທານ ເບັ້ຽລ້ຽງປຼະຈຳປີ ມີຄວາມທຸກຂ໌ຍາກຈຶ່ງໄປຮັບຈ້າງເປັນນາຍ ຄຸມເຮືອເມຫຼວງພຼະບາງວຽງຈັນທນ໌, ແລ້ວລາອອກເພາະເຖົ້າ ແກ່ຊຣາ. ເລີຍຖືກຄັດເລືອກເປັນສມາຊິກກອງປະຊຸມປຶກສາ ຣາຊການພື້ນເມືອງປຼະເທສລາວ, ໄດ້ລົງໄປປຼະຊຸມຣາຊການເມືອງ ວຽງຈັນທນ໌ ປີ ໑໙໒໘ ແລະ ໑໙໒໙. ສິ້ນພຼະຊົນມ໌ທີ່ໂຮງຮ້ອນກົກ ສັກ ວັນອັງຄານແຮມ ໑໔ ຄ່ຳເດືອນ ໔ ປີເສດ ຈ,ສ, ໑໒໙໓ ຕົງວັນ ທີ ໒ ອາວຣິນ ໑໙໓໕.

໑. ເຈົ້າຂຳ ເອົາຜົວຊື່ເຈົ້າເພັຊຣ໌ ລູກເຈົ້າກົມຂຸນຄຳເພັງ ແລະເຈົ້າຄຳຕັນ ບໍ່ມີລູກຢູ່ບ້ານພັນຫຼວງ.

໒. ເຈົ້າຈັນທຣ໌ສວ່າງ ເອົາເມັຽຊື່ເຈົ້າຂຳລູກເຈົ້າຍາແລະ ເຈົ້າປັກວີ ມີລູກຊາຍດຽວຊື່ເຈົ້າບ່ອມ ຢູ່ບ້ານປາກເບງ. ເຈົ້າຈັນທຣ໌ສວ່າງອອກບວຊເປັນສາມເນຣຢູ່ວັດຊ້າງໝ້ອງ ເຖີງແກ່ກັມມ໌ ວັນສຸກຣ໌ຂຶ້ນ ໑໒ ຄ່ຳເດືອນ ໕ ປີໄຄ້ ຈ,ສ, ໑໒໙໗ ຕົງວັນທີ ໓ ອາວຣິນ ໑໙໓໖.

໓. ເຈົ້າຄຳໃບ ເອົາຜົວມີລູກບໍ່ຮູ້ຊື່.

໔. ເຈົ້າສຸພັນນະຣັງສີ ເອົາເມັຽຊື່ໝ່ອມຊາວ ມີລູກຍິງຊື່ເຈົ້າວັນນະຣັສມີ ລູກຊາຍຊື່ເຈົ້າວັນນະຣັງສີ ເຈົ້າວັນນະຣາຊ ເຈົ້າວັນນະສວັສດີ ເຈົ້າວັນນະວົງສ໌ ເຈົ້າວັນນະຄຳຫຼ້າ. ເຈົ້າສຸພັນນະຣັງສີເປັນຜູ້ຊ່ວຍຣາຊການລາວ.

໕. ເຈົ້າຕັນ ເອົາເມັຽບໍ່ຮູ້ຊື່.

໖. ເຈົ້າວົງສ໌. ,, ,,

໗. ເຈົ້າເພັຽ ,, ,,

໘. ເຈົ້າສີສົມພະໄນຣັສ ເອົາເມັຽຊື່ເຈົ້າຄຳຜຍ ລູກເຈົ້າຄຳເຜັຽແລະເຈົ້າອ່ອນແກ້ວ ມີລູກຊາຍຊື່ເຈົ້າສີຣິວົງສ໌ແລະເຈົ້າທັນ ລູກຍິງຊື່ເຈົ້າສີນວນ. ເຈົ້າສີສົມພະໄນຣັສໄດ້ສະເດັດໄປສຶກສາວິຊາທີ່ໂຮງຮຽນນາຍຮ້ອຍທະຫານຣບົກກຣຸງເທພ ເປັນນາຍຮ້ອຍຕີ. ປາງຜູ້ຮອງຫົວໜ້າສາລແຂວງຝັ່ງຂວາທີ່ຕັ້ງຢູ່ເທິງທ່າຄົກເຮືອບ້ານຊຽງແມນ ຮອງນາຍແຂວງກຳເພັຽເມືອງ ໄປປາບປາມຝິ່ນທີ່ປ່າບ້ານຂິງໝວກນຳທ່ານລຸສສອງ (M.Lussan) ເປັນນາຍແຂວງເມືອງປາກລາຍ-ເມືອງຫົງສາ-ເມືອງປາກແວດ ເປັນຂຸນນາງກິນໂປຣສາທັງສນາມໄດ້ຂຶ້ນໄປຕັດທາງແຕ່ສົບຊາງ ເມືອງຫາເມືອງຊ່ອນ ຈັບໄຂ້ປ່າມາລາເຣັຽ ສິ້ນພຣະຊົນມ໌ເດືອນ ໙ ປີໃຈ້ ຈ,ສ,໑໒໗໔ ທີ່ບ້ານຜ້າໄຫມ ນາຂວາງທາງແສງເມືອງໝ້ອຍ ແຂວງເມືອງປາກແບງ. ຣາຊການຝຣັ່ງໄດ້ປະທານເງິນ໕໐ ຫຼຽນ.

໑. ເຈົ້າສີຣິວົງສ໌ ເອົາເມັຽຊື່ໝ່ອມແກ້ວ ລູກທິດພົຍ໌ຈັນທຣ໌ ແລະສາວທອງສີ ມີລູກຊາຍດຽວຊື່ເຈົ້າສວັສດີສີຣິວົງສ໌. ເຈົ້າສີຣິວົງສ໌ເປັນສມຽນຢູ່ແຂວງເມືອງໄຊຍ໌ ເຖິງແກ່ກັມທີ່ບ້ານພັນຫຼວງ ວັນອັງຄານແຮມ໑໔ ຄ່ຳເດືອນ ໑໑ ປີເສັດ ຈ,ສ,໑໒໙໖ ຕົງວັນທີ ໓ ໂນວອມ ໑໙໓໔.

໒. ເຈົ້າທັນ ເອົາເມັຽຊື່ໝ່ອມຂຳບ້ານສະອໍ້ ແຂວງເມືອງຊຽງເງິນ ມີລູກຊາຍຊື່ເຈົ້າປານ.

໓. ເຈົ້າສີນວນເອົາຜົວຊື່ເຈົ້າເພັຽລູກເຈົ້າບົວຣະພັນທ໌ ແລະເຈົ້າທອງອ້ວນ ມີລູກຊາຍຊື່ເຈົ້າສີສຸພັນທ໌ ລູກຍິງຊື່ເຈົ້າບຸລຈັນທຣ໌ ແລະເຈົ້າແພ. ເຈົ້າສີນວນຕາຍທີ່ບ້ານໝື່ນນາ ປີໃຄ້ ຈ,ສ,໑໓໐໙.

ບທທີ ໓.

ກ. ເຈົ້າສຸນະຂຄົນ ເອົາເມັຽຊື່ເຈົ້າຜີວລູກເຈົ້າກຸມພຼະສັຄໍາຜານ ແລະເຈົ້າອະໄພສີ ບໍ່ມີລູກ. ເຈົ້າສນະຂູຄົນໄດ້ສເດັຈໄປສຶກສາວິຊາທີ່ໂຮງຮຽນນາຍຮ້ອຍທະຫາຣບົກກຸງເທພ ເປັນນາຍຮ້ອຍໂທ. ປາງຫຼັງເປັນນາຍດ່ານຢູ່ບ້ານດ່ານຕາແສງປາກເຊືອງແຂວງເມືອງປາກລາຍ. ສິ້ນພຼະຊົນມ໌ທີ່ໂຮງເຈົ້າວິກັພຕຣພະຈະຄີ ເດືອນ ໑ ແຮມ ໗ ຄ່ຳ ປີເຮົ້າ ຈ,ສ, ໑໒໕໙. ຍັງແຕ່ເມັຽອອກບວຊເປັນພິກຂຸນີຢູ່ວັດສີສົມສະຫານໄສກຣາຊ ຊົ່ວເຖິງແກ່ກັມມ໌ເສັຽ ປີສີ ຈ,ສ, ໑໓໐໒.

ຂ. ເຈົ້າສຣິນທອນ ສິ້ນພຼະຊົນມ໌ແຕ່ປະຖົມໄວຍ໌.

ຄ. ເຈົ້າສີໄວຍະສາສ 〃

ງ. ເຈົ້າຈິນດາຣັສມີ 〃

ບທທີ ໔.

ກ. ເຈົ້າມັງຄລະຣະຕີ ໄດ້ສເດັຈໄປສຶກສາວິຊາທີ່ໂຮງຮຽນສວນກຸຫຼາບອັງກຼິສກຸງເທພ ເອົາເມັຽໄທຍ໌ຊື່ຄຸນຕາຂັນ ພຼະຍາວະສຸທຸຕາວທີ່ ມີລູກຊາຍດ່ຽວຊື່ຄຸນຕາສຣະຫຼາງວິປກອນ. ເຈົ້າມັງຄລະຣະຕີ ສິ້ນພຼະຊົນມ໌ເດືອນ ໘ ພ,ສ, ໒໔໙໒.

ຂ. ເຈົ້າສີວັທນາຈັນທາຣ໌ ສິ້ນພຼະຊົນມ໌ຍ່ຈະເຣີນໄວຍ໌.

ບທທີ ໕.

ກ.

ກ. ເຈົ້າສມົມຸນຣີ ເອົາຜົວຊື່ເຈົ້າຈັກກະວັຕິ. ຈຸ້ມນີ້ໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊຊຸ່ມສູ່ເກົ້າ ບທ໒ ໝວດ ກ ເລຂ ໑ ເຖິງ ໕ ຕົວກ ແລະບໍ່ມີໝາຍນັ້ນແລ້ວ.

ບທທີ ໖.

ກ. ເຈົ້າສັມມະຈິຕຕີ ສິ້ນພຼະຊົນມ໌ແຕ່ເມື່ອຍັງທາຣະ

ເຣີນໄວຍ໌. ຈຶ່ງມີນັ້ນໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊອຸ່ນແກ້ວ ບົທທີ ໕ ໝວດ ກ ເລຂ ໑ ເຖິງ ໕ ຕົວ ກ ເຖິງ ສ ນັ້ນແລ້ວ.

ບົທທີ ກ.

ກ. ເຈົ້າກິນດາວົງສ໌ ສິ້ນພຣະຊົນແຕ່ເຍົາ ປະຖົມໄວຍ໌.

ຂ. ເຈົ້າຣາຊານຸວັຕິ ເອົານ້ອງສາວຕ່າງຫ້ອງເປັນເມັຍ ຊື່ເຈົ້າສມຸທສາຄອນ ມີລູກຊາຍດຽວ ຊື່ເຈົ້າສີສວັສດິ໌ ໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊອຸ່ນແກ້ວ ບົທທີ ໕ ໝວດ ກ ເລຂ ໕ ຕົວ ກ ນັ້ນແລ້ວ. ປະເມັຍແລ້ວໄປເອົາເຈົ້າທອງສີ, ລູກເຈົ້າກົນຍ໌ມະເສັບສວັດທາທ໌ແລະເຈົ້າເຫຼັກ ມີລູກຊາຍຊື່ເຈົ້າມະຫາວົງ ລູກຍິງຊື່ເຈົ້ານວນລະສີ. ເຈົ້າທອງສີເຖິງແກ່ກັມມ໌ທີ່ເມືອງນ່ານ ແລ້ວໄປເອົາໝ່ອມນວນສີເມືອງຊຽງໃໝ່ ບໍ່ມີລູກ. ເຈົ້າຣາຊານຸວັຕິໄດ້ສເດັຈໄປສຶກສາວິຊາທີ່ໂຮງຮຽນນາຍຮ້ອຍທະຫານບົກກຸງເທພ ເປັນນາຍຮ້ອຍໂທ. ເປັນພະນັກງານກົງສຸລຝຣັ່ງເສສເມືອງຊຽງໃໝ່ແລະເມືອງນ່ານ ສິ້ນພຣະຊົນມ໌ທີ່ເມືອງຊຽງໃໝ່ ປີເຣົາ ຈ,ສ, ໑໒໙໕. ເຈົ້າມັງຄລະວະຕີເອົາເຈົ້າມະຫິວັຕີໄປລ້ຽງໄວ້ກຸງເທພ ສ່ວນເຈົ້ານວນລະສີຢູ່ນຳແມ່ນ້າ.

ຄ. ເຈົ້າຂັຕຕິຍະວົງສ໌ ເອົາເມັຍຊື່ເຈົ້າຕຸ່ນ ລູກເຈົ້າທອງຄຳແລະເຈົ້າພັນທຸ ມີລູກຍິງດຽວຊື່ເຈົ້າເພັງ ໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊອຸ່ນແກ້ວ ບົທທີ ໔ ໝວດ ກ ເລຂ ໒໖ ຕົວ ກ ນັ້ນແລ້ວ. ປະເຈົ້າຕຸ່ນໄປເອົາໝ່ອມເຮືອນບ້ານວັດສາດ ມີລູກຊາຍດຽວຊື່ເຈົ້າສຸວັດທາຕະອຳໄພ. ຮ້າງໝ່ອມເຮືອນໄປເອົາເຈົ້າພູທາມາ ລູກເຈົ້າສຸຂແລະເຈົ້າແວນ ມີລູກຊາຍຊື່ເຈົ້າຣັກຂະຕະວົງສ໌ ເຈົ້າມະຫິຣັກຂະຕາ ລູກຍິງຊື່ເຈົ້າວົງສ໌ບຸຫຼັນ ແລະເຈົ້າຈັນດາຣັສມີ. ເຈົ້າຂັຕຕິຍະວົງສ໌ໄດ້ສເດັຈໄປສຶກສາວິຊາທີ່ໂຮງຮຽນນາຍຮ້ອຍທະຫານບົກ ແລະໂຮງຮຽນສວນກຸຫຼາບກຸງເທພ ຖືກຕັ້ງແຕ່ງໃຫ້ໄປເປເຍ່ນສີລາຈາຣຶກໃຫ້ທ່ານກາມິລໂນຕົງ (M.camille notton) ກົງສຸລຝຣັ່ງເສສຢູ່ເມືອງຊຽງໃໝ່ ໓ ປີແລ້ວ ລາອອກໄປເປັນນາຍກອງ

ຢູ່ທ່າສນາມຫຼວງ ເມືອງດອນໂມເລະເມືອງປູ້ ຣາຊການໃຫ້ຂອງກິນປຣັບເບ້ຽລ້ຽງປະຈຳປີບ່ປານໃຫຍ່.

໑. ເຈົ້າສຸວັຕຕາ ຯ ເອົາເມັຽຊື່ເຈົ້າມະໂຕໝຽນ ລູກເຈົ້າສີສົມພູນະຣາຊແລະເຈົ້າພັນສ໌ ມີລູກຊາຍຊື່ເຈົ້າພັນສະວົງສ໌ ລູກຍິງຊື່ເຈົ້າມະຕີຈັນທຣ໌ ເຈົ້າຄຳບົວ ເຈົ້າຄຳເຜຍ. ເຈົ້າສຸວັຕຕາ ຯ ເປັນຄູ.

໒. ເຈົ້າຣັກຂະຕະວົງສ໌ ເອົາເມັຽຊື່ສາວຊຽວ ບ້ານເມືອງຫຼວງ ມີລູກຊາຍຊື່ເຈົ້າບົວວົງສ໌ ປະກັນແລ້ວໄປເອົາເຈົ້າເຂັມມະນາວະດີ ລູກເຈົ້າເຫຼັກກົມຕຳຣວຈຊ້າຍແລະເຈົ້າບຸນມີ. ເຈົ້າຣັກຂະຕະວົງສ໌ເປັນພົນພະນາບານຄົນ.

໓. ເຈົ້າມະຕີຣັກຂະໂຕ ເປັນສມຽນຝ່າຍຣາຊການລາວ.

໔. ເຈົ້າວົງສ໌ບຸນຫຼັນ ເກີດເກົ່າກັນມ໌ ປີສງ້າ ຈ,ສ, ໑໓໐໔.

໕. ເຈົ້າຈິນດາຣັສມີ ຍັງສອນສາວປີ້ຈີ້.

ບົທທີ ໘.

ກ. ເຈົ້າດວງຄຳ ເອົາຜົວຊື່ເຈົ້າວົງກົຕ ລູກເຈົ້າກົມພຣະບັນຄຳເຫຼັກແລະໝ່ອມຂອນແອນ ບ່ມີລູກ ສິ້ນພຣະຊົນມ໌ທີ່ປາກລາຍ ເວລາເມືອງແຕກ ປີໃຄ້ ຈ,ສ, ໑໒໔໙.

ຂ. ເຈົ້າສັນນາວະດີ ສິ້ນພຣະຊົນມ໌ເມື່ອປະຖົມໄວຍ໌.

ຄ. ເຈົ້າໄສຍຣັສມີ ເອົາຜົວໄທຍ໌ຊື່ຄຸຍສາຍ ຫຼານພຣະຍາສຸຣະສັກດ໌ ຯ ບ່ມີລູກປະກັນ ແລ້ວໄປເປັນຫ້າມເຈົ້າມະຫາອຸປຣາຊບຸນຄົງ, ມີພຣະທິດາຊື່ເຈົ້າວັທນາ ພຣະໂອຣສຊື່ເຈົ້າຂັຕຕິຍະວົງສ໌. ເຈົ້າໄສຍຣັສມີ ສິ້ນພຣະຊົນມ໌ທີ່ໂຮງເຈົ້າບຸສນາຣີ ວັນອັງຄານແຮມ ໑ ຄ່ຳເດືອນຍີ່ ປີຍີ ຈ,ສ, ໑໒໘໘ ຕົງວັນທີ ໑໘ ຊັງວີເຢ ໑໙໒໗ ດ້ວຍວັນນະໂຣຄປອດເຫ້ງ.

໑. ເຈົ້າວັທນາ ເອົາຜົວຊື່ເຈົ້າບຸນລະສານ ບ່ມີລູກ ໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊອຸ່ນແກ້ວ ບົທທີ ໖ ໝວດ ກ ເລຂ ໕ ນັ້ນແລ້ວ. ເຈົ້າວັທນາສິ້ນພຣະຊົນມ໌ ປີສງ້າ ຈ,ສ,

໑໓໐໔ ດ້ວຍ ວັຓຓະໂຣຄ ປອດເຫົ້າ.

໒. ເຈົ້າຂັຕຕິຍະວົງສ໌ ສິ້ນພຣະຊົນມ໌ທີ່ເມືອງຫາໂນຍເວລາໄປສຶກສາວິຊາຢູ່ໂຮງຮຽນແພທຍ໌ສາຕ ວັນເສົາຣ໌ແຮມ ໒ ຄ່ຳ ເດືອນ ໔ ປີສງ້າ ຈ,ສ,໑໒໘໐ ຕຼົງວັນທີ ໒໐ ມາກສ໌ ໑໙໑໙ ດ້ວຍ ວັຓຓະໂຣຄ ປອດເຫົ້າ.

ງ. ເຈົ້າບຸສບາຣີ ເອົາຜົວຊື່ເຈົ້າໝູບິຫາມາ ລູກເຈົ້າສິນໄຊຍ໌ ແລະໜ່ອມອ້ວນ ມີລູກຊາຍຊື່ເຈົ້າສຸວັຓຓ໌ຫາວົງແລະເຈົ້າສີທ໌ຄຳຕັນ ລູກຍິງຊື່ເຈົ້າສຸດາຈັນທຣ໌. ເຈົ້າບຸສບາຣີສິ້ນພຣະຊົນມ໌ທີ່ໂຮງບ້ານໃໝ່ ວັນອັງຄານແຮມ ໑໔ ຄ່ຳ ເດືອນຈຽງປີສງ້າ ຈ,ສ, ໑໓໐໔ ຕຼົງວັນທີ ໑ ຊັງວິເຍ ໑໙໔໓.

໑- ເຈົ້າສຸວັຓຓ໌ຫາວົງ ເອົາເມັຽຊື່ເຈົ້າອິນຄຳ ພຣະທິດາເຈົ້າ ເຈົ້າມະຫາອຸປຣາຊບຸລຄົງແລະໜ່ອມບົວໄຂ ມີລູກຊາຍດຽວ ຊື່ເຈົ້າສຸພັນນະວົງສ໌. ເຈົ້າສຸວັຓຓ໌ຫາວົງເປັນອຸປຣາຊຝ່າຍຣາຊກາຣລາວ ບັງເກີດທາງພິລກາຍລາອອກຣາຊກາຣ.

ກ. ເຈົ້າສຸພັນນະວົງສ໌ ເອົາເມັຽຊື່ເຈົ້ານາລີ ລູກເຈົ້າສີສົມສະຣາຊແລະເຈົ້າພັນຄ໌ ມີລູກຊາຍຊື່ເຈົ້າມະຕິວັຕຕິ ເຈົ້າໄຊຍ໌ສວັສດິ໌. ເຈົ້າສຸພັນນະວົງສ໌ເປັນພິນພະຍາບາລຄົນ.

໒. ເຈົ້າສີທ໌ຄຳຕັນ ເອົາເມັຽຊື່ໜ່ອມບຸລກັ້ງ ບ້ານປາກຄະນຸງເມືອງທຸຣຄົມແຂວງວຽງຈັນທນ໌ ມີລູກຊາຍຊື່ເຈົ້າສີສວາຫາ ລູກຍິງຊື່ເຈົ້າໂສມສີ ເຈົ້າພວງພາລີ ເຈົ້າອາຄນະໄລຍ໌. ເຈົ້າສີທ໌ຄຳຕັນເປັນຄູສອນ ເຖິງແກ່ກັມມ໌ທີ່ໂຮງພະຍາບາລເມືອງຫຼວງພຣະບາງ ວັນອາທິດຍ໌ແຮມ ໕ ຄ່ຳ ເດືອນຈຽງ ປີສງ້າ ຈ, ສ, ໑໓໐໔ ຕຼົງວັນທີ ໒໗ ເດຊວນ ໑໙໔໒.

໓. ເຈົ້າສຸດາຈັນທຣ໌ ເອົາຜົວຊື່ເຈົ້າສີທ໌ແກ້ວ ມີລູກໄດ້ກ່າວໄວ້ບົທທີ ໑ ໝວດ ຊ ເລຂ ໓ ຕົວ ກ ນັ້ນແລ້ວ.

ຈ. ເຈົ້າມະຕິວັຓຓ໌ ສິ້ນພຣະຊົນມ໌ອາຍຸ ໑໐ ປີ ທີ່ປາກລາຍ ເວລາເມືອງແຕກ ປີໃກ້ ຈ,ສ,໑໒໔໙.

ສ. ເຈົ້າພາສແກ້ວມຸງຄຸລ ສິ້ນພຣະຊົນມ໌ແຕ່ເປັນສາວ ດ້ວຍໂຣຄອະຫິວາ ປີເປົ້າ ຈ,ສ,໑໒໕໓.

ຊ. ເຈົ້າສຸດາເດຊ ເອົາເມັຽຊື່ເຈົ້າມີງ ລູກເຈົ້າເພັງແລະເຈົ້າທອງສີ ມີລູກຍິງຊື່ເຈົ້າພູ ລູກຊາຍຊື່ເຈົ້າມ້ອນແລະເຈົ້າສຸ

ມິຕຣາຊ. ເຈົ້າສຸດາເດຊ ໄດ້ສເດັຈໄປສຶກສາວິຊາທີ່ໂຮງຮຽນສວນກຸຫລາບກຸງເທພ. ບາງຜູ້ໄດ້ສເດັຈໄປສຶກສາວິຊາທີ່ເມືອງປາໂມຍ ອອກມາເປັນພະນັກງານໂທຣະເລຂ. ແລ້ວໄປປະຈຳການຢູ່ບ້ານຫ້ວຍແຂວງວຽງຈັນທນ໌. ແລ້ວລາອອກໄປເປັນຄູ. ສິ້ນພະຊົນມ໌ທີ່ໂຮງເຈົ້າບຸສບາຣີ ວັນປະຫັສແຣມ ໖ ຄ່ຳເດືອນ ໑໐ ປີມີ ຈ,ສ, ໑໒໘໘ ຕົງວັນທີ ໒໕ ເສັບຕາອມ ໑໙໒໖ ຣາຊການຜູ້ປະທານເງິນ ໒໐ ຫຼຽນ ລູກເມັຍຫນີໄປຢູ່ເມືອງທົງສາຫມົດ.

ບົທທີ ໙.

ກ. ເຈົ້າຈັນທະຣາສີ ເປັນທ້າວພູ່ເຈົ້າມະຫາອຸປຣາຊບຸນຄົງ ບໍ່ມີລູກ. ສິ້ນພຣະຊົນມ໌ວັນພຸທຂຶ້ນ ໗ ຄ່ຳເດືອນ ໑໐ ປີໄກ້ ຈ,ສ, ໑໒໙໗. ທີ່ໂຮງວັງຫນ້າ.

ຂ. ເຈົ້າຣາຊາວະດີ ເອົາເມັຍຊື່ເຈົ້າຄຳແວ່ນ ລູກເຈົ້າອຸ່ນຄຳແລະເຈົ້າໝາ ມີລູກຊາຍດຽວຊື່ເຈົ້າຫມັ້ນ. ເມັຍຕາຍປະແລ້ວໄປເອົາເຈົ້າດວງຈັນທຣ໌ ມີລູກໄດ້ກ່າວໄວ້ບົທທີ ໑ ຫມາດສເລຂ ໒໖ ຕົວ ກ ເຖິງ ງ ນັ້ນແລ້ວ. ເຈົ້າຣາຊາວະດີ ໄດ້ຮັບປະກາສນີຍະບັຕຈາກໂຮງຮຽນສວນກຸຫລາບກຸງເທພ. ບາງຜູ້ໄດ້ສເດັຈໄປສຶກສາວິຊາທີ່ໂຮງຮຽນ ສາສເສີລຸບໂລບາເມືອງໄຊງ່ອນ ອອກມາເປັນພະນັກງານໂທຣະເລຂ ແລ້ວໄປປະຈຳການຢູ່ເມືອງຊຽງຂວາງເມືອງຫຼວງພູຄາ. ລາອອກໄປເປັນພະນັກງານກົງສຸລຜູ້ເສສເມືອງລ່ຳປາງ. ລາອອກໄປເປັນສມຽນພຣະຄັງຊ້າງທີ່ສິນເດັຈພຣະເຈົ້າສີສວ່າງວົງ ສິ້ນພຣະຊົນມ໌ ວັນເສົາຣ໌ ແຮມ ໑໐ ຄ່ຳເດືອນ ໑໐ ປີສັນ ຈ,ສ, ໑໒໙໔ ຕົງວັນທີ ໒໔ ເສັບຕາອມ ໑໙໓໒. ທີ່ໂຮງເຈົ້າດວງເກສ.

໑. ເຈົ້າຫມັ້ນ ເອົາເມັຍຊື່ທ່ານຍ່ານບຸນນ້ອຍ ເມືອງມະຫາໄຊຍ໌ແຂວງຄຳມ່ວນ ມີລູກຊາຍດຽວຊື່ເຈົ້າທາວັນ. ເຈົ້າຫມັ້ນເປັນຄູ ເຖິງເກົາກັມມ໌ທີ່ບ້ານໃຫມ່ ວັນປະຫັສຂຶ້ນ ໙ ຄ່ຳເດືອນ ໔ ປີເປົ້າ ຈ,ສ, ໑໒໙໙ ຕົງວັນທີ ໑໐ ມາກສ໌ ໑໙໓໘. ເຈົ້າທາວັນ ເຈົ້າສີຫົວຄຳແລະເຈົ້າຣັທນສີສວັສດີເອົາໄປລ້ຽງ.

ຄ. ເຈົ້າສີສົມມະຣາຊ ເອົາເມັຍຫລາງຊື່ເຈົ້າພັນສ໌

ເມັຽນ້ອຍຊື່ເຈົ້າຫາ ທັງສອງເອື້ອຍນ້ອງລູກເຈົ້າຄຳອ້ວນແລະແມ່ອ່ອນແອ່ນ. ມີລູກນຳເມັຽຫຼວງ ອົງຄ໌ຍິງຊື່ເຈົ້າມະຫາຫົງສ ເຈົ້າລຽນຄຳ ເຈົ້າມະຫາວັກກ ເຈົ້າຕານະວະດີ ເຈົ້ານາລີ ເຈົ້າວັນນາຈັນທອ໌ ອົງຄ໌ຊາຍຊື່ເຈົ້າວໍຣະວົງສ໌. ມີລູກນຳເມັຽນ້ອຍ ອົງຄ໌ຍິງຊື່ເຈົ້າວັກກສາຣີ ເຈົ້າຂ່ານາວະດີ ເຈົ້າທອງວັກກ ເຈົ້າສີຊຸມມີ. ອົງຄ໌ຊາຍຊື່ເຈົ້າສຸພານຸຣັງສີ ເຈົ້າວໍຣະວຸທ໌ ເຈົ້າເລັກຫຼ້າ. ເຈົ້າສີຣິນນະຣາຊ ໄດ້ສົ່ງເຂົ້າໄປສຶກສາວິຊາທີ່ໂຮງຮຽນສວນກຸຫລາບກຸງເທພ. ບາງຜູ້ໄປສຶກສາວິຊາທີ່ເມືອງຫາໂນຍ ອອກມາເປັນສມຽນລ່າມ ໄປປະຈຳການທີ່ເມືອງໄຊຍ໌ ລາອອກມາຝ່າຍຣາຊການລາວ ເປັນບັນນາຣັກສ໌ຫໍພຣະສມຸດຫໍສນາມຫຼວງ ຕໍ່ມາເພິ່ນໃຫ້ໄປສົ່ງທ່ານປີລາ (M.Rla) ຣາຊທູດຜູ້ແທນປະຈຳບາງກອກກັບຄືນເມືອງວຽງຈັນທນ໌. ໄດ້ຮັບພຣະຣາຊທານບັນດາສັກດິ໌ເປັນເຈົ້າກົມ ສີສົມມະຈັກສຣາດຕູ ແລ້ວໄປເປັນຫົວໜ້າສາລາລາວເມືອງຫຼວງພຣະບາງ ນາຍແຂວງເມືອງໄຊຍ໌ ເມືອງປາກຫາ ໄດ້ຮັບຕຣາວິສສະຣິບາທ໌ຜູ້ແທນເລຊຽງດົນເນີຣ໌ຊັ້ນ ໕ ຣາຊການໃຫ້ອອກໄປຮັບເບັ້ຽບໍານານ ເປັນເຈົ້າເມືອງຈາວວຽງຢູ່ບ້ານໃໝ່ ສິ້ນພຣະຊົນມ໌ວັນອັງຄານແຮມ ໑ ຄ່ຳເດືອນ ໘ ປີເສັງ ຈ,ສ, ໑໓໐໗ ຕົງກັບວັນທີ ໖ ເມ ໑໙໔໕ ດ້ວຍໂຣຄອະຫິວາ.

໑. ເຈົ້າມະຫາຫົງສ ເອົາຜົວຊື່ເຈົ້າສຸວັຕຕະອຳໄພ ມີລູກໄດ້ກ່າວໄວ້ບົທທີ ໗ ໝວດ ຄ ເລຂ ໑ ນັ້ນແລ້ວ.

໒. ເຈົ້າລຽນຄຳ ເອົາຜົວຊື່ເຈົ້າພຸມມີລູກເຈົ້າຣາຊວົງສ໌ສີສົມພັນ໌ແລະແມ່ອ່ອນເກົ້າລາ ມີລູກນຳກັນ ໖ ຄົນ ຕໍ່ເກົ່າກັນລ໌ທັງມີແຕ່ລູກດ້ວຍວັກກະໂຣຄ ປອດແຫ້ງ.

໓. ເຈົ້ານາລີ ເອົາຜົວຊື່ເຈົ້າສຸພັນທະວົງສ໌ ມີລູກໄດ້ກ່າວໄວ້ບົທທີ ໗ ໝວດ ງ ເລຂ ໑ ຕົວ ກ ນັ້ນແລ້ວ.

໔. ເຈົ້າທອງວັກກ ເອົາຜົວຊື່ເຈົ້າໜັ້ນລູກເຈົ້ານາຄ ມີລູກຍິງຊື່ເຈົ້າຄຳ.

໕. ເຈົ້າສຸພານຸຣັງສີ ເອົາເມັຽຊື່ເຈົ້າເພັງ ລູກເຈົ້າສີສວັສດິ໌ ແລະເຈົ້າພີ່ສມັຍ ມີລູກໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊຸ່ນເກົ້າບົທທີ ໕ ໝວດ ກ ເລຂ ໕ ຕົວ ກ ບໍ່ເສັ້ນນາຍ ແລະບົທທີ ໗ ໝວດ ຂ ນັ້ນແລ້ວ.

ບົດທີ ໑໐

ກ. ເຈົ້າສຸວັດທະຊຸໄລຍ໌ ເອົາພີ່ອ້າຍຕ່າງແມ່ຂອງເປັນຜົວຊື່ເຈົ້າໄຊຍຣັກຂະຕະວົງສ໌ ມີລູກໄດ້ກ່າວໄວ້ບົດທີ ໒ ຫມວດ ຈ ເລຂ ໓ ເຖິງ ກ ນັ້ນແລ້ວ. ເຈົ້າສຸວັດທະຊຸໄລຍ໌ອອກບວດຊຸເປັນຕຶກຂຕີຢູ່ວັດພຫົວຊຽງ ສິ້ນພຣະຊົນມ໌ວັນອັງຄານແຮມ ໑ ຄ່ຳເດືອນ ໕ ປີສີ ຈ,ສ,໑໓໐໒ ຕຽງວັນທີ ໒໕ ອາວຣີນ ໑໙໔໐.

ບົດທີ ໑໑

ກ. ເຈົ້າສຸຣິວົງສ໌ ສິ້ນພຣະຊົນມ໌ເມື່ອຍັງຈະເຣີນໄວຍ໌.
ຂ. ເຈົ້າສຸດາຈັນທຣ໌ 〃

ບົດທີ ໑໒

ກ. ເຈົ້າຕຽງສາໄລຍ໌ ເອົາຜົວຊື່ເຈົ້າສຸຂບໍ່ມີລູກ ສິ້ນພຣະຊົນມ໌ແຕ່ດົນແລ້ວ.

ຂ. ເຈົ້າຄຳແອ່ນ ເອົາພີ່ອ້າຍຕ່າງແມ່ຂອງເປັນຜົວຊື່ເຈົ້າມະຫາອຸປຣາຊບຸນຄົງ ມີພຣະທິດາອົງຄ໌ດຽວຊື່ເຈົ້າແສງສຸຣິຈັນທຣ໌ ແລ້ວພາລູກໜີໄປກຸງເທພ ສິ້ນພຣະຊົນມ໌ຢູ່ທີ່ນັ້ນ.

໑. ເຈົ້າແສງສຸຣິຈັນທຣ໌ ເອົາຜົວຊື່ເຈົ້າຄຳຮຽງ, ເຈົ້າເພັງ ແລະເຈົ້າຈິຕຣາຊ ບໍ່ມີລູກ. ຂໍລາຜົວໄປສຶກສາວິຊາໂຮງຮຽນຊັ້ນສູງ ສັຕຣີຝຣັ່ງເສສ (École primaire supérieure des jeunes filles françaises) ເມື່ອຮຽນໄດ້ຈົບອອກມາເປັນຄູສອນໂຮງຮຽນສັຕຣີເມືອງຫຼວງພຣະບາງແລະວຽງຈັນທນ໌.

໒. ເຈົ້າແພງມາສ ໄດ້ສເດັຈໄປສຶກສາວິຊາທີ່ໂຮງຮຽນສວນກຸຫລາບອັງກີສກຸງເທພ ເອົາຫລານຊາຍເປັນຜົວຊື່ເຈົ້າສມຸຫຊາຍຄຳ ພຣະໂອຣົສເຈົ້າມະຫາອຸປຣາຊບຸນຄົງແລະເຈົ້າຄຳຄິ່ນ ແລ້ວພາຜົວໜີໄປຢູ່ກຸງເທພ ມີລູກຊາຍຊື່ເຈົ້າສມິທ ສມຽນຝຶກຫັດຣາຊການລາວ ເຖິງແກ່ກັມມ໌ເມືອງວຽງຈັນທນ໌ ປີເສົ້າ ຈ,ສ,໑໒໘໔ ລູກຍິງຊື່ເຈົ້າສມົນແລະເຈົ້າສເນີ ເວລານີ້ຢູ່ເມືອງໄທຍ໌.

໒. ເຈົ້າສິງຫະນາທ ສິ້ນພຼະຊົນມ໌ ເມື່ອຫຼ້ຽງຈເຣີນໄວຍ໌.
໓. ເຈົ້າຕັນສສະຫາດາ ״

ບົທທີ ໑໕

໔. ເຈົ້າສະຕີຈັນທຣ໌ ເອົາພີ່ອ້າຍຕ່າງຫ້ອງເປັນຜົວຊື່ ເຈົ້າໂສມຣັກຂະທະວົງສ໌ ມີລູກດັ່ງກ່າວໄວ້ບົທທີ່໖ ໝວດດູເລຂ ໑ ແລະ໖ ນັ້ນແລ້ວເຈົ້າສະຕີຈັນທຣ໌ ສິ້ນພຼະຊົນມ໌ທີ່ໂຮງສວນ ໝາກຖົ່ວລຽນເທັງທ່າທ່າຄີກເຮືອເໜືອບ້ານຊຽງແມນ ປີໃຈ້ ຈ,ສ, ໑໖໕໖.

ເຈົ້າມະຫາອຸປຮາຊ ບຸນຄົງ

ປຼະວັຕິ
ເຈົ້າມະຫາອຸປຣາຊ ບຸນຄົງ

ເຈົ້າມະຫາອຸປຣາຊບຸນຄົງປຼະສູຕິວັນອາທິດຍ໌ຂຶ້ນ໔ຄ່ຳເດືອນ ໗ ປີໄສ້ ຈ.ສ. ໑໒໑໙ ທີ່ວັງພຼະບິດາສີສຸວັຕຕະນຳຄຳຜ່າຍໜ້າ(໑) ນະຄຣຫຼວງພຼະບາງຣາຊະທານີ ໃນແຜ່ນດິນສົມເດັຈພຼະເຈົ້າຈັນທຣ໌ເທພປຼະຍາຄູນ ฯ.

ເມື່ອພຼະອົງຄ໌ຍັງເປັນກຸມາຣ ໄດ້ເລົ່າຮຽນອັກຂຣະສມັຍຢູ່ໃນວັງພຼະບິດາແລະຄູອື່ນ ໆ ອີກ. ແຕ່ການເລົ່າຮຽນໃນສມັຍນັ້ນຍັງສອນແຕ່ພຽງໃຫ້ອ່ານໜັງສືອອກກັບຂຽນໜັງສືໄດ້ ພຼະອົງຄ໌ໄດ້ຮຽນພຽງເທົ່ານັ້ນ ບໍ່ໄດ້ຮັບການສຶກສາທາງສາມັນປຼະເພທ ຄືພາສາໄທຍ໌ເປັນຕົ້ນ. ຄັນສເດັຈລົງໄປກຸງເທພຄັ້ງໃດແລ້ວ ກໍ່ໂປຣດໃຫ້ສນິທກັບພຼະເຈົ້ານ້ອງຍາເທີ ພຼະອົງຄ໌ເຈົ້າດິສວຣກຸມາຣ(໒) ຊຶ່ງບັງຄັບບັນຊາທະຫານມະຫາດເລັກແລະກຼົມແຜນທີ່ຢູ່ໃນເວລານັ້ນ ຈຶ່ງມີເມື່ອນາຍີໂຄຣະດູ ຕາມເຣື່ອງປຼະວັຕິຂອງພຼະອົງຄ໌ ທີ່ປາກົດຄວາມສາມາຖ ໃນຣາຊການແລະການຢ່າງອື່ນເມື່ອພາຍຫຼັງ ຈຶ່ງດູຊ່າງເຫັນເປັນມະຫັສຈັຣຍ໌ ດ້ວຍອາໄສແຕ່ລຳພັງຄຸນຄວາມດີ ທີ່ເປັນອຸປນິສັຍຂອງພຼະອົງຄ໌ຊັກຈູງເປັນຂໍ້ສຳຄັນຢ່າງດຽວ.

ໃນ ປີເປົ້າ ຈ.ສ. ໑໒໓໙ ເດືອນ ໗ ເຝົ້າສເດັຈອອກຫຼວງຜນວຊເປັນພິກຂຸຢູ່ວັດໜອງ ເດືອນ ໗ ແຮມ ໑ ຄ່ຳ ປີຍີ່ ຈ.ສ. ໑໒໔໐ ສເດັຈລາຜນວຊ.

ປີມົດ ຈ.ສ. ໑໒໔໕ ເດືອນ ໗ ພຼະອົງຄ໌ໄດ້ສເດັຈເມືອເຝົ້າພຼະບິດາຕັ້ງທັພຢູ່ເມືອງພູ້ ພ້ອມພຼະຍາສຸຣິຍະໄທຍ໌(ຄຸຫາ) ເດືອນ ໑໐ ສເດັຈເປັນນາຍທັພພ້ອມພຼະຍາສຸຣິໄທຍ໌ຄຸມພົລ ໓໐໐ ແທ່ພຼະບິດາເມືອຣົບຫໍ້ທົ່ງຊຽງຄຳ ເດືອນຍີ່ແຮມກໍ່ເລີກທັພກັບລົງມາເມືອງຫຼວງພຼະບາງ.

---

໑. ບ່ອນຕັ້ງໂຮງຮຽນປະຖົມສຶກສາດຽວນີ້ ແຕ່ກ່ອນເອີ້ນຄຸ້ມວັດໜອງ.

໒. ກຼົມພຼະຍາດຳຣົງຣາຊານຸພາບ.

ປີສັນ ຈ.ສ. ໑໒໔໖ ເດືອນ ໕ ແຮມ ໑໒ ຄ່ຳ ສົມເດັຈພຼະເຈົ້າຢູ່ຫົວ ຯ ໂປຼດໃຫ້ພຼະອົງຄ໌ເປົ່າເຈົ້າຣາຊບຸດຄຳສຸຂ ລົງໄປຖວາຍເຄື່ອງຣາຊບັນນາການສົມເດັຈພຼະຈຸລຈອມເກົ້າ. ພຼະອົງຄ໌ສະເດັຈລົງເຮືອພຼ້ອມພຼະຍາສຸໂຂໄທຍ໌ ຈາກປາກລາຍເດີນທາງບົກໄປລົງເຮືອທ່າອິດ ເຖິງກຸງເທພ ຫຼົງປຼະທັບຢູ່ບ້ານພຼະຍາສຸໂຂໄທຍ໌. ກົມພຼະບຳຣາບປະຣະປັກຍ໌ເສນາບໍດີກຣະຊວງມະຫາດໄທຍໄດ້ນຳເອົາພຼະຍາສຸໂຂໄທຍ໌ນາຍທັພ ເຈົ້າຣາຊບຸດຄຳສຸຂແລະພຼະອົງຄ໌-ເຈົ້າບຸລຄົງກັບເຈົ້າທ້າວພຼະຍາລາວ ທູລຖວາຍເຄື່ອງຣາຊບັນ-ນາການ ສົມເດັຈພຼະຈຸລຈອມເກົ້າ ນະພຼະທີ່ນັ່ງຈັກກຣີມະຫາ-ປາສາທ. ພຼະອົງຄ໌ໄດ້ຮັບພຼະຣາຊທານບັນດາສັກດ໌ເປັນເຈົ້າຣາຊພາຄີໄນຍ໌ (ປະກາສນິຍະບັຕລົງວັນຈັນທຣ໌ ເດືອນ ໗ ຂຶ້ນ ໑໔ ຄ່ຳ ປີມະເສງຕຼີສົກ ຈ.ສ. ໑໒໔໓) ເດືອນ ໑໐ ຂຶ້ນ ໑໓ ຄ່ຳ ໄດ້ສເດັຈອອກຈາກກຸງເທພ ຂຶ້ນມາເຖິງເມືອງຫຼວງພຼະບາງເດືອນ ໑໑ ແຮມ ໒ ຄ່ຳ.

ປີເຮົ້າ ຈ.ສ. ໑໒໔໗ ສົມເດັຈພຼະເຈົ້າຢູ່ຫົວ ຯ ໂປຼດໃຫ້ພຼະອົງຄ໌ສະເດັຈລົງໄປຈັດສບຽງຮັບກອງທັພນາຍພັນເອກເຈົ້າໝື່ນໄວຍ໌ວໍຣະນາຖທີ່ເມືອງໄຊຍະບູຣີສີພັນຮຸ່ງ. ວັນອັງຄານເດືອນ ໔ ຂຶ້ນ ໕ ຄ່ຳ ພຼະອົງຄ໌ສະເດັຈເລືອນນຳກອງທັພໄທຍ໌ເດີນທາງບົກ ໑໐ ວັນເຖິງເມືອງງອຍ. ແມ່ທັພແຕ່ງໃຫ້ພຼະອົງຄ໌ກັບນາຍຮ້ອຍເອກຫຼວງດັສກອນປລາດ (ບຸ່ງ)(ປ) ຄຸມທະຫານໄທຍ໌ແລະໄພ່ພົລເມືອງຣົບທີ່ບ້ານດ້ວຍແລະບ້ານນາປາ ແຂວງເມືອງສົບແອດ. ຍົກຂຶ້ນໄປເຖິງບ້ານດ້ວຍກໍ່ເຂົ້າຕີຄ້າຍຫໍ້ ວັນຈັນທຣ໌ເດືອນ ໕ ຂຶ້ນ ໑໐ ຄ່ຳ ຫໍ້ແຕກໜີ ຍັງແຕ່ກໍ່ມີນາຍຮັກສາຄ້າຍຖືກປືນຂາຊ້າຍໜີໄປບໍ່ໄດ້ ພຼະອົງຄ໌ກັບທະຫານ ໔ ຄົນ ຈະໄປກຸມຈັບ ກໍ່ມີເອົາປືນສັ້ນຍິງຫົວເອງຂາດໃຈຕາຍ. ກອງທັພໄທຍ໌ແລະລາວກໍ່ຕັ້ງຢູ່ໃນຄ້າຍ. ເວລາກາງຄືນໄດ້ຂ່າວໄປວ່າ ຄ້າຍບ້ານດ້ວຍແຕກແລ້ວ ພວກທີ່ຢູ່ຄ້າຍບ້ານນາປາກໍ່ໜີເຂົ້າປ່າເຂົາລົງໄປບາອິດ.

ປີເສັດ ຈ.ສ. ໑໒໔໘ ຕັ້ງແຕ່ເດືອນ ໙ ໄປພໍ່ພົນທີກລົງ

(ປ) ບິດາພໍ່ຈັກ ພິວສາວສຸຂບ້ານຫຼັກຄຳ. ທ່ານໄດ້ເປັນນາຍພັນໂທ ພຼະດັສກອນປລາດ.

ກະເກີດຄວາມໄຂ້ປ່າໃນພວກທະຫາຣລາວແລະໄທຍ໌ປວຍລົງເປັນອັນມາກ. ໃນຂະນະນັ້ນພວກຫໍ້ທີ່ແຕກໜີຈາກຄ້າຍບ້ານດ້າຍແລະບ້ານນາປາ ໄດ້ຊາບວ່າເກີດຄວາມໄຂ້ໃນກອງທັພລາວແລະໄທຍ໌ ກໍຮອບຣວມກັນຍົກລົງມາຕັ້ງຄ້າຍປະຊິດຄ້າຍບ້ານດ້າຍໄກກັນປຼະມາຓ ມ° ໑໒ ພວກຫໍ້ບໍ່ເຂົ້າຕີຄ້າຍໄດ້ ເພຼາະຍ້ານລູກແຕກເປັນແຕ່ລັດກຳລັງໄປຫຼ່ວທັ້ງລັກທາງ ປຼະສົງຄ໌ຈະລ້ອມໄວ້ໃຫ້ສິ້ນສບຽງອາຫາຣແລ້ວຕ້ອງຍອມທໍ້ຖ້ອຍ ອິດຢາກ. ຝ່າຍລາວແລະໄທຍ໌ເປັນເວລາທະຫາຣເຈັບປ່ວຍຢູ່ໂດຍມາກບໍ່ມີກຳລັງພໍຈະຍົກອອກຈາກຄ້າຍໄປຣົບຫໍ້ໄດ້ດັ່ງແຕ່ກ່ອນທັງສອງຝ່າຍຈຶ່ງເປັນແຕ່ຍິງປືນໂຕ້ຕອບກັນໄປມາ. ເດືອນ ໓ ແຮມ ໑໔ ຄ່ຳ ກວານກໍຍີ່ນາຍທັພຫໍ້ພາຫໍ້ຖຶງຊາວ ອອກມາຈໍ່ຍອນຫູ້. ພຼະວົງຄ໌ກັບນາຍພັນໂທພຼະພະຫິນ (໔) ກໍຕັ້ງຮັກສາຄ້າຍບ້ານດ້າຍ. ສ່ວນນາຍຮ້ອຍເອກຫຼວງດັສກອນປລາດນັ້ນໄດ້ຍົກລ່ວງໜ້າໄປເມືອງແຖງ. ບອກໃຫ້ພຼະວົງຄ໌ທຳລາຍຄ້າຍຫໍ້ແລະຄ້າຍບ້ານດ້າຍໝົດ ແລ້ວພາຄົນລືອເທັງໄທ ກວານກໍຍີ່ກັບພັກພວກຍົກໄປໃຫ້ເຖິງເມືອງແຖງພ້ອມກັນ. ເມື່ອພຼະວົງຄ໌ສເດັຈເຖິງເມືອງແຖງໄດ້ຫຼົງປຼະທັບຢູ່ຄ້າຍຊຽງແລແລະໄດ້ຫຼົງຈັດວາງຣາຊການນຳແມ່ທັພໄວ້ເສັຈແລ້ວ ກໍຍົກລ່ວງໜ້າກ່ອນກອງທັພໄປເມືອງຫຼວງພຼະບາງທາງນ້ຳນິ່ວ ແລ້ວສເດັຈຂຶ້ນໄປບ້ານປາກອູ ນຳພຼະຍາສຸຣິໄທຍ໌ຮັບກອງທັພ ແລນຳກອງທັພນີ້ ມາເຖິງເມືອງຫຼວງພຼະບາງ ວັນພຸທເດືອນ ໔ ແຮມ ໑ ຄ່ຳ ເວລາ ໑໗ ນາລິກາ.

ປີໄກ້ ຈ.ສ. ໑໒໔໙ ສົມເດັຈພຼະເຈົ້າມະຫິນ ໆ ໂປຼດໃຫ້ພຼະວົງຄ໌ແທ່ເຈົ້າຣາຊວົງສ໌ຄຳສຸຂ ລົງໄປຖວາຍເຄື່ອງຣາຊບັນນາການສົມເດັຈພຼະຈຸລຈອມເກົ້າ. ວັນອັງຄານຂຶ້ນ ໕ ຄ່ຳເດືອນ ໗ ເວລາ ໑໑ ນາລິກາ ພຼະວົງຄ໌ໄດ້ສເດັຈລົງເຮືອພ້ອມກອງທັພໄທຍ໌ ອອກປາກລາຍເດີນທາງບົກລົງເຮືອເມືອງພິໄຊຍ໌ເຖິງກຸງເທພ ວັນອັງຄານແຮມ ໖ ຄ່ຳເດືອນ ໘ ຫຼົງປຼະທັບຢູ່ບ້ານສວລາແດງ. ວັນສຸກຣ໌ເດືອນ ໘ ແຮມ ໑໐ ຄ່ຳເວລາຍ່ຳຄ່ຳ

---

(໔). ບິດາພຼະຍາພະຫິນ ໆ ເອົາເຈົ້າຫາວຸກເຈົ້າໜູ້ກ ບ້ານສົ້ມເມືອງ ເປັນເມັຽນ້ອຍ.

ສົມເດັດພຣະເຈົ້ານ້ອງຍາເທີເຈົ້າຟ້າພານຸຣັງສີສວ່າງວົງສ໌ ກົມພຣະຍາພານຸພັນທຸວົງສ໌ວໍຣະເດຊ ຜູ້ບັນຊາການກົມຍຸທນາທິການທະຫານບົກ ໄດ້ນຳເອົາເຈົ້າໝື່ນໄວວໍຣະນາຖ ແມ່ທັພ ເຈົ້າຣາຊວົງສ໌ຄຳສຸກ ແລະພຣະວົງສ໌ເຈົ້າຣາຊພາຄີໄນຍ໌ບຸລຄົງ ກັບເຈົ້າຫ້າວພຣະຍາລາວ ທູລຖວາຍເຄື່ອງຣາຊບັນນາການ ສົມເດັດພຣະຈຸລຈອມເກົ້າ ນະ ພຣະທີ່ນັ່ງຈັກກຣີມະຫາປຣາສາທ.

ພຣະວົງສ໌ໄດ້ຮັບຂ່າວວ່າ ຫໍ້ແລະໄທຍ໌ໄລ່ ໄດ້ຍົກມາຕີເມືອງຫຼວງພຣະບາງແຕກ ເຜົາບ້ານເມືອງເສັຽແລ້ວ ຈັບເອົາພຣະຣາຊບິດາຂອງພຣະວົງສ໌ໄປປຣະຫານຊີວິຕ.

ເດືອນ ໙ ຂຶ້ນ ໕ ຄ່ຳ ຕລາຍ່ຳຄ່ຳ ພຣະວົງສ໌ສເດັຈໄປກຣາບຖວາຍບັງຄົມທູລລາພຣະເຈົ້າແຜ່ນດິນສຍາມ. ແຮມ ໓ ຄ່ຳສເດັຈອອກຈາກກຸງເທພ ພ້ອມພຣະຍານົນທະບູຣີສີເກຕຣາຣາມ (ທັດ ສິງຫ໌ເສນີ) ຂ້າຫຼວງໃຫຍ່ເມືອງຫຼວງພຣະບາງ. ນາຍພັນຕຣີພຣະດັສກອນປລັດ ນາຍທັພໜ້າກັບທະຫານ ໒໕໐ ຄົນ ຍົກຂຶ້ນມາທາງເມືອງພິໄຊຍ໌ ອອກຍົກເດີນທາງກາງວັສສາ ເຖິງປາກລາຍເດືອນ ໑໐ ຂຶ້ນ ໔ ຄ່ຳກ່ອນກອງທັພໜ້າ. ພົບຄອບຄົວຊັງໜ້າ ຊຶ່ງແຕກເສິກມາອາໄສຢູ່ປາກລາຍແລ້ວພຣະວົງສ໌ໄດ້ພາເອົາຄອບຄົວຂຶ້ນໄປເຖິງເມືອງຫຼວງພຣະບາງເດືອນ ໑໐ ແຮມຫຼັງຄັດເຄົ່ງ, ໃຫ້ຄອບຄົວມີທີ່ອາໄສຢູ່ໄວ້ແລ້ວ, ເດືອນ ໑໑ ຂຶ້ນ ໑ ຄ່ຳ ກໍຄຸມເອົາທະຫານ ໒໐໐ ຂຶ້ນໄປຕັ້ງສາງເຂົ້າ ສຳຫຼັບຈ່າຍສບຽງກອງທັພເມືອງ ໑໒ ຈຸໄທຍ໌ເມືອງຫົວພັນ ໕ ທັ້ງ ໖ ແລະຮັກສາຣາຊການຢູ່ເມືອງງອຍ. ພຣະວົງສ໌ໄດ້ສຳຣວຈຕັ້ງແຕ່ບ້ານປາກຊຸເຖິງເມືອງງອຍ ມີເຮືອນຣາສດອນຖືກຫໍ້ໄທຍ໌ໄລ່ເຜົາ ໑໐໗໐ ໝູ່ວັດ ໑ ໝູ່ ຖືກຂ້າເສິກຈັບໄປ ຊາຍ ໕໔ ຍິງ ໑໑໒ ຖືກຂ້າຕາຍ ຊາຍ ໗໘ ຍິງ ໔ຄົນ.

ປີໃລ້ ຄ.ສ. ໑໒໕໐ ພຣະວົງສ໌ໄດ້ຮັບໜັງສື ພຣະພິສລານຸຮັກສ໌ ປລັດທັພ ນຳຄຳສັ່ງຂອງພຣະຍາສຸຣິຍະສັກດິ໌ ແມ່ທັພບອກໃຫ້ພຣະວົງສ໌ລົງໄປເມືອງຫຼວງພຣະບາງ. ພຣະວົງສ໌ໄດ້ຈັດໃຫ້ພຣະຍາເມືອງແພນ (ລຽງພັນບ້ານຊຽງແມນ) ແສນນັນທະໄຊຍ໌ຄຸມໄພ່ພົລ ໕໐ ຢູ່ຮັກສາຣາຊການເມືອງງອຍ. ໃຫ້ພຣະຍາໝື່ນໜ້າ (ອາຈານບຸສດີບ້ານປາກເຊືອງ) ກັບໄພ່ພົລ ໕໐ ຢູ່ຮັກສາ

ຣາຊການທ່າຊວາ. ໃຫ້ເຈົ້າສັງຈ໌ ກັບພຍັງຕີນແຫ່ນ (ຕ້າຍເຫງັກ ບ້ານຫົວຊຽງ) ຊຶ່ງເສັ່ງເຈົ້າສ່ວຍໄວ້ສາງສິບອັດ ແລະເມືອງຊວາ ແລ້ວພຼະອົງຄ໌ກໍ່ສເດັຈລົງໄປເມືອງຫຼວງພຼະບາງ ເຖິງເດືອນ ໕ ອອກໃໝ່.

ເດືອນ ໑໒ ແຮມ ໔ ຄ່ຳ ພຼະອົງຄ໌ສເດັຈເມືອນຳພຼະມາສຸຣະສັກດ໌, ເຖິງເມືອງແກ່ງວັນສຸກຣ໌ເດືອນຈຽງຂຶ້ນ ໑໑ ຄ່ຳ ຫຼັງປຼະທັບຢູ່ຄ້າຍສາມຫມື່ນ ໄດ້ຫຼົງພົບມອງຊິເອີຣ໌ປາວີ (M. Pavie), ກອມມອງດັງເປນເນີແກງ (Commandant Pennequin) ຜູ້ບັງຄັບກອງທະຫານຝຼັ່ງເສສ ທີ່ເມືອງລ່າ, ກັປຕັນ ຄູເປ (Capitaine Cupet), ກັປຕັນ ນິກໍລອງ (Capitaine Nicolon) ມອງຊິເອີຣ໌ການລັງເຊ (M. Garanger) ມອງຊິເອີຣ໌ວາກຼ (M. Vacle) ແລະດອກເຕີຣ໌ ມາເຊ (Docteur Macey) ຊຶ່ງມາຕົກລົງຣາຊການນຳແມ່ທັພໄທຍ໌. ພຼະອົງຄ໌ສເດັຈອອກຈາກເມືອງແກ່ງພ້ອມນາຍກອງທັພໄທຍ໌ ວັນປະຫັສເດືອນຈຽງແຮມ ໖ ຄ່ຳ ເຖິງເມືອງຫຼວງພຼະບາງ ເດືອນຍີ່ຂຶ້ນ ໙ ຄ່ຳ.

ປີເປົ້າ ຈ.ສ. ໑໒໕໑ ວັນພຸຣເດືອນ ໕ ແຮມ ໘ ຄ່ຳ ພຼະມາສຸຣະສັກດ໌ໄດ້ເຊີນພຼະອົງຄ໌ໄປເຂົ້າປຼະຊຸມ ເພື່ອປຶກສາຫາລືຕົກລົງວາງຣະບຽບຣາຊການແຜ່ນດິນແລະໄດ້ຕົກລົງກັນຢ່າງຮຽບຮ້ອຍ. ສົມເດັຈພຼະມະຫິນ ຯ ໂປຼດໃຫ້ພຼະອົງຄ໌ເປັນເຈົ້າຣາຊວົງສ໌ຄຳສຸຂນຳເອົາເຄື່ອງຣາຊບັນນາການລົງໄປຖວາຍສົມເດັຈພຼະຈຸລຈອມເກົ້າ. ວັນພຸຣເດືອນ ໙ ຂຶ້ນ ໙ ຄ່ຳ ຫຼັງວັນທີ ໒໕ ມກຣາຄົມ ຣ.ສ. ໑໐໘ (໕) ພຼະອົງຄ໌ສເດັຈລົງເຮືອທ່າຫ້ວຍຊັ້ນພ້ອມພຼະມາສຸຣະສັກດ໌ ອອກເມືອງຫນອງຄາຍເດີນທາງບົກໄປລົງເຮືອເມືອງສຣະບູຣີ ເຖິງກຸງເທພ ເດືອນ ໔ ມີນາຄົມ ຫຼັງປຼະທັບຢູ່ບ້ານສາລາແດງທາງເດີນ. ກົມພຼະຍາພານຸພັນທຸວົງສ໌ວໍຣະເດຊໄດ້ນຳເອົາພຼະມາສຸຣະສັກດ໌ແມ່ທັພ ເຈົ້າຣາຊວົງສ໌ຄຳສຸຂແລະພຼະອົງຄ໌ເຈົ້າຣາຊທາຕາໄນຍ໌ບຸລຄົງກັບເຈົ້າຫ້າວພຼະມາລາວ ທູລຖວາຍເຄື່ອງຣາຊບັນນາການສົມເດັຈພຼະ-

24/VII

---

(໕). ສມາຄົມໃຊ້ວັນທີເດືອນປີ ຮັຕນະໂກສິນທຣສົກ ໝາຍຄວາມວ່າເລີກໃຊ້ວັນເດືອນຈັນທຣະຄະຕິການ ຄືໃຊ້ວັນເດືອນທາງສຸຣິຍະຄະຕິການ.

ທູລກອມເກົ້ານະພຼະທີ່ນັ່ງຈັກກີມະຫາປຼາສາທ. ພຼະອົງຄ໌ໄດ້ຮັບພຼະຣາຊທານບັນດາສັກດ໌ຂຶ້ນເປັນເຈົ້າອຸປຣາຊ (ປຼະກາສນີຍະບັດລົງວັນທີ ໑໙ ມະກຣາຄົມ ຣ.ສ. ໑໐໙ ຕຼົງວັນອັງຄານເດືອນ ໓ ຂຶ້ນ ໗ ຄ່ຳ ປີຂານ ຈ.ສ.໑໒໕໑) ພຼະອົງຄ໌ທຼົງປຼະທັບຢູ່ກຸງເທພຈົນເຖິງປີເໝົ້າ ຈ.ສ. ໑໒໕໓ ຣ.ສ. ໑໑໐ ຈຶ່ງໄດ້ກຼາບຖວາຍບັງຄົມທູລລາກັບມາຫາບ້ານເມືອງ, ທາງເມືອງພີໄຊຍ໌ປາກລາຍເຖິງເມືອງຫຼວງພຼະບາງເດືອນ ໔. ສເດັຈມາຄັ້ງນີ້ ໄດ້ເອົາຄູທຸມາສອນໜັງສືຕັ້ງໂຮງຮຽນໃສ່ກຸຕິວັດວິຊຸນ ເອົານາຍເດຊເດຊາມາເຝິກຫັດລະຄອນລີ້ບ້ານຜານົມ, ເອົາພຼະພູມານປປຸຕມາເປັນຫົວໜ້າຊ່າງໄມ້ ເອົາເຈົ້າທອງສູນນ້ອງເຈົ່ມທີ່ຮຽນຢູ່ນຳຄູອັງກິລສຊື່ປລັນໂດ ແລະມິສກາໂດມາເປັນຫົວໜ້າຊ່າງກໍ່ ສ້າງບ້ານ, ສ້າງເມືອງ ສາງເໝືອງສ້າງຝາຍ (ສ່ວນຝາຍແລະເໝືອງນ້ຳປາເອົ້າທົ່ງນາພັນຫຼວງພັນ ຄະລາມີພຼະຄັງລາວກອງປຼະຊຸມທຳສນານຫຼວງເພື່ອນະມຸຍາສໃຫ້ພຼະອົງຄ໌ສ້າງໂດຍຫາວ່າພຼະອົງຄ໌ຄິດໃຫຍ່ໃສ່ຫຼວງ). ຈົນເຖິງ ຄ.ສ. ໑໙໐໙, ປີສ້າງທຳຄຳສັນເດັລພຼະເຈົ້າສີສວ່າງວົງກໍ່ເຄີຍທຸບຊ່າງລາວໃຫ້ໄປຫັກມືຊ່າງໂທລໝົດ.

ປີໃສ້ ຈ.ສ. ໑໒໕໕ ເດືອນ ໓ ກອງທະຫານຝຼັ່ງເສສຊູໄທຍ໌ໜີອອກຈາກຝັ່ງຊ້າຍແມ່ນ້ຳຂອງ ພວກໄທຍ໌ທຳພິດສັລຍາ.ເດືອນ 7 [illegible] ຂຶ້ນ ໗ ຄ່ຳ ພຼະອົງຄ໌ເກນພົລຮົບມາຫ້າງເຄື່ອງສາສຕຣາວຸທໄວ້ສຳຫຼັບປ້ອງກັນເມືອງຫຼວງພຼະບາງ. ມີເຈົ້ານາຍຄິດອິສສາພຼະອົງຄ໌ໄດ້ໄປຟ້ອງຕໍ່ທ່ານລູກັງຮອງກົງສຸລ (M. Lugan vice-consul) ຜູ້ຄ້າຍກົງສຸລ ເທົາທ່ານີສີໄວພວກບ້ານຊຽງແມນພັ້ນ ວ່າພຼະອົງຄ໌ຫ້າງເຄື່ອງສາສຕຣາວຸທຈະຣົບຝຼັ່ງເສສ, ໝາຍຈະໃຫ້ພຼະອົງຄ໌ຖືກຄຸກຕິດຕາລາງ ອັປປີສຊອນຊີເສັ້ຽສ້ຽງສິ້ນເຊື້ອດັບສກຸລ. ທ່ານທ່ານລູກັງຈຶ່ງໃຊ້ໃຫ້ທ່ານລາກໄປທູລຖາມພຼະອົງຄ໌ວ່າ: "ສເດັຈຈະຣົບຝຼັ່ງເສສຫຼື?" ພຼະອົງຄ໌ທຼົງຕອບວ່າ: "ໄທຍ໌ບອກຂ້າພະເຈົ້າຣົບຂ້າພະເຈົ້າກໍ່ຈະຣົບ ຄັນຂ້າພະເຈົ້າຢູ່ກ້ອງບັງຄັບຝຼັ່ງເສສແລ້ວ, ຝຼັ່ງເສສບອກຂ້າພະເຈົ້າຣົບໄທຍ໌ ຂ້າພະເຈົ້າກໍ່ຈະຣົບ". ທ່ານລູກັງແລະທ່ານລາກຈຶ່ງໃສ່ໃຈໄວ້ວ່າ ພຼະອົງຄ໌ເປັນຄົນສລາດຫຼັກແຫຼມຮັກຊາຕິສາສນາ ແລະຊື່ສັດສຸຈຣິຕຕໍ່ບ້ານເກີດເມືອງນອນຢ່າງທີ່ສຸດ.

ເມື່ອວັນທີ ໓ ອົກໂຕບ ໑໘໙໓ ສົມເດັຈພຼະເຈົ້ານ້ອງຍາເທີ ກົມໝື່ນເທວາວົງຄ໌ວະໂຣປະກາຣເສນາບໍດີ ກະຊວງກາຣ

ຕ່າງປະເທສສຍາມໄດ້ຊຸ່ນສັລຍາກັບຝຣັ່ງເສສ ມອບມຶກເມືອງຫຼວງພຣະບາງໃຫ້ຝຣັ່ງເສສແລ້ວ ພຣະມະຫາຣາຊຄູທັບວັດໃໝ່ ຈຶ່ງເຂົ້າໄປກາບພຣະບາທສົມເດັຈພຣະເຈົ້າສາງວາງນະຫິນ ໆ ວ່າ: "ບັດນີ້ເມືອງເຮົາຈະຕົກຢູ່ໃນຄວາມປົກຄອງຂອງຝຣັ່ງເສສ ຈົ່ງເຊີນພຣະອົງຄ໌ຫຼີກຫົກລົງກັບປາລີ ຕັ້ງເຈົ້າຣາຊວົງຄ໌ສີສຸພັນທ໌ຂຶ້ນເປັນເຈົ້າອຸປຣາຊ, ເຈົ້າກູລພຣະຄັງຄຳເຫຼົ້າເປັນເຈົ້າຣາຊວົງຄ໌ ເຈົ້າສີສົມໄຊຍ໌ເປັນເຈົ້າຣາຊບຸຕ ເຈົ້າກູລນະຊ້າງຄຳປານເປັນເຈົ້າຣາຊສັມພັນທະວົງຄ໌ ຈັດຣາຊການບ້ານເມືອງຊ່ວຍສົມເດັຈພຣະເຈົ້າສັກກະຣິນ ໆ ອົງຄ໌ນີ້ຈຶ່ງຈະເປັນທີ່ໄວ້ເນື້ອເຊື່ອໃຈໄດ້ ເພາະເປັນພີ່ອ້າຍນ້ອງຊາຍກັນ. ສົມເດັຈພຣະເຈົ້າກໍ່ເຖົ້າແກ່ຊຣາມາແລ້ວ ບໍ່ຫຼັກຄິດແລະຈັດແຈງໄວ້ໃຫ້ລູກເວລານີ້ເຫັນຈະບໍ່ໄດ້ການ ເພາະເວລານີ້ເປັນຊ່ອງໂອກາສອັນດີ."

ວັນໜ້າມາສົມເດັຈພຣະເຈົ້າສັກກະຣິນ ໆ ໂປຣດໃຫ້ຕັ້ງໂຮງພິທີ ປຣະດັບດ້ວຍມາລາມາລີຢ່າງງົດງາມ ໃສ່ໃນພຣະຣາຊວັງຫຼວງນີ້ເບື້ອງເໜືອ ກັບຫຼັງກະດຸຕາໂປຣດໃຫ້ເຊີນເຈົ້ານາຍເສນາອາມາຕຍ໌ຂ້າຣາຊການທັງຫຼາຍ ແຕ່ງເຄື່ອງເຕັມຍົສ ເສື້ອເຍັຽຣະບັບ ຜ້າພົກຕາມກ້ວນຜູ້ໃຫຍ່ຜູ້ນ້ອຍ ແລະປ່າວໃຫ້ພົລເມືອງມາໂຮມໃນພຣະຣາຊວັງ ເພື່ອຄອຍຮັບທ່ານຣາຊທູຕປາວີ ທ່ານລູກັງແລະທ່ານວູລາກ ຈະຈາກຄ້າຍກົງສູລມາເຂົ້າເຝົ້າ ແລະອ່ານປຣະກາສຂອງຣັຖບາລຝຣັ່ງເສສທູລກາບຍູ່ມີໃຈຄວາມວ່າ: "ປຣະເທສຝຣັ່ງເສສຈະຊ່ວຍປົກປັກຮັກສາປຣະເທສລ້ານຊ້າງໃຫ້ຢູ່ເຢັນເປັນສຸຂ". ແລ້ວກໍ່ຊັກທຸງສາມສີຂຶ້ນໜ້າໂຮງພິທີ ເປົ່າແກຄຳນັບ. ຄັ້ງນີ້ຊ້ຳພັດມີເຈົ້ານາຍຄິດອິສສາພຣະອົງຄ໌ອີກຕື່ມ ເອົາຣັບສັ່ງສົມເດັຈພຣະເຈົ້າສັກກະຣິນ ໆ ໄປທູລພຣະອົງຄ໌ວ່າ "ບໍ່ຕ້ອງໃຫ້ພຣະອົງຄ໌ຫຼົ່ງເຄື່ອງເຍັຽຣະບັບເຕັມຍົສ". ພຣະອົງຄ໌ໄດ້ຫຼົ່ງເສື້ອຂາວກັບຜ້າມ່ວງ ເມື່ອເຂົ້າໂຮງພິທີນີ້ກັບພຣະອົງຄ໌ສເດັຈເຂົ້າໄປແລ້ວ ເຫັນເຈົ້ານາຍຜູ້ມີບັນດາສັກນ້ອຍກວ່າພຣະອົງຄ໌ ຫຼົ່ງເຄື່ອງເຍັຽຣະບັບເຕັມຍົສນັ່ງເກົ້າອີ້ລຽນຢູ່ເອີ່ມເອີມ ແລ້ວທະຫານຝຣັ່ງຈະມາເຊີນພຣະອົງຄ໌ຂຶ້ນນັ່ງເກົ້າອີ້ກໍ່ບໍ່ມີ ພຣະອົງຄ໌ໄດ້ນັ່ງພັບພຽບຢູ່ສາດພື້ນໂຮງພິທີ ຣາສດອນຜູ້ບໍ່ດີເຫັນດັ່ງນັ້ນກໍ່ເວົ້າວ່າ: "ເຈົ້າຢຳຂນ່ອນວັງໃຕ້ບໍ່ມີໄດ້ເປັນວັງໜ້າ ມີແຕ່ຈະພາເອົາລູກຫຼານກີພ້າເຈົ້າປ່າພົນໄຮ່ສູກັນກິນທໍ່ນັ້ນແລ້ວ" ຄວາມນີ້ຊວດພຣະກັຕຕໍພຣະອົງຄ໌ ໆ ກໍ່ບໍ່ສເທືອນ.

ຄ.ສ. ໑໘໙໖ ເດືອນເຊຸອນ ທ່ານຜູ້ສຳເຣັຈຣາຊການຫົວເມືອງລາວ ບຸໂລສ (M. Boulloche, Résident supérieur au Laos) ມາເຖິງເມືອງຫຼວງພຣະບາງ ພັກຢູ່ຄ້າຍວັດໂພນເກືອ ບ່ອນຕັ້ງບັງກາໂລ ໄດ້ເຊີນເອົາເຈົ້ານາຍອົງທີ່ຈະເປັນອຸປຣາຊ ຣາຊວົງ ຣາຊບຸດ ແລະຣາຊສັມພັນທະວົງ ມາສອບຖາມຣະບຽບຣາຊການບ້ານເມືອງ ແລະບອກໃຫ້ຊີ້ແຜນທີ່ກັບສັ້ກົງດິນ ບໍ່ມີອົງໃດຕອບທ່ານໄດ້ ມີແຕ່ທົບໆ ທວນໆ ແລ້ວກໍ່ຂໍລາໜີໄປ. ຄັນທ່ານເຊີນເອົາພຣະອົງເຈົ້າໄປຖາມ ຣະບຽບຣາຊການປົກຄອງບ້ານເມືອງ, ພຣະອົງກໍ່ບໍ່ລືມ, ໃຫ້ພຣະອົງຊີ້ແຜນທີ່ອານາເຂດບ້ານເມືອງ ພຣະອົງກໍ່ບໍ່ຫຼົງ, ສັ້ກົງດິນ ພຣະອົງກໍ່ບໍ່ລືມ. ທ່ານຜູ້ສຳເຣັຈຣາຊການຈຶ່ງທູລພຣະອົງວ່າ "ຂໍສັນຣະເສີນສເດັຈ ອັກນວລປົກຄອງຈະຂໍເພິ່ງຄວາມຮູ້ຂອງສເດັຈຊ່ວຍຈັດຣາຊການບ້ານເມືອງ ຂ້າພຣະເຈົ້າຈະຣຽນໄປຍັງກູແວກເນີນຊເນຣັນ ຕັ້ງສເດັຈຂຶ້ນເປັນເຈົ້າມະຫາອຸປຣາຊ" ພຣະອົງຫຼົງຕອບທ່ານຜູ້ສຳເຣັຈຣາຊການວ່າ "ຂ້າພຣະເຈົ້າຂໍຂອບໃຈທ່ານຜູ້ສຳເຣັຈຣາຊການ ຄວາມຮູ້ຂອງຂ້າພຣະເຈົ້າມີເທົ່າໃດ ຈະຂໍຊ່ວຍຣາຊການໂດຍເຕັມກຳລັງ ແລະດ້ວຍຄວາມຊື່ສັດສຸຈຣິດທີ່ປະໂຫຍດຝູງເສສ". ແລ້ວທ່ານຜູ້ສຳເຣັຈຣາຊການກໍ່ເອົາພຣະອົງສເດັຈຂຶ້ນໄປບ້ານຫ້ວຍຊາຍ ເພື່ອຫຼວງຄູແດນດິນປັກເຂດທີ່ໝາຍແດນເຂວງຫົວຂອງ.

ຄ.ສ. ໑໘໙໗ ພຣະອົງໄດ້ເປັນສົມເດັຈພຣະຣາຊອະນຸຊາ ບໍຣົມໂຊຍກຸະຊັດທິພະ ສຸຣິພະ ພຣະຣາຊວົງສາ ກັບພຣະຣາຊວັງບໍວໍຣະສຖານ ມົງຄົນຣາຊທິປະຕີສີສຸວັດຕາ ຊະທຳຜ່າຍໜ້າ ຫຼືສຳເຣັຈຣາຊການແຂວງຝັ່ງຂວາທາງວັນຕົກແມ່ນ້ຳຂອງ ຄືເມືອງປາກລາຍ ເມືອງໄຊຍະບູຣີ ແລະເມືອງຫົງສາ. ຕັ້ງທີ່ວ່າຣາຊການໃສ່ເຫ້ງທ່າຄົກເຮືອບ້ານຊຽງແມນ.

ຄ.ສ. ໑໘໙໙ ວັນທີ ໑໐ ໂນວອມ ຫຼືວັນພຸດ ເດືອນ ໑໒ ແຮມ ໑໑ ຄ່ຳ ພຣະອົງສເດັຈໄປແທນສົມເດັຈພຣະເຈົ້າສັກກະຣິນ ໆ ຢ້ຽມຢາມຄຳນັບທ່ານກູແວກເນີຣ໌ເຊເນຣັນໂປນດູແມຣ໌ (M. Le Gouverneur Général Paul Doumer) ທີ່ເມືອງໄຊ່ງ່ອນ ແລະນຳເອົາເຈົ້າສີສວ່າງວົງສ໌ ຣັຊຊະກຸມາຣ ກັບເຈົ້າສີສເລີມສັກດ໌ ໄປເຂົ້າໂຮງຮຽນ ຊາສຸເລີຈູບາລຸບາ (Collège Chasseloup-Laubat)

ສເດັຈກັບຄືນເຖິງເມືອງຫລວງພຣະບາງ ວັນທີ ໑ ມາກສ໌ ໑໙໐໐.

ຄ.ສ. ໑໙໐໐ ວັນທີ ໑ ຊວງ ສົມເດັຈພຣະເຈົ້າສັກກະຣິນ-ໂປຣດໃຫ້ພຣະອົງຄ໌ເປັນຫົວໜ້າກອງຜົນທະຄາລາວ ກໍສຸກະວັກ ພຣະນຳເອົາທັບລອກໄມ້ເງິນຄຳ ໄປຄ່ວພັບທ່ານເອມີລລູເບ, ພຣະ-ຣາຊາທິບໍດີແຫ່ງສາທາຣະນະຣັດຝຣັ່ງເສສ ເວລາບຸນໃຫຍ່ທີ່ກຸງປາ-ຣີສ (Exposition Universelle Paris 1900) ໄດ້ຊົງປຣະທັບຢູ່ບ້ານ-ປາສຊີ ທາງເສັຍທີ ໑໖ (Passy XVIᴱ) ແລ້ວນຳເອົາເຈົ້າສີສວ່າງວົງສ໌ ຣັຊຊະທາຍາທ ກັບເຈົ້າສີສເລີມສັກ ໄປເຂົ້າໂຮງຮຽນໂກໂລນີຍານ (Ecole coloniale) ສເດັຈກັບຄືນເຖິງເມືອງຫລວງພຣະບາງ ວັນທີ ໕ ເດຊອນ.

ຄ.ສ. ໑໙໐໑ ພຣະອົງຄ໌ໄດ້ຍ້າຍທີ່ວ່າການເຂວງຝັ່ງຂວາມາໄວ້ໃນພຣະຣາຊວັງຂອງພຣະອົງຄ໌ ແລ້ວຊົງຕັ້ງທີ່ວ່າຣາຊການເຂວງກຳ-ແພງເມືອງດ້ວຍ.

ຄ.ສ. ໑໙໐໕ ພຣະອົງຄ໌ໄດ້ເປັນສົມເດັຈພຣະຣາຊບິດາ-ຊົງສຳເຣັຈຣາຊການເຂວງຝັ່ງຂວາ ແລະເຂວງກຳແພງເມືອງ.

ເດືອນ ໓ ສົມເດັຈພຣະເຈົ້າສີສວ່າງວົງສ໌ ໂປຣດໃຫ້ພຣະອົງຄ໌ສເດັຈໄປປັກປັນເຂຕແດນເຂວງຝັ່ງຂວາ ພ້ອມກັບນາຍພັນເອກເບີນາ (Commandant Bernard) ຫົວໜ້າຜູ້ແທນຝ່າຍຝຣັ່ງ-ເສສ ຂຸນເທັນໝ່ອມເຈົ້າພີທາຊີ ເດຊຸດິນທຣ ຫົວໜ້າຜູ້ແທນຝ່າຍໄທຍ໌. ສເດັຈຣາຊການຄັ້ງນີ້ໄດ້ ໔ ເດືອນ ເສສຈຶ່ງໄດ້ເມືອງດ່ານ-ຊ້າຍ ເມືອງແກ່ນທ້າວແລະເມືອງບໍ່ແຕນ ມາຂຶ້ນອານາຈັກຣ໌.

ຄ.ສ. ໑໙໐໘ ເດືອນຊວງອີເຍ ພຣະອົງຄ໌ໄດ້ພາເອົາທ່ານຊູລຽງເດັນປີ ຫົວໜ້າການສຳຣວດເສຖະກິຈພຣະເທສລາວ (M. Julien Delpit, Chef de la mission Economique du Laos) ເມື່ອຫຼວງພຣະໄປເປີດໃໝ່ເຂວງເມືອງຫົງສາ.

ຄ.ສ. ໑໙໑໐ ພຣະອົງຄ໌ຊົງມີພຣະຣາຊສັທທາ ປະຕິສັງ-ຂອນວັດທາດຸຂຶ້ນໃໝ່ແທນຂອງເກົ່າ ທີ່ພຣະໄຊຍ໌ເຊຊຖາທິຣາຊທີ ໑ ຊົງສ້າງ ເມື່ອ ພ.ສ. ໒໐໙໑, ວັດທາດຸນີ້ຖືກວາຕະພັຍ ພ.ສ. ໒໔໔໓ ຕົງກັບ ຄ.ສ. ໑໙໐໐, ພ້ອມກັບກຸຕິສົມເດັຈພຣະສັງຄະຣາຊ ກັບປະຊຸມທູບກັນຍ໌ຫຼາຍຫຼັງ ແລະກຳແພງ~~ເມືອງ~~ເບື້ອງໃຕ້.

ຄ.ສ. ໑໙໑໑ ພຣະອົງຄ໌ເປັນອະທິບໍດີຫ້ອງການທີ ໑ ທຳ-

ສນາບຫຼວງ (Directeur du 1er Bureau) ຕາມພຣະຣາຊໂອງກາຣເລຂທີ ໑໒ ລົງວັນທີ ໒໕ ມາກສ໌ ໑໙໑໑ ຫຼົງສຳເຣັຈຣາຊກາຣເຂວງຝັ່ງຂວາແລະເຂວງກົ່ວເພາະເມືອງຕາມເດີມ.

ສົມເດັຈພຣະເຈົ້າສີສວ່າງວົງສ໌ ໂປຣດໃຫ້ພຣະວົງສ໌ສເດັຈເມືອເຂົ້າກອງປຣະຊຸມຣັຖບາລອິນດູຈີນ (Conseil du Gouvernement de l' Indochine) ວັນທີ ໒໒ ເດຊອມ ໑໙໑໑ ທີ່ເມືອງຮາໂນຍ ຕາມດຳຣັສກູເວີເນີຣ໌ເຊເນຣັນ ລົງວັນທີ ໙ ເດຊອມ ໑໙໑໑. ເມືອເຂົ້າປຣະຊຸມ ພຣະວົງສ໌ໄດ້ຫຼົງພົບນາຍພົລເປນເນີແກງ (Général Pennequin) ຜູ້ບັນຊາກາຣທະຫາຣທະຫາຣສູງສຸດອິນດູຈີນ. ແມ່ທັພຜູ້ນີ້ ເມື່ອ ຄ.ສ. ໑໘໘໘ ເວລາພຣະວົງສ໌ເປັນເຈົ້າຣາຊກາຄີໄນຍ໌ສເດັຈເມືອທັພເມືອງແຖງ ພຣະວົງສ໌ໄດ້ຮູ້ຈັກທ່ານເວລານັ້ນທ່ານເປັນນາຍທັພຕີ້ (ກວນນອງດອງ). ຕັ້ງແຕ່ປີນັ້ນມາ ຂ້າພະເຈົ້າແລະເຈົ້ານາຍຊາວສກັນສກຸລຕ່ຳ ເມືອງຫຼວງພຣະບາງຈຶ່ງພົ້ນຈາກເສັຽສ່ວຍຕລອດມາ ຄັນຫມົດບຸນພຣະວົງສ໌ແລ້ວ ກໍ່ພາກັນຊົ່ວທຸກຂ໌ກັບໄດ້ເສັຽສ່ວຍອີກ.

ຄ.ສ. ໑໙໑໔ ສົມເດັຈພຣະເຈົ້າສີສວ່າງວົງສ໌ ໂປຣດໃຫ້ພຣະວົງສ໌ສເດັຈເມືອຮັບທ່ານເມໄຣຍ໌ ສາລະວັດໃຫຍ່ຫົວເມືອງຂຶ້ນ (M. Méray, Inspecteur Général des colonies) ທີ່ເມືອງຍູ້. ໃນໂອກາສນີ້ພຣະວົງສ໌ໄດ້ຮຽກຮ້ອງຕໍ່ສາລະວັດຜູ້ນີ້ ຂໍໃຫ້ລົບລ້າງພຣະຣາຊສັລຍາ ຊຶ່ງຜູ້ສຳເຣັຈຣາຊກາຣຝຣັ່ງເສສປຣະຈຳປຣະເທສລາວ ບອກຊີເຢເຊັງຊາຟຟຼາຍ (Bourcier Saint Chaffray) ບັງຄັບສົມເດັຈພຣະເຈົ້າສີສວ່າງວົງສ໌ເຊັນພຣະນາມາພິໄທໃສ່ຫຼຽບ ບໍ່ໃຫ້ມີຄັງລາວ ແລະເຈົ້າມະຫາອຸປຣາຊວັງຫນ້ານັ້ນ ສັລຍາສບັບນີ້ກໍ່ຖືກລົບລ້າງຄືນເສັຽຕາມພຣະປຣະສົງຄ໌.

ຄ.ສ. ໑໙໑໓ ວັນທີ ໑໐ ຊວງ ຕົງກັບວັນປະຫັສ ເດືອນ ໗ ແຮມ ໘ ຄ່ຳ ເວລາ ໑໑ ນ.໒໐ ເກີດອຸບັຕິເຫຕຸ ພຣະວົງສ໌ຫັກຣົຖນ້າວປ່ຽວຢູ່ປະຕູວັງ ເມື່ອສເດັຈຈາກທີ່ວ່າກາຣກອມມີແຊຣ໌ກູເວຣ໌ເນີນອງ.

ຄ.ສ. ໑໙໑໕ ວັນທີ ໒໒ ຊວງວິເຢ ພຣະວົງສ໌ສເດັຈໄປຢ້ຽມເມືອງໄຊງ່ອນ. ກັບຄືນມາເຖິງເມືອງຫຼວງພຣະບາງ ແລ້ວໄດ້ຖືກຕັ້ງເປັນອະທິບໍດີກົມໂຍທາ (Directeur des Travaux Publics) ຕາມພຣະຣາຊໂອງກາຣເລຂທີ່ ໒໕ ລົງວັນທີ ໑໒ ໂນວອມ ໑໙໑໕. ພຣະ-

ອົງຄ໌ເສັງຊາເບື້ອງຂວາເໝືອນພຼະຣາຊບິດາ ສເດັຈໄປມາບໍ່ຂາດ ຈຶ່ງໄດ້ຫຼົງອິດລວກ ອຸສາຫ໌ເພື່ອທຳຣາຊການແຜ່ນດິນ.

ຄ.ສ. ໑໙໑໗ ພຼະອົງຄ໌ມີພຼະຣາຊສັທທາສ້າງຮາວທຽນ ມອບໄວ້ກັບພຼະພຸທທະສາສນາ: ອັນນຶ່ງສູງ ໒ ມ.໙໐ ກວ້າງ ໒ ມ.໒໐ ຄວັດຮູບຄຸຫາປີກປິການາຄຣາຊຕີນຢ່ຳເຈ້ ສຳຫຼັບພຼະພຸທທະສິນາວັດຣາຕຸ. ກູບອັນນະການທຳສານບຫຼວງຄາດອາຄາ ໖໐໐໐ ຫຼຽນ ໃຫ້ຣາຊການເອົາໄປປຼະຊຸມການບຸນໃຫຍ່ທີ່ກຸງປາຣີສ ຄ.ສ. ໑໙໓໑ ດຽວນີ້ເອົາມາໄວ້ໃນວັດອົງຄ໌ຕື້ເມືອງວຽງຈັນທນ໌, ອັນນຶ່ງສູງ ໒ ມ.໒໐ ກວ້າງ ໑ ມ.໘໐ ຄວັດຮູບພຼະຣາມຣົບຍັກສ໌ທັສກັນຍັນໄລຍ໌ຄົສສາຣທື່ນເຕັ້ນທົ່ວປ່າເກາະລັງກາ ຕັ້ງຢູ່ໃນພຼະພຸທທະສິນາວັດຣາຕຸຫຼວງ ແລະອັນນຶ່ງສູງ ໒ ມ.໔໐ ກວ້າງ ໑ ມ.໘໕ ຄວັດຮູບກອງທັພທະນຸມານຣົບຍັກທັສເຣຊ: ພວກວານຣມັດສອກຍັກສ໌ ໆ ດີ້ນ ແຜ່ນດິນໄຫວເຄື່ອງຮອດເທພບຸຕ ພາລີເຫາະລົງມາເບິ່ງສຳຫຼັບພຼະພຸທທະສິນາວັດໃໝ່ ໆ ບໍ່ຮັບເອົາ ໄດ້ເອົາມາຕັ້ງໄວ້ໃນພຼະພຸທທະສິນາວັດຣາຕຸ.

ຄ.ສ. ໑໙໑໙ ພຼະອົງຄ໌ທອບພຼະໄທຍ໌ ເພາະຫຼາຍຄົນເປັນຫ່ວງໄຍ ທາຣາສດອນບ້ານເມືອງຈະຕົກທຸກຂ໌ໄດ້ຍາກລຳທາກເມືອງພາຍໜ້າ ພຼະອົງຄ໌ຫຼາຍປຼະຊວນຢູ່ບໍ່ຂາດ ມ ມື້ດີ ໔ ມື້ໄຂ້ ປານນັ້ນຍັງບໍ່ຫຼຸດຢ່ອນອຸສາຫ໌ເພື່ອທຳຣາຊການຕໍ່ໄປ.

ຄ.ສ. ໑໙໒໐ ວັນທີ ໒໖ ຊຸຍເລ ຕົງວັນຈັນທຣ໌ ຂຶ້ນ ໑໐ ຄ່ຳເດືອນ ໙ ມື້ຮັບເສົ້າ ປີສັນ ຈ.ສ. ໑໒໘໒ ເວລາ ໑໘ ນ ໑໕ ນໍ ສິ້ນແສງອັສດົງພຼະອົງຄ໌ກໍ່ສເດັຈທິວງຄົຕ ພຼະຊົນມາຍຸ ໖໓ ປີ

ພຼະອົງຄ໌ໄດ້ຮັບ ເຄື່ອງຣາຊອິສສຣິຍາພຣນ໌ຊັ້ນສູງຕ່າງຕໍ່ໄປນີ້:

ມົງກຸຕສຍາມຊັ້ນທີ ໓ ວິຈິຕຣາພຣ ເປັນບຳເໜັຈຄາວສເດັຈເມື່ອຣົບຫໍ້ທີ່ຊຽງຄຳເຊຽງຍວນ ປີມົດ ຈ.ສ. ໑໒໔໕ ເມື່ອຍັງບໍ່ໄດ້ເປັນເຈົ້າຣາຊພາຄີໄນຍ໌.

ຊ້າງເຜືອກສຍາມຊັ້ນທີ ໓ ນິພາພຣເປັນບຳເໜັຈຄາວສເດັຈເມື່ອຣົບຫໍ້ບ້ານຕ້າຍ ເມືອງສິບເອດຫົວພັນ ໕ ທັງ ໖ ປີເຮົ້າ ຈ.ສ. ໑໒໔໗ ເມື່ອໄດ້ເປັນເຈົ້າຣາຊພາຄີໄນຍ໌.

ອອຟີຊີເຍເລຢົງດົນເນີຣ໌ຊັ້ນທີ ໔ ຝຼັ່ງເສສ ເປັນບຳເໜັຈຄາວສເດັຈເປັນຫົວໜ້າກອງສັນທະຄະນະລາວໄປບຸນໃຫຍ່ທີ່ກຸງປາຣີສ ຄ.ສ. ໑໙໐໒.

ກອມມອງເດີຣ໌ເລຢັງດົນເນີຣ໌ຊັ້ນ ນ ຝລັ່ງເສສ ເປັນບຳເໜັດທີ່ໄດ້ທຳຣາຊການແຜ່ນດິນຈົນເຖົ້າແກ່ຊຣາ.

ສ່ວນຣັຖບາລຝລັ່ງເສສໄດ້ປຼະທານເງິນຄ່າອົນດູລົນສອງພັນຫຼາຍປີພຼະອົງນັ້ນ (Arrêté Gougal du 24-8-1920 et T.O. № 2358-H du 26 Août 1920) ກໍ່ເປັນພຼະເດຊພຼະຄຸນຢູ່ແລ້ວ ແຕ່ເຫັນວ່າຍັງບໍ່ພໍ ພຼະເຈົ້າຍັງທຣົງສີ່ອັກຄະອໍຣາຊເທວີບໍ່ໃຫ້ມີເງິນບຳຣຸງແມ່ໝ້າຍເລີຍ ແລະຕັ້ງແຕ່ນັ້ນມາຊົ່ວບໍ່ໃຫ້ມີເຈົ້າມະຫາອຸປຣາຊວັງໜ້າສືບແທນ ດ້ວຍເຫດວ່າສານພຼະຣາຊສັນຍາ (Convention) ຊຶ່ງສົມເດັດພຼະເຈົ້າສີສວ່າງວົງສ໌ໄດ້ຫຼົງທຳກັບກູແວຣ໌ເນີຣ໌ຊູເນຣັນ ອັນເບຣ໌ສາໂຣ ທີ່ເມືອງຮາໂນຍ ລົງວັນທີ ໒໔ ຂາວອິນ ໑໙໑໗ ມາຕຼາ ໙ ນັ້ນ ໄດ້ບັລລັດທີໄວ້ວ່າ ໝົດຊົ່ວເຈົ້າບຸນຄົງແລ້ວບໍ່ໃຫ້ມີເຈົ້າມະຫາອຸປຣາຊວັງໜ້າຕໍ່ໄປ.



ບ່າວປະຈຳອງຄ໌ເຈົ້າມະຫາອຸປຮາຊບຸລຄງ
ຊ້າຍໄປຂວາ : ທິດແກ້ວລາ ບ້ານປ່າໄຜ່ ເຫົ່າສເດັຈໄປກຸງປາຣີສ,
ແສນໃຫມ່ເຜີ້ວບ້ານລະແບດ ເຫົ່າສເດັຈໄປກຸງເທພ ຯ
ແລະຊຽງຕັນບ້ານຜານົມ ເຫົ່າສເດັຈເມືອຣົບຫໍທົ່ງຊຽງຄຳແຂວງ
. ພວນ.

ລຳດັບສກຸລ
ເຈົ້າມະຫາອຸປຣາຊບຸນຄົງ

ເຈົ້າມະຫາອຸປຣາຊບຸນຄົງ ມີພຣະຊາຍາບ້ານແລະໝ່ອມ ໑໑ ຄົນ ຣາຊໂອຣົສ ໑໑ ອົງຄ໌ແລະຣາຊທິດາ ໑໓ ອົງຄ໌ ດັ່ງແຈ້ງຕໍ່ໄປນີ້:

໑. ເຈົ້າຄຳຄົ້ນ ອັຄຄະຊາຍາບ້ານປ່າຂາມ ມີບຸດຊາຍດຽວຊື່ເຈົ້າສມຸຫຊາຍຄຳ.

໒. ເຈົ້າທອງສີ ນ້ອງສາວເຈົ້າຄຳຄົ້ນ ອັຄຄະວໍຣາຊເທວີ ມີບຸດຊາຍຊື່ເຈົ້າຈິດຕຣາຊ ເຈົ້າເພັດຊຣາຊ ເຈົ້າສຸວັນນະພາລິນ ແລະເຈົ້າສຸວັນນະພູມາ ບຸດຍິງຊື່ເຈົ້າສາວຄຳ ເຈົ້າສຽນຄຳ ແລະເຈົ້າຄຳຫຼ້າ.

໓. ເຈົ້າຄຳແວ່ນ ມີບຸດຍິງອົງຄ໌ດຽວຊື່ ເຈົ້າເສງສຸຣິຈັນທ໌.

໔. ເຈົ້າໂສມທັສນີ ມີບຸດຍິງຊື່ເຈົ້າວັທນາ ບຸດຊາຍຊື່ເຈົ້າຂັຕຕິຍະວົງຄ໌.

໕. ເຈົ້າຈັນທະຣາສີ ບໍ່ມີບຸດຈັກອົງຄ໌.

໖. ເຈົ້າທອງດີບ້ານສັງຂະໂລກ ມີບຸດຍິງອົງຄ໌ດຽວຊື່ເຈົ້າພິສມັຍ.

໗. ເຈົ້າຄຳປຸບ້ານໃໝ່ ມີບຸດຍິງອົງຄ໌ດຽວຊື່ເຈົ້າສຸພັນທວໄລຍ໌.

໘. ເຈົ້າຄຳປານບ້ານວັດສົບ ມີບຸດຍິງອົງຄ໌ດຽວຊື່ເຈົ້າຄຳຊວງ.

໙. ໝ່ອມບົວໄຂບ້ານໂພນໄຊຍ໌ ມີບຸດຍິງຊື່ເຈົ້າສຸວັນນະນາຣີ ເຈົ້າອິນຄຳ ບຸດຊາຍຊື່ເຈົ້າສຸວັນນະຣາຊ.

໑໐. ໝ່ອມທີບ້ານວັດທາດ ມີບຸດຍິງຊື່ເຈົ້າສີສວັສດິ໌ ບຸດຊາຍຊື່ເຈົ້າຂັຕຕິຍະຣາຊ ເຈົ້າກິນດາວົງຄ໌ ແລະເຈົ້າສີຫານາທ.

໑໑. ໝ່ອມຄຳອ້ວນບ້ານຫົວໂພນ ມີບຸດຍິງຊື່ເຈົ້າທອວັຕຕ໌ ເຈົ້າກິນດາຣັສມີ ບຸດຊາຍຊື່ເຈົ້າສຸພານຸວົງຄ໌.

24/VII

ຫ້າມຈຳໜ່າຍ

ບົທທີ ໑

ກ. ເຈົ້າສມຸທຊາຍຄຳ ເອົາອາເປັນເມັຽຊື່ເຈົ້າແພງມາສ ມີລູກໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊສຸວັຕຕະຍຼິທມາ ບົທທີ່໑໒ ໝວດ ໗ ນັ້ນແລ້ວ. ປະເຈົ້າແພງມາສໄປເອົາເຈົ້າຈິນຄຳລູກເຈົ້າວົງກິຕແລະເຈົ້າຣັຕນະວະດີ ມີລູກໄດ້ກ່າວໄວ້ໃນສກຸລ ເຈົ້າອຸປຣາຊສຸວັຕຕະຍຼິທມາ ບົທທີ ໑ ໝວດ ໗ ເລຂ ໔ ຕອນນັ້ນແລ້ວ. ເຈົ້າສມຸທຊາຍຄຳ ໄດ້ສເດັຈໄປສຶກສາວິຊາທີ່ໂຮງຮຽນນາຍຮ້ອຍທະຫານບັງກອກເຫີຍ. ບາງຍັ້ງເປັນອຸປທູດຫົວໜ້າສານລາວເມືອງທ່າແຂກ ສິ້ນພຼະຊົນມ໌ເສັຽທີ່ນັ້ນ ວັນປະຫັສເດືອນ ໑໒ ແຮມ ໙ ຄ່ຳ ປີເຖົ້າ ຈ.ສ. ໑໒໘໙ ຕົງວັນທີ ໑໗ ໂນວອນ ໑໙໒

ບົທທີ ໑

ກ. ເຈົ້າຄິຕຣາຊ. ເອົານ້ອງສາວຕ່າງທ້ອງເປັນເມັຽຊື່ ເຈົ້າສຸວັຕຕະນາຣີ ມີລູກຍິງຊື່ເຈົ້າຄຳປິ່ນເຈົ້າຄຳປຸ່ງ ລູກຊາຍຊື່ເຈົ້າຄຳຫາຍ. ເມັຽຕາຍປະແລ້ວ ໄປເອົາເຈົ້າເສົາສຸຣິຈັນທຣ໌ ນ້ອງສາວຕ່າງທ້ອງເປັນເມັຽ ບໍ່ມີລູກ. ເຈົ້າຄິຕຣາຊເກີດເມືອງພິຈິຕປະເທສໄທຍ໌ ໄດ້ສເດັຈໄປສຶກສາວິຊາທີ່ໂຮງຮຽນໂກໂລນິຍານ (Ecole Coloniale) ກຸງປາຣິສ (Paris) ປະເທສຝຼັ່ງເສສ ເມືອງເຈີເນວ໌ (Genève) ປະເທສສວິສ ແລະເມືອງແຈນ໌ (Gênes) ປະເທສອີຕາລີ ອອກມາເປັນສມຽນຢູ່ສາລາຍຸຕິທັມມ໌ເມືອງຫຼວງພຼະບາງ- ເປັນຄູສອນໂຮງຮຽນປະຖົມສຶກສາ ແລະໂຮງຮຽນພຼະເມືອງຫຼວງພຼະບາງ ເປັນລ່າມເຈົ້າມະຫາອຸປຣາຊບຸນຄົງ ໄປເຂົ້າກອງປະຊຸມຣັຖບາລອິນດູຈີນເມືອງຮາໂນຍ- ຕາງເຈົ້າມະຫາອຸປຣາຊບຸນຄົງ ໄປເຂົ້າກອງປະຊຸມຣັຖບາລອິນດູຈີນເມືອງຮາໂນຍ- ໄປຊ່ວຍທ່ານຟີໂນຕ໌ (M. Finot) ຫົວໜ້າໂຮງຮຽນນັກປາຊ໌ຝຼັ່ງເສສຝ່າຍບູລະພາປະເທສເມືອງຮາໂນຍ- ໄດ້ຮັບຕຼາສມາຄົມນັກປາຊ໌ຝຼັ່ງເສສ (Palme Académique) ໄປຢ້ຽມຫໍສມຸດວະຊິຣະຍານກຸງເທພ. ໄປເປັນຜູ້ຮອງອະທິບໍດີກະຊວງປົກຄອງຣາຊການລາວເມືອງວຽງຈັນທນ໌ ບັງເກີດທຸພພລກາຍ ອອກບວຊເປັນສາມເນຣຢູ່ວັດສີສະເກສ ສິ້ນ-

ພຣະຊົນມ໌ ວັນພຸດເດືອນ ໗ ຂຶ້ນ ໑໔ ຄ່ຳ ປີສີ ຈ.ສ. ໑໒໙໐ ຕຼົງວັນທີ ໒ ເມ ໑໙໒໘.

໑. ເຈົ້າຄຳປິ່ນ ເກີດວິກາລຈິຕເຖິງແກ່ກັມມ໌ ວັນພຸດເດືອນ ໑໑ ຂຶ້ນ ໑໔ ຄ່ຳ ປີເສັດ ຈ.ສ. ໑໓໐໘ ຕຼົງວັນທີ ໙ ອັກໂຕບ ໑໙໔໗.

໒. ເຈົ້າຄຳປ່ຽງ ເອົາເມັຽຊື່ເຈົ້າຄຳຕັນ ບຸຕເຈົ້າຣາຊສັມພັນທະວົງສ໌ ຊີວເລີບສັກດ໌ ແລະເຈົ້າສ່ວຄຳ ມີລູກຊາຍຊື່ເຈົ້າສຸດສະລາທ ເຈົ້າສຸບັນທະວົງສີ ເຈົ້າສຸວັຕຕະກາວົງສ໌ ເຈົ້າສຸວັຕຕະອັຕຕະ ລູກຍິງຊື່ເຈົ້ານະຕີຈັນທຣ໌. ເຈົ້າຄຳປ່ຽງໄດ້ໄປສຶກສາວິຊາທີ່ໂຮງຮຽນຊັ້ນສູງສັຕທີ່ຝຣັ່ງເສສ ເມືອງໄຊງ່ອນ ເປັນຄູສອນ.

໓. ເຈົ້າຄຳຜາຍ ເອົາເມັຽຊື່ເຈົ້າຄຳຜອງລູກເຈົ້າຄຳໝັ້ນ ແລະ ໝ່ອມພູນມີ ມີລູກໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊສຸວັຕຕະເຊີຫາມ ບົທທີ ໑ ໝວດ ໒ ເລກ ໑ ຕົວ ສ ນັ້ນແລ້ວ.

ເຈົ້າຄຳຜາຍໄດ້ໄປສຶກສາວິຊາແພທຍ໌ສວຕ (Assistance Médicine Sociale) ທີ່ເມືອງໄຊ່ງ່ອນ ເປັນແພທຍ໌ສາລະວັຕໃນຂະບວນ ປຣະເທສລາວອິສສຣະໜີໄປເມືອງໄທຍ໌.

໔. ເຈົ້າເພັຊຣາຊ ເອົາເມັຽຊື່ເຈົ້າຄຳແວ່ນ ພຣະຣາຊທິດາສົມເດັຈພຣະເຈົ້າສັກກະຣິນ ໆ ແລະເຈົ້າໜູຄີນ ມີບຸຕຍິງຊື່ເຈົ້າຄຳຜົວ ເຈົ້າຄຳຈັນທຣ໌ ບຸຕຊາຍຊື່ເຈົ້າສຸຣິຍະຣາຊ ໝ່ອມນາງສີເມືອງຊຽງ ຈັນທນ໌ ມີບຸຕຍິງຊື່ເຈົ້າອະຣຸນາ ເພັຊຣາຊ ບຸຕຊາຍຊື່ເຈົ້າອຸ່ນແກ້ວ ເພັຊຣາຊ.

ເຈົ້າເພັຊຣາຊ ໄດ້ສເດັຈໄປສຶກສາວິຊາທີ່ໂຮງຮຽນໂກໂລນີຢານ ແລະວິທຍາມົງໄຕຍ໌ (Lycée Montaigne) ກຸງປາຣີສປຣະເທສຝຣັ່ງເສສ ແລະເມືອງບຣິກຕັນ (Brighton) ປຣະເທສອັງກິດ ອອກມາເປັນຜູ້ແຕ່ງໜັງສືຢູ່ພຣະຄັງມະຫາສົມບັຕິ ໄດ້ຮັບພຣະຣາຊທານບັນດາສັກດ໌ ເປັນເຈົ້າຣາຊກາຄີໄນຍ໌ ເປັນສາລະວັຕປຣະສາສໂນບາຍແລະຣາຊການພື້ນເມືອງປຣະເທສລາວຢູ່ເມືອງວຽງຈັນທນ໌ ໄດ້ຮັບຫຼຽນວິສະມາກອຕ໌ຝຣັ່ງເສສເລຊົງດົນເນີຣ໌ຊັ້ນ ໓ ມົງກຸຕພຣະເຈົ້າເລໂອໂປລດ໌ ອານາຈັກຣ໌ເບັນຊິກ ໆລໆ. ໄດ້ຮັບພຣະຣາຊທານບັນດາສັກດ໌ເປັນເຈົ້າມະຫາອຸປຣາຊແລະສວຍສະໜາຍລ້ານຊ້າງຮົ່ມຂາວສູງສຸດ ຕາມພຣະຣາຊສັນຍາ (Traité) ສບັບລົງວັນທີ ໒໙ ອຸຕ ໑໙໔໑. ຂນະນັ້ນເມືອງຍຸ່ນເປັງ ສເດັຈໄປຈັດຣາຊການຢູ່ເມືອງວຽງຈັນທນ໌ ອານາຈັກຣ໌ ດີການ

ຈະກູ້ຊາຕິໃຫ້ປຼະເທສລາວເປັນອິສສຣະພາບ ເລີຍຖືກຫາວ່າເປັນກະບົດ ແລ້ວກໍຖືກຖອດຍົສແລະບັດຕຳແໜ່ງອັຄຄະມະຫາເສນາ ຕາມພຼະຣາຊໂອງການລົງວັນທີ ໑໐ ອົກໂຕບ ໑໙໔໕ ຫຼືວັນພຸດ ເດືອນ ໑໑ ຂຶ້ນ ໔ ຄ່ຳ ປີເຮົ້າ ຈ.ສ. ໑໓໐໗ ຄັນເຖິງພະວັນສຸກ ເດືອນ ໖ ຂຶ້ນ ໓ ຄ່ຳ ປີເສັດ ຈ.ສ. ໑໓໐໘ ຫຼືວັນທີ ໓ ເມ ໑໙໔໖ ເວລາຢ່ຳຄ່ຳກໍສເດັດໜີໄປເມືອງໄທຍ໌ ມີເຈົ້າຄຳທັນ ແລະເຈົ້າຄຳຍາຍຫຼານຊາຍເປົ່າຕາມສເດັດ, ເຄື່ອງບິນຝຼັ່ງເສສ ໑ ເຄື່ອງນຳໄປຊອກສັງຫານຜານຊີວິດພຼະອົງຄ໌ຮອດບ້ານເມືອນາຜາງ, ວັນຈັນທຣ໌ຂຶ້ນ ໖ ຄ່ຳເວລາທ່ຽງວັນ ເລີຍບໍ່ສົມຫວັງ. ພຼະອົງຄ໌ໄດ້ຫຼືຈັດຕັ້ງຣັຖບາລລາວອິສສຣະຢູ່ທີ່ກຸງເທພ ສຳຫຼັບຕໍ່ສູ້ກູ້ເອົາປຼະເທສຊາຕິ ຂໍໃຫ້ສົມດັ່ງຄວາມມຸ່ງມາດປຼາຖນາຢ່າງແຮງກ້າຂອງພຼະອົງຄ໌ ແລະຫຼືພຼະຈເຣີນສຳຣານສຸຂສວັສດີທຸກເວລາເທີ້ນ.

໑. ເຈົ້າຄຳເຜືອ ເອົາຜົວຊື່ເຈົ້າສົມສນິທ ບໍ່ມີລູກ ໄດ້ກ່າວໄວ້ໃນສກຸລເຈົ້າມຫາອຸປຣາຊສຸວັຓຓະພູມາ ບົດທີ ໑ ໝວດ ຈ ເລກ ໑ ຫົວ ກ ນັ້ນແລ້ວ. ເຈົ້າຄຳເຜືອໄດ້ໄປສຶກສາວິຊາທີ່ກຸງປາຣີສປຼະເທສຝຼັ່ງເສສ ສິ້ນພຼະຊົນຢູ່ທີ່ວຽງຈັນທນ໌ ວັນພຸດເດືອນ ໑໒ ຂຶ້ນ ໑໓ ຄ່ຳ ປີມົດ ຈ.ສ. ໑໓໐໕ ຫຼືວັນທີ ໑໐ ໂນວອມ ໑໙໔໓ ດ້ວຍວັຓຓະໂຣຄ.

໒. ເຈົ້າຄຳຈັນທຣ໌ ໄດ້ໄປສຶກສາວິຊາທີ່ໂຮງຮຽນສັທິຊັ້ນສູງຝຼັ່ງເສສເມືອງຮາໂນຍ ເອົາຜົວຝຼັ່ງຊື່ຮິບໂປລີຕບາສຕີເຢ (Hippolyte Bastier) ຜົວຕາຍປະແລ້ວ ໄປເອົາມອງຊິເອີຣ໌ປາຣີໂຊດ (Mr: Parisot) ຢູ່ເມືອງຝຼັ່ງເສສ.

໓. ເຈົ້າສຸຣິຍະຣາຊ ເອົາເມັຽຊື່ນາງສີພອງ ລູກມະຫາເກົ້າເມືອງວຽງຈັນທນ໌ ມີລູກຊາຍຊື່ເຈົ້າສຸຣິຍະວົງສາ. ເຈົ້າຣິຍະຣາຊໄດ້ໄປສຶກສາວິຊາເມືອງໄຊ່ງ່ອນ ເປັນນາຍທະຫານຕ່າງດ້າວຝຼັ່ງເປັນນາຍທະຫານລາວອິສສຣະ ໜີໄປເມືອງໄທຍ໌.

໔. ເຈົ້າອະຣຸນນາເພັຊຣາຊ ຍັງຫຼືຈເຣີນໄວຍ໌.

໕. ເຈົ້າອຸນແກ້ວເພັຊຣາຊ ຍັງຫຼືຈເຣີນໄວຍ໌.

໗. ເຈົ້າສຸວັຓຓະພາລິນ. ເອົາເມັຽຊື່ເຈົ້າສະລີທອນ ລູກເຈົ້າພິມສານ ແລະໝ່ອມອ້ນ ມີລູກ ໓ ຄົນຕາຍໝົດ. ເຈົ້າສຸວັຓຓະພາລິນ ໄດ້ສະເດັດໄປສຶກສາວິຊາທີ່ໂຮງຮຽນເມືອງຊາງວິລເລີບີງ

(Joinville le Pont) ປຣະເທສຝຣັ່ງເສສ. ເປັນເຈົ້າແຂວງຫລວງພຣະບາງ ແລ້ວເປັນຫົວໜ້າສາຂາ ຊັ້ນ ໒ ຣາຊກາຣສົ່ງໄປສືບເຫຕຸເມື້ອຣະບິດກາຍເມືອງນານ ແລ້ວສິ້ນພຣະຊົນມ໌ເສັຽທີ່ນັ້ນ ວັນພຸທ ເດືອນ ໓ ຂຶ້ນ ໑໒ ຄ່ຳ ປີເສັດ ຈ.ສ. ໑໓໐໘ ຫຼືວັນທີ ໑໓ ເຟວຣີເຍ ໑໙໔໖ ໄດ້ນຳເອົາສົພມາປົງເມືອງຫລວງພຣະບາງ.

໗. ເຈົ້າສຸວັຕຕະພຣິທານາ. ເອົານາງຊາດຝຣັ່ງເປັນເມັຽຊື່ ອາລີນ ອັນລາ (Aline Allard) ເຈົ້າສຸວັຕຕະພຣິທານາໄດ້ສະເດັດໄປສຶກສາວິຊາທີ່ ໂຮງຮຽນເມືອງເກີໂນບລ (Grenoble) ປຣະເທສຝຣັ່ງເສສ ເສັ່ງໄດ້ປຣະກາສນີຍະບັຕ ຊ່າງຖຽນແບບກໍ່ສ້າງ, ຊ່າງໄຟຟ້າ, ແລະ ອິນເຊນີເຢີຊ່າງກົລຝ່າຍໂຍທາ. ເປັນຫົວໜ້າໂຍທາເທສບານເມືອງຫຼວງພຣະບາງ ໄດ້ຮັບພຣະຣາຊທານເປັນຊາສັກດິ໌ເປັນເຈົ້າພູມມາ ເປັນອັກຄມົນຕຣີກະຊວງໂຍທາທິການສມັຍປຣະເທສລາວອິສສຣະ ໜີໄປເມືອງໄທຍ໌.

໘. ເຈົ້າສ່າງຄຳ. ເອົາເມັຽຊື່ເຈົ້າສີສເລີນສັກດ໌ ເປັນຣາຊບຸຕຣີຂອງພຣະເຈົ້າສັກກະຣິນ ໆ ແລະໝ່ອມນເຢັງ ມີລູກຍິງຊື່ເຈົ້າວິມົນຣັສມີ ລູກຊາຍຊື່ເຈົ້າຄຳທັນ ເຈົ້າສີສຸພັງ. ເຈົ້າສ່າງຄຳສິ້ນພຣະຊົນມ໌ດ້ວຍຄລອດບຸຕ ນ້ອງບໍ່ທັນ ວັນຈັນທຣ໌ ເດືອນ ໙ ແຮມ ໙ ຄ່ຳ ປີມົດ ຈ.ສ. ໑໒໘໑ ຫຼືວັນທີ ໙ ອຸຕ ໑໙໑໙ ທີ່ໂຮງບ້ານວັດທາຕຸ.

໑. ເຈົ້າວິມົນຣັສມີ ຍັງເປັນຍິງໂສດ.

໒. ເຈົ້າຄຳທັນ ເອົາເມັຽຊື່ເຈົ້າຄຳປຸ່ນ ລູກເຈົ້າຈິທຣາຊແລະເຈົ້າສຸວັຕຕະນາສີ ມີລູກໄດ້ກ່າວໄວ້ບັນຊີ ໝວດ ກ ເລກ ໒ ນັ້ນແລ້ວ. ເຈົ້າຄຳທັນ ໄດ້ໄປສຶກສາວິຊາທີ່ວິທຍາໄລຍ໌ ອັນແບຣ໌ສາໂຣ (Lycée Albert Sarraut) ເມືອງຮາໂນຍ ເປັນເຈົ້າເມືອງ ໆ ຫຼວງພຣະບາງ ໃນສມັຍປຣະເທສລາວອິສສຣະ ໜີໄປເມືອງໄທຍ໌.

໓. ເຈົ້າສີສຸພັງ ເອົາເມັຽຊື່ເຈົ້າດວງຄຳ ລູກເຈົ້າຣາຊາວະຕີແລະເຈົ້າດວງຈັນທຣ໌ ມີລູກໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊສຸວັຕຕະພຣິທານາ ບົດທີ່ ໑ ໝວດ ຂ ເລກ ໒ ຫົວ ຂ ນັ້ນແລ້ວ. ເຈົ້າສີສຸພັງໄດ້ໄປສຶກສາວິຊາແພທຍ໌ສາຕຣທີ່ເມືອງໄຊ່ງ່ອນ. ອອກມາເປັນແພທຍ໌ສາລະວັຕໃນ ສມັຍປຣະເທສລາວອິສສຣະ ໜີໄປເມືອງໄທຍ໌.

໙. ເຈົ້າສ່ຽນຄຳ. ເອົາເມັຽຊື່ເຈົ້າຄຳໝັ້ນ ລູກເຈົ້າອົງກິຕ

ແລະເຈົ້າຣັຕນະອະດີ ມີລູກຊາຍດຽວໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊສຸວັນນະພູມາ ບົດທີ ໑ ໝວດ ຂ ເລຂ ໑ ທີ ກ ນັ້ນແລ້ວ. ປະຜົວແລ້ວໄປເອົາພີ່ອ້າຍຕ່າງທ້ອງເປັນຜົວຊື່ເຈົ້າສຸວັນນະຣາຊ ມີລູກຍິງຊື່ເຈົ້າຄຳເພັງ ເຈົ້າຄຳປິວ ລູກຊາຍຊື່ເຈົ້າສຸວັນນະຣັຕນະ ເຈົ້າໂອກຣາຊ.

໑. ເຈົ້າຄຳເພັງ ເອົາຜົວຊື່ເຈົ້າຄຳປານ ພຣະຣາຊບຸຕສິນຕັຄພຣະເຈົ້າສີສວ່າງວົງສ໌ ແລະໝ່ອມຄຳຫຼ້າ ຖຶງແກ່ກັມມ໌ດ້ວຍຄລອດບຸຕ ນ້ອງບໍ່ທັກ ວັນຈັນທຣ໌ເດືອນ ໙ ແຮມ ໕ ຄ່ຳ ປີເໝົ້າ ຈ.ສ. ໑໓໐໑ ຕຼງວັນທີ ໔ ເສັບຕອມ ໑໙໓໙.

໒. ເຈົ້າຄຳປິວ ເອົາພີ່ອ້າຍເຂີຍເປັນຜົວ ມີລູກຊາຍຊື່ເຈົ້າໄຊຍ໌ຊຸມພະປັລລາ ເຈົ້າສຸວັນນະປັລລາ.

໓. ເຈົ້າສຸວັນນະຣັຕນະ ຕົກນ້ຳຂອງຕາຍທ່າເດື່ອ ວັນອາທິຕຍ໌ເດືອນ ໗ ເພັງ ປີໄຄ້ ຈ.ສ. ໑໒໙໗ ຕຼງວັນທີ ໑໖ ຊວງ ໑໙໓໕.

໔. ເຈົ້າໂອກຣາຊ ຍັງເປັນຢູ່.

໕. ເຈົ້າຄຳຫຼ້າ. ເອົາຜົວຊື່ເຈົ້າຄຳມ້າວ ພຣະຣາຊບຸຕສິນຕັຄພຣະເຈົ້າສີສວ່າງວົງສ໌ ແລະໝ່ອມຄຳເຜືອ ມີລູກຍິງຊື່ເຈົ້າອະນຸໄລຍ໌ຄຳມ້າວ ລູກຊາຍຊື່ເຈົ້າອະນຸໄລຍ໌ຄຳຫຼ້າ. ເຈົ້າຄຳຫຼ້າ ໄດ້ໄປສຶກສາວິຊາທີ່ໂຮງຮຽນຊັ້ນສູງສັຕຣີຝຣັ່ງເສສເມືອງຫາໂນຍ ອອກມາເປັນອາຈາຣຍ໌ໂຮງຮຽນສັຕຣີເມືອງຫຼວງພຣະບາງ.

ບົດທີ ໓.

ກ. ເຈົ້າເສງສຸທິຈັນທຣ໌ ເອົາຜົວຊື່ເຈົ້າຄຳຮຽງ. ເຈົ້າເພັງ ແລະເຈົ້າສິທຣາຊ ບໍ່ມີລູກ ໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊສຸວັນນະພູມາ ບົດທີ ໑໒ ໝວດ ຂ ເລຂ ໑ ນັ້ນແລ້ວ.

ບົດທີ ໔

ກ. ເຈົ້າຈັນທາ ເອົາອາວເປັນຜົວ ຊື່ເຈົ້າບຸນລະສາຣ ໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊຊຸ່ມເກົ້າ ບົດທີ ໒ ໝວດ ກ ເລຂ ໕ ແລະໃນສະກຸລເຈົ້າອຸປຣາຊສຸວັນນະພູມາ ບົດທີ ໘ ໝວດ ຄ. ເລຂ ໑

ນັ້ນແລ້ວ.

ຂ. **ເຈົ້າຂັຕຕິຍະວົງສ໌** ສິ້ນພຣະຊົນມ໌ທີ່ເມືອງຫາໂນຍ ໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊສຸວັນນະພຸມມາ ບິດທີ ໘ ໝວດ ໑ ເລກ 6 ນັ້ນແລ້ວ.

ບິດທີ ໕

ເຈົ້າຄັນທະຣາສີ ບໍ່ມີລູກຈັກອົງຄ໌

ບິດທີ ໖

ກ. **ເຈົ້າພິສມັຍ** ເອົາຜົວຊື່ເຈົ້າສີສວັສດິ໌ ລູກເຈົ້າຣາຊວົງວັຕ ແລະເຈົ້າສມຸທສາຄອນ ໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊຮຸ່ນເກົ້າ ບິດທີ ໕ ໝວດ ກ ເລກ ໕ ຕົວ ກ ກັບບໍ່ມີໝາຍ ແລະໃນສະກຸລ ເຈົ້າອຸປຣາຊສຸວັນນະພຸມມາ ບິດທີ ໗ ໝວດ ຊ ນັ້ນແລ້ວ.

ບິດທີ ໗

ກ. **ເຈົ້າສຸພັນທວໄລຍ໌** ສິ້ນພຣະຊົນມ໌ແຕ່ເປັນສາວ ໄດ້ກ່າວໄວ້ໃນສກຸລເຈົ້າອຸປຣາຊຮຸ່ນເກົ້າ ບິດທີ ໑ ໝວດ ກ ເລກ 6 ຕົວກ ນັ້ນແລ້ວ.

ບິດທີ ໘

ກ. **ເຈົ້າຄຳຊາວ** ເອົາຜົວຊື່ເຈົ້າຍຸຍ ລູກເຈົ້າສຸທາ ແລະໝ່ອມ ດິວ ມີລູກຊາຍຊື່ເຈົ້າທາວາດ ລູກຍິງຊື່ເຈົ້າເພັງ. ໃນສມັຍປະເທສລາວອິສສຣະ ໜີໄປນຳຜົວເມືອງໄທຍ໌.

ບິດທີ ໙.

ກ. **ເຈົ້າສຸວັນນະນາຣີ** ເອົາພີ່ຕ້າຍຕ່າງຫ້ອງເປັນຜົວຊື່ເຈົ້າອິທຣາຊ ມີລູກໄດ້ກ່າວໄວ້ບິດທີ 6 ໝວດ ກ ເລກ ໑ ເຖິງ ໙ ນັ້ນແລ້ວ.

ເຈົ້າສຸວັຕຕະນາຣີ ໄດ້ໄປນຳສາມີຂອງເມືອງໂຂງ ແຂວງສຕຶງເມືອງ ທີ່ຕົກໃສ່ເມືອງໄທຍ໌ ສິ້ນພຣະຊົນມ໌ເດືອນ ໑໐ ປີສັນ ຄ.ສ. ໑໙໒໐ ຫຼືເດືອນເສັບຕອມ ໑໙໒໐ ທີ່ໂຮງຂອງທ່ານຄຸ້ນວັງໜ້າ.

ຄ. ເຈົ້າອິນຄຳ. ເອີ້ນຜົວຊື່ເຈົ້າສຸວັຕຕາທອງ ໄດ້ກ່າວໄວ້ ໃນສກຸລເຈົ້າອຸປຮາຊສຸວັຕຕາຫຼູມານາ ບົດທີ ໕ ໝວດ ໒ ເລຂ ໑ ຄົວ ກ ນັ້ນແລ້ວ.

ງ. ເຈົ້າສຸວັຕຕະຣາຊ ເອົ້ານ້ອງສາວທ່າງທ້ອງເປັນເມັຽ ຊື່ເຈົ້າສຸ່ມຄຳ ມີລູກໄດ້ກ່າວໄວ້ບົດທີ 6 ໝວດ ສ໌ ເລຂ ໑ ເຖິງ ໔ ນັ້ນແລ້ວ. ມີລູກຊາຍຜູ້ດຽວຊື່ເຈົ້າເສງສຸວັຕຕ໌ ນຳໝ່ອນ ຜອງເມັຽນັ້ນ ລູກເມັຽສຸຂ: ວາຣຍ໌ອ້ວນ ແລະນາງເພັຍເພັຍບ້ວນ ໃຫ່ຍ. ເຈົ້າສຸວັຕຕະຣາຊໄດ້ສະເດັດໄປສຶກສາວິຊາ ທີ່ໂຮງຮຽນເມືອງ ຊວງວິລເລີປົງ (Joinville le Pont) ປຣະເທສຝຣັ່ງເສສ ອອກມາເປັນຄູ ສອນໂຮງຮຽນເມືອງຫຼວງພຣະບາງ. ຄ.ສ. ໑໙໑໕-໑໙ ສເດັດເຂົ້າ ຮັບທຳຣາຊການກັບກອງທັພຝຣັ່ງເສສ ຊຶ່ງເປັນພັນເອກໂກໂລເນລ ຟຼິກເກັຍ (Colonel Friquegnon) ເປັນຜູ້ບັງຄັບບັນຊາ. ຄ.ສ. ໑໙໑໙-໒໐. ສະເດັດເຂົ້າຮັບເນື້ອຮອບກັບກອງທັພຝຣັ່ງເສສ ຊຶ່ງເປັນພັນເອກໂກໂລເນລ ອັງເຊລີ (Colonel Angélis) ເປັນຜູ້ບັງຄັບບັນຊາ. ໄດ້ຮັບພຣະຣາຊທານເປັນຍາສັກດ໌ ເປັນເຈົ້າກູ່ມເສງ ແລະຫຼວງອິດ ສຣິທທ໌ຝຣັ່ງເສສເລຊີອົງດອນເນີຣ໌ ຊັ້ນ ໕. ເປັນນາຍເຂວງປາກລາຍ, ສະນະເສນາຣາຊການລາວຂອງນາຈັກຫຼວງພຣະບາງ. ອະທິບໍດີກົມ ສັສດີໂພຣາ ພານິຊການ ແລະກົມນາຍທ່ານາຍຫຼວງ, ເສນາ-ບໍດີກະຊວງເສດຖະກິດ ແລະໂຍທາທິການອານາຈັກຫຼວງ-ພຣະບາງ, ນາຍົກຣັຖມົນຕີພຣະຣາຊອານາຈັກລາວ, ຊາວພຣະຊົນ ທີ່ປຶກສາພຣະເຈົ້າແຜ່ນດິນ.

ບົດທີ ໑໐

ກ ເຈົ້າສີສວັສດິ໌ ເອີ້ນຜົວຊື່ເຈົ້າຍວງພັນຕ໌ ກູ່ມທຳມາ ຊາວ ລູກເຈົ້າອຸ່ນຄຳແລະເຈົ້າແມ່ ບໍ່ມີລູກ ສິ້ນພຣະຊົນມ໌ວັນຈັນທ໌ ເດືອນ ໑໑ ຂຶ້ນ ໑໐ ຄ່ຳ ປີເປົ້າ ຈ.ສ. ໑໒໐໑ ຫຼືວັນທີ ໒ ເອັກ-ໂຕບ ໑໙໒໙ ທີ່ໂຮງປາກຊ່ອນກົກສັກ.

໖. ເຈົ້າສັຕຕິຍະຣາຊ ເອົາເມັຽຊື່ນາງທອງລາ ເມືອງວຽງຈັນທນ໌ ບໍ່ມີລູກ. ໄດ້ໄປສຶກສາວິຊາແພທຍ໌ສາຫຼເມືອງຫາໂນຍ ອອກມາເປັນແພທຍ໌ອິນດູຈີນແລ້ວ ໄປປະຈຳການຢູ່ເມືອງສວັຓຓະເຂຕຕ໌, ເມືອງວຽງຈັນທນ໌, ສິ້ນພຼະຊົນມ໌ວັນອາທິຕຍ໌ ເດືອນ ໔ ແຮມ ໕ ຄ່ຳ ປີສງ້າ ຈ.ສ. ໑໓໐໓ ຕຼົງວັນທີ ໕ ມາກສ໌ ໑໙໔໑.

໗. ເຈົ້າກິນດາວົງສ໌. ເອົານ້ອງສາວຕ່າງຫ້ອງເປັນເມັຽ ຊື່ເຈົ້າມາລີວັຓຕ໌ ມີລູກຊາຍຊື່ເຈົ້າວົງສ໌ຣັຕນາ ເປັນນາຍທະຫານຍາລລາວ, ເຈົ້າມະຕີວົງສ໌, ເຈົ້າສິນທານວົງສ໌, ເຈົ້າສີຈັນທະວົງສ໌ ລູກຍິງຊື່ເຈົ້າວົງສ໌ຄັສນີ, ເຈົ້າເສງສຸຣິວົງສ໌ ເຈົ້າສຸວັຓຓະມະລີວົງສ໌, ເຈົ້າວັທນາວົງສ໌. ມີລູກຍິງດວນນຳສາວແພງສີບ້ວນເມືອງຊຶ່ນ ຊື່ເຈົ້າສຸຂຕາຣາວົງສ໌. ເຈົ້າກິນດາວົງສ໌ ໄດ້ສເດັຈໄປສຶກສາວິຊາທີ່ໂຮງຮຽນທັກກັມມ໌ (Ecole mécaniciens asiatiques) ເມືອງໄຊງ່ອນ ອອກມາທຳຣາຊການຝ່າຍລາວ ໄປປະຈຳການຢູ່ເມືອງປາກລາຍ, ເມືອງໄຊຍະບູຣີ, ເມືອງງອຍ, ເມືອງພົງສະຫຼີ. ເປັນເຈົ້າເມືອງ ໆ ກາສີ ບ້ານເມືອງເສັຽໃຫ້ຍີ່ປຸ່ນ ຜູ້ໄດ້ເອົາໜີໄປນຳ ສອດເມືອງທ່າ ທ່າໄສ່ເມືອງເຊກາ ແຫກໄປເມືອງຊູ່ ກັບຄືນມາໄດ້ຮັບຍົສເປັນສັກ ໕ ເທົ່າກອງທັພບົກສະຫະພັນທ໌ຜູ້ເສຣ, ເປັນຣັຖມົນຕີວ່າການກະຊວງກຼົມນາແລະພານິຊການ, ໄດ້ຮັບຫຼຽນອິສສຣິຍາພອຣຕ໌ຜູ້ເສຣເຂັມດິນເນີຣ໌ຊັ້ນ ໕. ດຽວນີ້ ເປັນຜູ້ແທນ ແຂວງຫຼວງພຼະບາງ.

໘. ເຈົ້າສິງຫະນາທ. ເອົາເມັຽຊື່ນາງສຸຂເມືອງວຽງຈັນທນ໌ ມີລູກຊາຍຊື່ເຈົ້າສິງຫາຣາຊ ລູກຍິງຊື່ເຈົ້າມະຫາໄຊຍ໌ຣັຕນາ. ປະນາງສຸຂໄປເອົາເຈົ້າຊາວແລະເຈົ້າເມືອທັງສອງເອື້ອຍນ້ອງ ລູກເຈົ້າບົວແລະເຈົ້າພັນທ໌ບ້ານພັນຫຼວງ ມີລູກຊາຍນຳເມັຽຫຼວງ ຊື່ເຈົ້າສິງຫາຄົນ ເຈົ້າສິງຫາຣາຊ ລູກຍິງຊື່ເຈົ້າໂນລາຣັສມີ. ມີລູກຊາຍນຳເມັຽນ້ອຍຊື່ເຈົ້າສິງຫານາດ ລູກຍິງຊື່ເຈົ້າສີສວັສດີ. ເມັຽຫຼວງຫ່າງປະ ເມັຽນ້ອຍໜີລາກ ໄປເອົາເຈົ້ານວລລະສີ ບ້ານຊ່າງຫົວ ມີລູກຊາຍຊື່ເຈົ້າສິງຫາຄຳ ລູກຍິງຊື່ເຈົ້າສີນວນຈັນທຣ໌. ເຈົ້າສິງຫະນາທ ໄດ້ໄປສຶກສາວິຊາທີ່ໂຮງຮຽນມັທຍົມໂປຼເຕັກໂຕຣາ (Collège Protectorat) ເມືອງຫາໂນຍ ເປັນຄູສອນ ຖືກຫາເປັນອິສສຣະ ຜູ້ຈັບເອົາເຈົ້າເຄື່ອງບິນໄປຊ່າໄສ້

ຫລວງເມືອງວຽງຈັນທນ໌ ສິ້ນພຼະຊົນມ໌ວັນສຸກ ເດືອນ ໕-໕ ຂຶ້ນ ໕ ຄ່ຳ ປີເມີງໃຄ້ ຈ.ສ. ໑໓໐໙ ຕົງວັນທີ ໒໕ ຊຸຍເຍ ໑໙໔໗.

໑. ເຈົ້າມະຫາໄຊຍ໌ຣັຕນາ ເອົາຜົວຊື່ເຈົ້າສິງຫ໌ສົມພາ ໄດ້ກ່າວໄວ້ໃນສກຸລເຈົ້າອຸປຮາຊສຸວັຕາຣະພູມິຫນາ ບົທທີ ໑ ຫມວດ ໑ ເລກ ໒ ຫົວ ກ ນັ້ນແລ້ວ.

ບົທທີ ໑໑.

ກ. ເຈົ້າຫາວິວັຕາຕ໌ ເອົາພີ່ອ້າຍຕ່າງຫ້ອງເປັນຜົວ ຊື່ເຈົ້າກິນດາວົງສ໌ ໄດ້ກ່າວໄວ້ບົທທີ ໑໐ ຫມວດ ໗ ນັ້ນແລ້ວ.

ຂ. ເຈົ້າຈິນດາຣັສມີ ເອົາຜົວຊື່ເຈົ້າລັງສີ ລູກເຈົ້າຣາຊສັມພັນທະວົງສ໌ພາສຸກ ແລະເຈົ້າເຮືອງຄຳ ມີລູກຊາຍຊື່ເຈົ້າສີສຸພັນທ໌ ເຈົ້າສຸວັຕາຣະບໍ່ ເຈົ້າສີຫາຣາຊ ລູກຍິງຊື່ເຈົ້າສຸດາຈັນທຣ໌ ເຈົ້າສວັຕາຣະນາຣີ ເຈົ້າວິມົນຣັສມີ ເຈົ້າສີຣັສມີ. ເຈົ້າລັງສີເປັນເຈົ້າເມືອງໆປາກເຊ ຖືກຫາວ່າເປັນອິສສຣະ ຝຣັ່ງຈັບເອົາຂຶ້ນເຄື່ອງບິນ ໄປຂັງໄວ້ຫລວງເມືອງວຽງຈັນທນ໌ ເຖິງແກ່ອະນິຈກັມມ໌ ວັນເສົາ໌ເດືອນ ໗ ແຮມ ໔ ຄ່ຳ ປີເມີງໃຄ້ ຈ.ສ. ໑໓໐໙. ຕົງວັນທີ ໗ ຊຸຍ ໑໙໔໗.

ຄ. ເຈົ້າສຸພານຸວົງສ໌. ເອົານາງແກວເປັນເມັຍຊື່ງວນ ທີກີນານ (Nguyên Thi Knam) ເຈົ້າສຸພານຸວົງສ໌ໄດ້ສເດັຈໄປສຶກສາວິຊາທີ່ປຣະເທສຝຣັ່ງເສສ ເຊີ່ງໄດ້ປະກາສນີຍະບັຕ ຈາກໂຮງຮຽນຄມະນາຄົມທີ່ກຸງປາຣີສ (Ecole nationale des Ponts et chaussées) ເປັນອັງເຊເຍີຣ໌ຊ່າງກົລຝ່າຍໂຍທາ ຢູ່ເມືອງນາຕຣາງ ປຣະເທສແກວກາງ. ບ້ານເມືອງປ່ຽນແປງໄດ້ສເດັຈມາຊ່ວຍຊາຕິ ເປັນຣັຖມົນຕຼີວ່າການກະຊວງການຕ່າງປຣະເທສ ແລະເປັນຜູ້ບັງຄັບບັນຊາການທະຫານສູງສຸດ ປຣະເທສລາວອິສສຣະ ຄຸມທະຫານລາວ-ວຽດ (ລາວແລະແກວ) ຕໍ່ສູ້ກອງທັພຝຣັ່ງເສສ ທີ່ເມືອງທ່າແຂກແຂວງຄຳມ່ວນ ເສັຽທີຫນີໄປເມືອງໄທຍ໌.

ເຊີນ ເຍີ ຂໍເຊີນເຈົ້າພີ່ນ້ອງ ເຫຼົ່າວົງສ໌ວາຣ ນີເຮີຍ,
ຂາຂໍຍໍປູະວັຕິກາຣຖວາຍ ຈົ່ງອ່ານດູໃຫ້ພໍເຈົ້າ.

ຂ້າບໍ່ໄດ້ເກົ້າເຄົ່າເຈົ້າ ໂລບລ່າຍພາງວົງສ໌ເຜົ່າໃດ,
ພົງສາວະດາຣນີ້ແຕ່ໂບຮາຕກາລ ທາກຖ່ວງລວມາໃຫ້ລອນຮູ້.

ໃຜຜູ້ມີບຸນແນ່ນ້ອງເມືອງສວັຣຄ໌ ເປັນທີ່ຢູ່ກໍດີທ້ອນ,
ໃຫ້ຫຼີກຸພຸສາພີ່ນ້ອງຢູ່ໃຕ້ເຫຼົ່າຫຼ້າ ຊິເຫງນທນ້ຳເຫິ່ງດາຍ.

ອັນວ່າພາຍທັນທ້ອງ ໂລກີຍ໌ໃນແຜ່ນດິນນີ້,
ໃຜບໍ່ມີຢູ່ໄດ້ ພໍ່ຮ້ອຍຂວບປີ ທ່ານເຮີຍ.

ຂໍໃຫ້ປົກປັກປ້ອງ ຮັກທ່ຽມກຸນອນກັນ ຂນ່ອນເຮີຍ,
ຂໍໃຫ້ເປັນພົງສ໌ພັນຖ໌ ສືບສກຸລເມືອໜ້າ.

ຖ້າວ່າຊີ້ຈົ່ງນ້ອຍ ປັດຈະຂັນຄ໌ດູ່ນຊີພ ໄປນັ້ນ,
ກໍໃຫ້ຍຸ້ງຊີ້ໄວ້ ເມືອງບ້ານເພີ່ມລ່າເຫຼົ່າ ເຈົ້າເຮີຍ.

24/VII
ห้ามจำหน่าย

ເທື່ອພົ